ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຍຸດທະສາດປ່າໄມ້ ຮອດປີ 2035 ແລະ ວິໄສທັດ ຮອດປີ 2050 ຂອງ ສປປ ລາວ

ຈັດພິມໂດຍ: ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້

ນະຄອນຫຼວງວຽງຈັນ, 2025

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ຍຸດທະສາດປ່າໄມ້ ຮອດປີ 2035 ແລະ ວິໄສທັດ ຮອດປີ 2050 ຂອງ ສປປ ລາວ

ນະຄອນຫຼວງວຽງຈັນ

ພຶດສະພາ 2024

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ ເລກທີ 302 /ນຍ
ນະຄອນຫຼວງວຽງຈັນ, ວັນທີ 19.06.2024

# ດຳລັດ
## ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້
## ຍຸດທະສາດ ປ່າໄມ້ ຮອດປີ 2035 ແລະ ວິໄສທັດ ຮອດປີ 2050.

- ອີງຕາມ ກົດໝາຍວ່າດ້ວຍ ລັດຖະບານ ເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍ ປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ມະຕິ ກອງປະຊຸມລັດຖະບານ ປະຈຳເດືອນ ພຶດສະພາ 2024, ສະບັບເລກທີ 06/ລບ, ລົງວັນທີ 28 ພຶດສະພາ 2024;
- ອີງຕາມ ບົດລາຍງານ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 2939/ກປ, ລົງວັນທີ 05 ມິຖຸນາ 2024.

## ນາຍົກລັດຖະມົນຕີ ອອກດຳລັດ:

**ມາດຕາ 1** ເຫັນດີຮັບຮອງ ແລະ ປະກາດໃຊ້ ຍຸດທະສາດປ່າໄມ້ ຮອດປີ 2035 ແລະ ວິໄສທັດ ຮອດປີ 2050.

**ມາດຕາ 2** ມອບໃຫ້ ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການປະສານສົມທົບກັບບັນດາ ກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງຜັນຂະຫຍາຍ ຍຸດທະສາດປ່າໄມ້ ຮອດປີ 2035 ແລະ ວິໄສທັດ ຮອດປີ 2050;

**ມາດຕາ 3** ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງທ້ອງຖິ່ນ ເປັນຜູ້ຈັດຕັ້ງປະຕິບັດ ດຳລັດສະບັບນີ້ຢ່າງເຂັ້ມງວດ.
ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ພ້ອມກັນຈັດຕັ້ງປະຕິບັດ ໃຫ້ໄດ້ຮັບຜົນເປັນຢ່າງດີ.

**ມາດຕາ 4 ຜົນສັກສິດ**
ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນໄດ້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ສອນໄຊ ສີພັນດອນ

ຄຳນຳ ........ iii
ພາກທີ I: ຕີລາຄາ ສະພາບການຈັດຕັ້ງປະຕິບັດ ຍຸດທະສາດປ່າໄມ້ ຮອດປີ 2020 ........ 1
1.1 ຜົນສຳເລັດຂອງ ການຈັດຕັ້ງປະຕິບັດ ........ 1
1.2 ປັດໄຈທີ່ພາໃຫ້ມີຜົນສຳເລັດ ........ 7
1.3 ຂໍ້ຄົງຄ້າງ ແລະ ສາເຫດ ........ 8
1.4 ບົດຮຽນທີ່ຖອດຖອນໄດ້ ........ 9
ພາກທີ II: ທິດນຳ, ວິໄສທັດ, ເປົ້າໝາຍ, ຄາດຄະເນຜົນໄດ້ຮັບ ແລະ ແຜນຍຸດທະສາດ ........ 11
2.1 ທິດນຳ ........ 11
2.2 ວິໄສທັດ ຮອດປີ 2050 ........ 12
2.3 ເປົ້າໝາຍລວມ ຮອດປີ 2035 ........ 12
2.4 ຄາດໝາຍສູ້ຊົນ ແລະ ຄາດຄະເນຜົນໄດ້ຮັບ ........ 12
2.5 ແຜນຍຸດທະສາດ ແລະ ແຜນວຽກຈຸດສຸມ ........ 13
ແຜນຍຸດທະສາດ I ຄຸ້ມຄອງ ແລະ ປົກປັກຮັກສາ ປ່າໄມ້ ........ 13
ແຜນວຽກຈຸດສຸມ 1.1 ຄຸ້ມຄອງ ແລະ ປົກປັກຮັກສາ ປ່າປ້ອງກັນ ........ 13
ແຜນວຽກຈຸດສຸມ 1.2 ຄຸ້ມຄອງ ແລະ ປົກປັກຮັກສາ ປ່າສະຫງວນ ........ 14
ແຜນວຽກຈຸດສຸມ 1.3 ຄຸ້ມຄອງ ແລະ ປົກປັກຮັກສາ ປ່າຜະລິດ ........ 14
ແຜນວຽກຈຸດສຸມ 1.4 ຄຸ້ມຄອງ ແລະ ປົກປັກຮັກສາ ຊີວະນານາພັນ, ພັນໄມ້, ພັນພືດ ແລະ ພັນສັດປ່າ ........ 15
ແຜນວຽກຈຸດສຸມ 1.5 ສະກັດກັ້ນ ແລະ ຕ້ານ ການບຸກລຸກ ແລະ ທຳລາຍ ປ່າໄມ້ ແລະ ທີ່ດິນປ່າໄມ້ ........ 15
ແຜນຍຸດທະສາດ II ປູກ ແລະ ຟື້ນຟູບູລະນະປ່າໄມ້ ........ 16
ແຜນວຽກຈຸດສຸມ 2.1 ສົ່ງເສີມປູກ ໄມ້ ແລະ ເຄື່ອງປ່າຂອງດົງ ........ 16
ແຜນວຽກຈຸດສຸມ 2.2 ຟື້ນຟູປ່າໄມ້ ເພື່ອສິ່ງແວດລ້ອມ ແລະ ຊີວະນານາພັນ ........ 17
ແຜນຍຸດທະສາດ III ນຳໃຊ້ ປ່າໄມ້ ແລະ ທີ່ດິນປ່າໄມ້ ........ 17
ແຜນວຽກຈຸດສຸມ 3.1 ອຸດສາຫະກຳ ການທ່ອງທ່ຽວແບບອະນຸລັກທຳມະຊາດ ........ 17
ແຜນວຽກຈຸດສຸມ 3.2 ການຊື້ ຂາຍສິນເຊື່ອກາກບອນປ່າໄມ້ ........ 17
ແຜນຍຸດທະສາດ IV ພັດທະນາອຸດສາຫະກຳປຸງແຕ່ງ ໄມ້ ແລະ ເຄື່ອງປ່າຂອງດົງ ........ 18
ແຜນວຽກຈຸດສຸມ 4.1 ພັດທະນາ ອຸດສາຫະກຳປຸງແຕ່ງໄມ້ ........ 18
ແຜນວຽກຈຸດສຸມ 4.2 ອຸດສາຫະກຳປຸງແຕ່ງເຄື່ອງປ່າຂອງດົງ ........ 19
ແຜນຍຸດທະສາດ V ພັດທະນາຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໃນເຂດປ່າໄມ້ ........ 19
ແຜນວຽກຈຸດສຸມ 5.1 ຈັດສັນ ເຂດທຳການຜະລິດໃຫ້ປະຊາຊົນບັນດາເຜົ່າ ໃນເຂດປ່າໄມ້ ........ 19
ແຜນວຽກຈຸດສູມ 5.2 ພັດທະນາອາຊີບ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ........ 19
ແຜນຍຸດທະສາດ VI ສ້າງຄວາມເຂັ້ມແຂງໃຫ້ຂະແໜງການ ........ 20

ແຜນວຽກຈຸດສຸມ 6.1 ການປັບປຸງກົງຈັກການຈັດຕັ້ງ ແລະ ພັດທະນາບຸກຄະລາກອນ ........................20
ແຜນວຽກຈຸດສຸມ 6.2 ສ້າງ ແລະ ປັບປຸງ ນະໂຍບາຍ ແລະ ນິຕິກຳ..............................................20
ແຜນວຽກຈຸດສຸມ 6.3 ຄົ້ນຄວ້າທົດລອງ ແລະ ຂໍ້ມູນຂ່າວສານ..................................................21
ແຜນວຽກຈຸດສຸມ 6.4 ກອງທຶນປົກປັກຮັກສາປ່າໄມ້ .............................................................21
ແຜນວຽກຈຸດສຸມ 6.5 ສົ່ງເສີມ ບົດບາດຍິງ-ຊາຍ ໃນຂະແໜງການປ່າໄມ້.....................................22
ແຜນຍຸດທະສາດ VII ການຮ່ວມມື ພາຍໃນ, ພາກພື້ນ ແລະ ສາກົນ.............................................22
ແຜນຍຸດທະສາດ VIII ງົບປະມານ ແລະ ແຫຼ່ງທຶນ..................................................................22
ພາກທີ III: ຫຼັກການ ແລະ ມາດຕະການ ຈັດຕັ້ງປະຕິບັດ................................................................22
3.1 ຫຼັກການໃນການຈັດຕັ້ງປະຕິບັດ..........................................................................................22
3.2 ມາດຕະການຈັດຕັ້ງປະຕິບັດ...............................................................................................23
3.2.1 ອົງການຈັດຕັ້ງ ແລະ ການປະສານງານ ...................................................................23
3.2.2 ນະໂຍບາຍ ແລະ ນິຕິກຳ ສະໜັບສະໜູນ.................................................................23
3.2.3 ການຕິດຕາມ ແລະ ປະເມີນຜົນ ............................................................................23
ເອກະສານຊ້ອນທ້າຍ 1: ກອບໃນການຈັດຕັ້ງປະຕິບັດ.......................................................................1

## ຄຳນຳ

ປ່າໄມ້ແມ່ນ ຊັບພະຍາກອນອັນລ້ຳຄ່າຂອງຊາດ, ມີບົດບາດສຳຄັນໃນການປົກປັກຮັກສາແຫຼ່ງນ້ຳ, ດູດຊຶມຊັບອາຍກາກໂບນິກ ຊຶ່ງເປັນສາເຫດຕົ້ນຕໍເຮັດໃຫ້ໂລກຮ້ອນ, ເປັນແຫຼ່ງກຳເນີດພັນພືດຊະນິດຕ່າງໆ ທີ່ມີຄວາມສຳຄັນຕໍ່ການດຳລົງຊີວິດຂອງປະຊາຊົນບັນດາເຜົ່າ, ເປັນຖິ່ນອາໄສຂອງສັດປ່ານາໆຊະນິດ, ປົກປັກຮັກສາລະບົບນິເວດ ແລະ ສິ່ງແວດລ້ອມໃຫ້ມີຄວາມສົມດູນ, ເປັນທ່າແຮງພື້ນຖານໃຫ້ແກ່ ການພັດທະນາເສດຖະກິດ-ສັງຄົມຂອງຊາດ. ຍ້ອນເຫັນໄດ້ຄວາມສຳຄັນດັ່ງກ່າວນັ້ນ ພັກ ແລະ ລັດຖະບານ, ອົງການປົກຄອງທ້ອງຖິ່ນ ຍາມໃດ ກໍ່ມີຄວາມເປັນຫ່ວງເປັນໄຍ ຕໍ່ວຽກງານປ່າໄມ້ ຈຶ່ງໄດ້ກຳນົດແນວທາງນະໂຍບາຍ, ອອກ ກົດໝາຍ, ມະຕິ, ຄຳສັ່ງ ແລະ ນິຕິກຳອື່ນໆ ໃນການຄຸ້ມຄອງ ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າໄມ້ ແລະ ທີ່ດິນປ່າໄມ້ ແນໃສ່ ຮັກສາທີ່ດິນປ່າໄມ້ ແລະ ເພີ່ມຄວາມປົກຫຸ້ມປ່າໄມ້ ກວມ 70% ຂອງເນື້ອທີ່ທົ່ວປະເທດ, ເຮັດໃຫ້ຊັບພະຍາກອນປ່າໄມ້ມີຄວາມອຸດົມສົມບູນ, ປົກປັກຮັກສາຄຸນນະພາບຂອງດິນ, ອາກາດ, ແຫຼ່ງນ້ຳ, ຊີວະນານາພັນ ຕາມທິດສີຂຽວ ແລະ ຍືນຍົງ ໂດຍໄດ້ກຳນົດ ຍຸດທະສາດປ່າໄມ້ ສະບັບທຳອິດ ໃນໄລຍະແຕ່ປີ 2005 ຮອດ 2020. ນອກຈາກນັ້ນ, ໄດ້ສ້າງລະບົບການ ຄຸ້ມຄອງ, ປົກປັກຮັກສາ, ປູກ ຫຼື ຟື້ນຟູ ແລະ ນຳໃຊ້ ປ່າໄມ້ ແລະ ທີ່ດິນປ່າໄມ້ ແບບຍືນຍົງ ໂດຍມີສ່ວນຮ່ວມຂອງປະຊາຊົນ ໃນເຂດປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ; ໄດ້ກຳນົດນະໂຍບາຍທີ່ຈະແຈ້ງ ໃນການປັບປຸງຊີວິດການເປັນຢູ່ຂອງປະຊາຊົນທີ່ອາໄສຢູ່ໃນ ເຂດປ່າໄມ້ ດ້ວຍການວາງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ ຕິດພັນກັບການຈັດສັນທີ່ດິນ, ມອບສິດການນຳໃຊ້ທີ່ດິນ ແລະ ປ່າໄມ້ ໃຫ້ອົງການປົກຄອງ ບ້ານ ແລະ ປະຊາຊົນບັນດາເຜົ່າ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ແບບຍືນຍົງ ພ້ອມທັງສົ່ງເສີມ ການຜະລິດ ແລະ ສ້າງເສດຖະກິດຄອບຄົວ ເປັນສິນຄ້າຮູບແບບຕ່າງໆ ທີ່ເໝາະສົມຕາມທ່າແຮງຂອງແຕ່ລະທ້ອງຖິ່ນ.

ໃນຊຸມປີຜ່ານມາ, ລັດຖະບານ, ອົງການປົກຄອງທ້ອງຖິ່ນ, ຄູ່ຮ່ວມພັດທະນາ ແລະ ປະຊາຊົນ ບັນດາເຜົ່າໄດ້ເອົາໃຈໃສ່ ຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ໃຫ້ມີຄວາມຍືນຍົງ, ປູກ ແລະ ຟື້ນຟູປ່າທີ່ຊຸດໂຊມ, ເຮັດໃຫ້ຄວາມປົກຫຸ້ມຂອງປ່າໄມ້ ເພີ່ມຈາກ 41,5% (9,8 ລ້ານເຮັກຕາ) ໃນປີ 2005 ມາເປັນ 62% (14,7 ລ້ານເຮັກຕາ) ໃນປີ 2020. ນອກຈາກນັ້ນ ປ່າໄມ້ ແລະ ທີ່ດິນປ່າໄມ້ ໃນຂອບເຂດທົ່ວປະເທດ ໄດ້ຫັນເຂົ້າສູ່ການຄຸ້ມຄອງຈັດສັນຢ່າງເປັນລະບົບ, ມີແບບແຜນການຄຸ້ມຄອງ ແລະ ກວດກາ ທີ່ ສອດຄ່ອງ, ເໝາະສົມ ແລະ ມີສ່ວນຮ່ວມ ຂອງປະຊາຊົນ ຕາມກົດໝາຍກຳນົດ ເປັນກ້າວໆມາ, ການຈັດສັນປ່າຜະລິດແບບຍືນຍົງ 51 ແຫ່ງ ສຳເລັດໂດຍພື້ນຖານ ພ້ອມທັງກຳນົດ ເນື້ອທີ່ປ່າຊຸດໂຊມ ແລະ ທີ່ດິນປ່າປອກໂຫຼ້ນ ຊຶ່ງເປັນຂໍ້ມູນ ໃນການສົ່ງເສີມການລົງທຶນ ປູກໄມ້ອຸດສາຫະກຳ ຕອບສະໜອງໃຫ້ໂຮງງານອຸດສາຫະກຳປຸງແຕ່ງໄມ້ພາຍໃນ ແລະ ທົດແທນການນຳເຂົ້າ ຈາກຕ່າງປະເທດ; ພ້ອມທັງສຳເລັດ ການຈັດປະ ເພດປ່າສະຫງວນ ທີ່ມີຄວາມອຸດົມສົມບູນທາງດ້ານລະບົບນິເວດປ່າໄມ້ ແລະ ມີເອກະລັກສະເພາະທາງດ້ານທິວທັດທຳມະຊາດ, ເປັນອຸທິຍານແຫ່ງຊາດ, ເປັນມໍລະດົກ ທາງທຳມະຊາດ ແລະ ເຂດອະນຸລັກພັນສັດປ່າແຫ່ງຊາດ ໄດ້ທັງໝົດ ຈຳນວນ 7 ແຫ່ງ ໃນນັ້ນ, ເປັນອຸທິຍານແຫ່ງຊາດ 6 ແຫ່ງ ແລະ ເຂດອະນຸລັກພັນສັດປ່າແຫ່ງຊາດ 1 ແຫ່ງ ເພື່ອເປັນໜໍ່ແໜງ ໃຫ້ແກ່ການທ່ອງທ່ຽວທຳມະຊາດ; ໄດ້ເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ ແລະ ກວດກາ ການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້, ຊຶ່ງເຮັດໃຫ້ ສະພາບການ ທຳລາຍປ່າໄມ້, ລັກລອບຕັດ ແລະ ເຄື່ອນຍ້າຍໄມ້, ສົ່ງອອກໄມ້, ສັດນ້ຳ, ສັດປ່າ ແລະ ເຄື່ອງປ່າຂອງດົງ ທີ່ບໍ່ຖືກກົດໝາຍຫຼຸດໜ້ອຍຖອຍລົງ; ໄດ້ຮ່ວມມື ແລະ ປະສານງານກັບ ບັນດາຂະແໜງການກ່ຽວຂ້ອງ ແລະ ຄູ່ຮ່ວມພັດທະນາ ສ້າງພື້ນຖານວັດຖຸເຕັກນິກ ເພື່ອສົ່ງເສີມການນຳໃຊ້ປ່າໄມ້ ເປັນແຫຼ່ງທ່ອງທ່ຽວທຳມະຊາດ, ການຊື້ ຂາຍສິນເຊື່ອກາກບອນປ່າໄມ້, ການບໍລິການດ້ານລະບົບນິເວດປ່າໄມ້, ການຄ້າຂາຍໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກຕ້ອງຕາມກົດໝາຍ ແລະ ມາດຕະຖານການຄຸ້ມຄອງປ່າໄມ້ສາກົນ.

ຄຽງຄູ່ກັບຜົນສຳເລັດທີ່ກ່າວມາຂ້າງເທິງນັ້ນ, ຍັງມີຂໍ້ຄົງຄ້າງບາງດ້ານ ເຊັ່ນ: ຍັງມີການບຸກລຸກທຳລາຍປ່າໄມ້ ແລະ ທີ່ດິນປ່າໄມ້ ດ້ວຍຮູບແບບຕ່າງໆ, ມີການລັກລອບຊື້ ຂາຍ ໄມ້, ສັດນ້ຳ, ສັດປ່າ ແລະ ພືດປ່າ ທີ່ຫາຍາກ ແລະ

ໃກ້ຈະສູນພັນ; ການປະສານງານລະຫວ່າງຂະແໜງການທີ່ກ່ຽວຂ້ອງ ຍັງບໍ່ທັນໄດ້ດີເທົ່າທີ່ຄວນ; ວິຊາການສະເພາະດ້ານຍັງມີຈຳກັດ ແລະ ງົບປະມານ ໃນການຄຸ້ມຄອງວຽກງານປ່າໄມ້ ຍັງມີບໍ່ພຽງພໍ.

ເຫັນໄດ້ຄວາມສຳຄັນ ແລະ ບັນຫາຂໍ້ຄົງຄ້າງທີ່ຍັງຈະຕ້ອງໄດ້ສືບຕໍ່ຄືດັ່ງທີ່ກ່າວມາຂ້າງເທິງນັ້ນ ຈຶ່ງມີຄວາມຈຳເປັນຕ້ອງໄດ້ສືບຕໍ່ກຳນົດຍຸດທະສາດ ໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ປ່າໄມ້ ແລະ ທີ່ດິນປ່າໄມ້, ເຊິ່ງຍຸດທະສາດປ່າໄມ້ສະບັບນີ້ ເປັນເອກະສານພື້ນຖານສຳລັບ ການກຳນົດທິດທາງແຜນການ ໃນການພັດທະນາຂະແໜງການປ່າໄມ້ຕາມທິດສີຂຽວ ແລະ ຍືນຍົງ, ເປັນບ່ອນອີງໃຫ້ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ນຳໄປຜັນຂະຫຍາຍໃຫ້ແທດເໝາະກັບຂະແໜງການ ແລະ ທ້ອງຖິ່ນຂອງຕົນ ເພື່ອຮັບປະກັນຄວາມສອດຄ່ອງກັບ ແຜນຍຸດທະສາດຂອງແຕ່ລະຂະແໜງການ ແລະ ແຜນພັດທະນາຂອງແຕ່ລະທ້ອງຖິ່ນ.

ນະຄອນຫຼວງວຽງຈັນ, ວັນທີ 22 ສິງຫາ 2024

ລັດຖະມົນຕີ

ລິນຄຳ ດວງສະຫວັນ

# ພາກທີ I: ຕີລາຄາ ສະພາບການຈັດຕັ້ງປະຕິບັດ ຍຸດທະສາດປ່າໄມ້ ຮອດປີ 2020

## 1.1 ຜົນສໍາເລັດຂອງ ການຈັດຕັ້ງປະຕິບັດ

ຍຸດທະສາດປ່າໄມ້ ແມ່ນນະໂຍບາຍພື້ນຖານກ່ຽວກັບການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນໍາໃຊ້ ປ່າໄມ້ ແລະ ທີ່ດິນປ່າໄມ້ ຕາມທິດສີຂຽວ ແລະ ຍືນຍົງ. ຍຸດທະສາດປ່າໄມ້ ຮອດປີ 2020 ໄດ້ກໍານົດຄາດໝາຍສູ້ຊົນ ຕົ້ນຕໍຄື: 1) ຍົກລະດັບຄວາມປົກຫຸ້ມຂອງປ່າໄມ້ ທີ່ມີໃນປະຈຸບັນ ໃຫ້ໄດ້ 70% ຂອງເນື້ອທີ່ທົ່ວປະເທດ, ດ້ວຍການ ຟື້ນຟູປ່າໄມ້ທີ່ຊຸດໂຊມ ໃຫ້ໄດ້ 6.000.000 ເຮັກຕາ ແລະ ປູກໄມ້ ໃຫ້ໄດ້ 500.000 ເຮັກຕາ; 2) ສົ່ງເສີມຢ່າງແຂງແຮງ ການປຸງແຕ່ງໄມ້ ແລະ ເຄື່ອງປ່າຂອງດົງ ເປັນຜະລິດຕະພັນສໍາເລັດຮູບຮັບໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດ ທັງ ເປັນການສ້າງລາຍຮັບໃຫ້ແກ່ຄອບຄົວ, ປະກອບສ່ວນໃນການສ້າງລາຍຮັບແຫ່ງຊາດ ແລະ ສະໜອງວຽກເຮັດງານທໍາ ໃຫ້ແກ່ສັງຄົມ; 3) ອະນຸລັກຊະນິດ ພັນພືດ ແລະ ພັນສັດ ທີ່ຫາຍາກ ແລະ ໃກ້ຈະສູນພັນ; 4) ປົກປັກຮັກສາ ສິ່ງແວດລ້ອມ, ປ້ອງກັນດິນເຊາະເຈື່ອນ, ຮັກສາແຫຼ່ງນໍ້າ ແລະ ພູມິອາກາດ. ເພື່ອໃຫ້ສາມາດບັນລຸໄດ້ຕາມຄາດໝາຍສູ້ ຊົນທີ່ກ່າວມານັ້ນ, ຍຸດທະສາດປ່າໄມ້ ຮອດປີ 2020 ໄດ້ກໍານົດ 10 ແຜນງານ, 39 ແຜນດໍາເນີນງານ ແລະ 146 ໂຄງການ ຊຶ່ງລາຍລະອຽດໄດ້ສັງລວມ ໃນຕາຕະລາງທີ 1.

ຕາຕະລາງ 1: ສັງລວມ ແຜນງານ, ແຜນດໍາເນີນງານ ແລະ ໂຄງການ.

| ລ/ດ | ແຜນງານ | ຈໍານວນ ແຜນດໍາເນີນງານ | ຈໍານວນ ໂຄງການ |
|---|---|---|---|
| 1 | ການນໍາໃຊ້ ທີ່ດິນ ແລະ ປ່າໄມ້ | 4 | 13 |
| 2 | ການຄຸ້ມຄອງປ່າຜະລິດ | 5 | 15 |
| 3 | ການຄຸ້ມຄອງເຄື່ອງປ່າຂອງດົງ | 3 | 10 |
| 4 | ການພັດທະນາການປູກໄມ້ | 5 | 14 |
| 5 | ການຂຸດຄົ້ນໄມ້ ແລະ ຄ່າພັນທະ | 1 | 6 |
| 6 | ອຸດສາຫະກໍາການປຸງແຕ່ງໄມ້ | 4 | 15 |
| 7 | ການອະນຸລັກຊີວະນານາພັນ | 5 | 22 |
| 8 | ປ່າປ້ອງກັນ ແລະ ການຄຸ້ມຄອງຈັດສັນອ່າງໂຕ່ງ | 1 | 5 |
| 9 | ການນໍາໃຊ້ທີ່ດິນ ແລະ ການຄຸ້ມຄອງປ່າໄມ້ຂັ້ນບ້ານ | 4 | 13 |
| 10 | ຂົງເຂດໃນການດໍາເນີນງານຮ່ວມກັນ ຂອງບັນດາ ຂະແໜງການທີ່ກ່ຽວຂ້ອງ | 7 | 33 |
| | **ລວມ** | **39** | **146** |

ຜ່ານການຈັດຕັ້ງປະຕິບັດ ແຜນຍຸດທະສາດໃນໄລຍະ 15 ປີ ຜ່ານມາ (2005-2020), ສາມາດ ບັນລຸໄດ້ ຜົນ ສໍາເລັດບາງດ້ານດັ່ງລຸ່ມນີ້:

### 1) ວຽກງານຄຸ້ມຄອງປົກປັກຮັກສາ ປ່າໄມ້ ແລະ ທີ່ດິນປ່າໄມ້:

ວຽກງານຄຸ້ມຄອງປົກປັກຮັກສາປ່າໄມ້ ແລະ ທີ່ດິນປ່າໄມ້ ໄດ້ສຸມໃສ່ການຄຸ້ມຄອງປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ, ການປົກປັກຮັກສາຊີວະນານາພັນ, ສັດນໍ້າ ແລະ ສັດປ່າ ດັ່ງລຸ່ມນີ້.

- ປ່າໄມ້ ແລະ ທີ່ດິນປ່າໄມ້ ໃນຂອບເຂດ ທົ່ວປະເທດ ໄດ້ຫັນເຂົ້າສູ່ລະບົບການຄຸ້ມຄອງ ປົກປັກຮັກສາ, ພັດທະນາ ແລະ ນໍາໃຊ້ແບບຍືນນານ ໂດຍການມີສ່ວນຮ່ວມຂອງປະຊາຊົນ ແລະ ສາມາດຍົກລະດັບຄວາມ

ປົກຫຸ້ມຂອງປ່າໄມ້ ຈາກ 41,5% (9,8 ລ້ານ ເຮັກຕາ) ໃນປີ 2005 ຂຶ້ນເປັນ 62% ຂອງເນື້ອທີ່ ທົ່ວປະເທດ (14,7 ລ້ານເຮັກຕາ) ໃນປີ 2020, ເທົ່າກັບ 72% ຂອງແຜນການ[1]. ຖ້າທຽບໃສ່ ນິຍາມຄວາມປົກຫຸ້ມປ່າໄມ້ ຂອງ ອົງການອາຫານ ແລະ ການກະເສດ (FAO) ສປປ ລາວ ໃນປີ 2020 ມີເນື້ອທີ່ປ່າໄມ້ ປົກຫຸ້ມ 82% ຂອງເນື້ອທີ່ ທົ່ວປະເທດ ແລະ ເປັນ ອັນດັບທີ 8 ຂອງໂລກ (ຮູບສະແດງ 1).




**ຮູບສະແດງ 1. ການປ່ຽນແປງຄວາມປົກຫຸ້ມຂອງປ່າໄມ້ ໃນ ສປປ ລາວ**

- ສຳເລັດຂັ້ນພື້ນຖານ ໃນການກຳນົດຂອບເຂດປ່າໄມ້ ໃນແຜນທີ່ລະບົບພາບຖ່າຍດາວທຽມ ໄດ້ທັງໝົດ 15,8 ລ້ານເຮັກຕາ ກວມເອົາ 67% ຂອງເນື້ອທີ່ທົ່ວປະເທດ. ໃນນັ້ນ ປະກອບມີ ປ່າປ້ອງກັນ 139 ແຫ່ງ ກວມເອົາເນື້ອທີ່ ປະມານ 7,9 ລ້ານເຮັກຕາ; ປ່າສະຫງວນ 174 ແຫ່ງ ກວມເອົາເນື້ອທີ່ 4,8 ລ້ານເຮັກຕາ ແລະ ປ່າຜະລິດແຫ່ງຊາດ 51 ແຫ່ງ ກວມເອົາເນື້ອທີ່ 3,1 ລ້ານເຮັກຕາ;
- ມີລະບົບການຄຸ້ມຄອງ ແລະ ປົກປັກຮັກສາ ປ່າປ້ອງກັນ ແລະ ອ່າງໂຕ່ງແບບຍືນຍົງ ຕາມທີ່ໄດ້ກຳນົດໄວ້ ໃນດຳລັດ ວ່າດ້ວຍປ່າປ້ອງກັນ[2]. ສຳເລັດ ການຈັດລຽງບຸລິມະສິດອ່າງໂຕ່ງ ທີ່ມີຄວາມສຳຄັນ ແລະ ຈຳເປັນ ໃນການຄຸ້ມຄອງ ແລະ ປ້ອງກັນ ເພື່ອຮັບປະກັນການອະນຸລັກ ດິນ ແລະ ນ້ຳ ໂດຍຜ່ານການນຳໃຊ້ຊັບພະຍາກອນທຳມະຊາດແບບຍືນຍົງ ໄດ້ທັງໝົດ 10 ອ່າງໂຕ່ງ ຄື: ນ້ຳອູ, ນ້ຳທາ, ນ້ຳຊຳ, ນ້ຳງື່ມ, ນ້ຳເທີນ-ນ້ຳກະດິງ, ນ້ຳງຽບ, ເຊບັ້ງຫຽງ, ເຊບັ້ງໄຟ, ເຊໂດນ ແລະ ເຊກອງ-ເຊຂະໝານ;
- ລະບົບການວາງແຜນຄຸ້ມຄອງປ່າສະຫງວນແຫ່ງຊາດ ແບບມີສ່ວນຮ່ວມໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ, ກົນໄກ ການຄຸ້ມຄອງ ແລະ ຂະຫຍາຍພັນ ພືດ, ສັດນ້ຳ-ສັດປ່າ ແລະ ແຫຼ່ງທີ່ຢູ່ອາໄສ ໄດ້ຮັບການປັບປຸງ ແລະ ເປັນລະບົບດີຂຶ້ນ, ອັນພົ້ນເດັ່ນໄດ້ຈັດປະເພດປ່າສະຫງວນ ທີ່ມີຄວາມ ອຸດົມສົມບູນທາງດ້ານລະບົບນິເວດປ່າໄມ້ ແລະ ມີເອກະລັກສະເພາະທາງດ້ານທິວທັດທຳມະຊາດ ເປັນອຸທິຍານແຫ່ງຊາດ 6 ແຫ່ງ (ນ້ຳແອດ-ພູເລີຍ, ນາກາຍ-ນ້ຳເທີນ, ຫີນໜາມໜໍ່, ດົງຫົວສາວ, ເຊປຽນ ແລະ ພູເຂົາຄວາຍ), ມີການພັດທະນາ ປ່າສະຫງວນ

---

[1] ບົດລາຍງານການສຳຫຼວດຄວາມປົກຫຸ້ມປ່າໄມ້ ໃນປີ 2015 ແລະ 2019 ໂດຍນຳໃຊ້ວິທີການ ແປພາບຖ່າຍດາວທຽມ ປີ 2000, 2005, 2015, 2019 (Wall to Wall Mapping) ແລະ ປະເມີນເອົາປ່າເຫຼົ່າທີ່ສາມາດມີຄວາມປົກຫຸ້ມຂອງເຮືອນຍອດໄດ້ 20% ຕາມນິຍາມປ່າໄມ້. ລັດຖະມົນຕີອອກຂໍ້ຕົກລົງຮັບຮອງ ສະບັບເລກທີ 0356/ກປ.ລົງວັນທີ 10 ມີນາ 2021,

[2] ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍປ່າປ້ອງກັນ, ສະບັບເລກທີ 333/ນຍ, ລົງວັນທີ 19 ກໍລະກົດ 2010.

ແຫ່ງຊາດ ນໍ້າຫ້າ ຂຶ້ນເປັນສວນອຸທິຍານທາງທໍາມະຊາດອາຊຽນ, ລວມທັງການສ້າງບົດແນະນໍາ ກ່ຽວກັບການຄຸ້ມຄອງປ່າສະຫງວນແຫ່ງຊາດ ແລະ ການທ່ອງທ່ຽວແບບອະນຸລັກທໍາມະຊາດ;

- ສໍາເລັດການສ້າງລະບົບ ການຄຸ້ມຄອງປ່າຜະລິດແບບຍືນນານ ໂດຍການມີສ່ວນຮ່ວມຂອງປະຊາຊົນບັນດາເຜົ່າ ພ້ອມທັງສ້າງຄູ່ມືການຄຸ້ມຄອງປ່າຜະລິດແບບຄົບຊຸດ ຊຶ່ງເລີ່ມແຕ່ວຽກວາງແຜນຈັດສັນ, ສ້າງແຜນຂຸດຄົ້ນ, ການຂຸດຄົ້ນໄມ້ ແລະ ມີລະບົບການແບ່ງປັນຜົນປະໂຫຍດຈາກການຂາຍໄມ້ໃຫ້ ປະຊາຊົນບັນດາເຜົ່າ ຢ່າງໂປ່ງໃສ ແລະ ຍຸຕິທໍາ[3] ອັນພົ້ນເດັ່ນ ລະບົບການຄຸ້ມຄອງປ່າຜະລິດໄດ້ຮັບການຢັ້ງຢືນຈາກສະພາບໍລິຫານປ່າໄມ້ສາກົນ (Forest Stepwardship Council) ຈໍານວນ 110.000 ເຮັກຕາ. ນອກຈາກນັ້ນ ຍັງໄດ້ສໍາເລັດການສ້າງແຜນຄຸ້ມຄອງປ່າຜະລິດແບບຍືນນານ ຈໍານວນ 78 ເຂດຄຸ້ມຄອງ ແລະ 315 ເຂດຄຸ້ມຄອງຍ່ອຍ ຕາມເຂດປົກຄອງຂອງເມືອງ ກວມເອົາ 3,1 ລ້ານເຮັກຕາ ຫຼື ເທົ່າກັບ 100% ຂອງເນື້ອທີ່ປ່າຜະລິດທັງໝົດໃນທົ່ວປະເທດ;
- ຊີວະນານາພັນ ທີ່ລວມເອົາທັງ ພັນພືດ ແລະ ພັນສັດປ່າ, ໂດຍສະເພາະ ຊະນິດພັນ ທີ່ມີຄຸນຄ່າ ແລະ ມີຄວາມສ່ຽງຕໍ່ການສູນພັນ ພ້ອມດ້ວຍ ຖິ່ນທີ່ຢູ່ອາໄສຂອງບັນດາຊະນິດພັນດັ່ງກ່າວ ກໍ່ໄດ້ຮັບການຄຸ້ມຄອງ ແລະ ປົກປັກຮັກສາໄດ້ຢູ່ໃນລະດັບດີ ອັນພົ້ນເດັ່ນແມ່ນ ສໍາເລັດການສ້າງຕັ້ງ ເຂດອະນຸລັກພັນສັດປ່າ ຄື: ເຂດອະນຸລັກປ່າໂຄກ ໂອງ-ມັ່ງ ແຫ່ງຊາດ. ສໍາເລັດການສໍາຫຼວດ ແລະ ປະເມີນສະຖານະພາບ ເຄື່ອງປ່າຂອງດົງ ໄດ້ທັງໝົດ 2.200 ຊະນິດ, ໃນນີ້ ມີຊະນິດພັນທີ່ເປັນຢາ 2.000 ຊະນິດ, ຊະນິດພັນທີ່ມີທ່າແຮງທາງດ້ານການຕະຫຼາດ 200 ຊະນິດ ແລະ ໄດ້ກໍານົດຊະນິດ ໄມ້ ແລະ ເຄື່ອງປ່າຂອງດົງ ເຂົ້າໃນບັນຊີ I, II ແລະ III ເພື່ອແບ່ງຂັ້ນຄຸ້ມຄອງລະຫວ່າງ ສູນກາງ ແລະ ທ້ອງຖິ່ນ ຕາມທີ່ກົດໝາຍ ວ່າດ້ວຍປ່າໄມ້ ໄດ້ກໍານົດ[4]. ໄດ້ກໍານົດ ແລະ ປົກປັກຮັກສາເຂດແຫຼ່ງແກ່ນພັນໄມ້ພື້ນເມືອງທົ່ວປະເທດ ຈໍານວນ 19 ຊະນິດພັນ, ປະມານ 6.800 ຕົ້ນ ໃນເນື້ອທີ່ 6.700 ເຮັກຕາ.
- ການຄຸ້ມຄອງປົກປັກຮັກສາ ສັດນໍ້າ-ສັດປ່າ ແລະ ພືດປ່າ ໂດຍສະເພາະການຄຸ້ມຄອງການຄ້າຂາຍ ລະຫວ່າງຊາດ ໄດ້ເຂົ້າສູ່ລະບົບ ແລະ ເປັນທີ່ຍອມຮັບຈາກອົງການຈັດຕັ້ງສາກົນ, ໄດ້ປັບປຸງກົນໄກການປະສານງານ ແລະ ຈັດຕັ້ງປະຕິບັດ ກົດໝາຍ ແລະ ສົນທິສັນຍາສາກົນ ວ່າດ້ວຍການຄ້າຂາຍຊະນິດພັນ ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນລະຫວ່າງຊາດ (CITES), ສໍາເລັດການສ້າງແຜນດໍາເນີນງານ ການອະນຸລັກ ເສືອໂຄ່ງແຫ່ງຊາດ, ຊ້າງແຫ່ງຊາດ, ງາຊ້າງແຫ່ງຊາດ ແລະ ປັບປຸງບັນຊີ ສັດນໍ້າ-ສັດປ່າ I, II ແລະ III.

**2) ວຽກງານພັດທະນາປ່າໄມ້:**

ວຽກງານພັດທະນາປ່າໄມ້ ໄດ້ສຸມໃສ່ສົ່ງເສີມການ ປູກໄມ້ ແລະ ຟື້ນຟູປ່າ ເພື່ອເປັນສິນຄ້າ ແລະ ປົກປັກຮັກສາສິ່ງແວດລ້ອມ, ພັດທະນາປ່າໄມ້ ໃຫ້ກາຍເປັນແຫຼ່ງທ່ອງທ່ຽວແບບອະນຸລັກທໍາມະຊາດ ດັ່ງລຸ່ມນີ້:

- ປູກໄມ້ ໃສ່ທີ່ດິນປ່າ ປອກໂຫຼ້ນ ແລະ ຊຸດໂຊມ ບັນລຸໄດ້ 490.330 ເຮັກຕາ[5,6] ຊຶ່ງເທົ່າກັບ 98% ຂອງແຜນການ, ຊະນິດພັນໄມ້ທີ່ປູກ ປະກອບມີ ໄມ້ຢາງພາລາ (ກວມເອົາ 57%), ໄມ້ວິກ (ກວມເອົາ 15%), ໄມ້ສັກ (ກວມເອົາ 9%), ໄມ້ເກດສະໜາ (ກວມເອົາ 6%) ແລະ ຊະນິດໄມ້ພື້ນເມືອງອື່ນໆ (ກວມເອົາ 13%) ຂອງເນື້ອທີ່ປູກໄມ້ທັງໝົດ (ຮູບສະແດງ 2).

---

[3] ລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍການແບ່ງປັນລາຍຮັບຈາກການຂາຍໄມ້ທີ່ຂຸດຄົ້ນໃນເຂດປ່າຜະລິດ ສະບັບເລກທີ 001/ປປທ, ລົງວັນທີ 31 ມັງກອນ 2012;

[4] ຂໍ້ຕົກລົງຂອງ ກະຊວງກະສິກໍາ ແລະ ປ່າໄມ້ ວ່າດ້ວຍການກໍານົດບັນຊີເຄື່ອງປ່າຂອງດົງ I,II ແລະ III ສະບັບເລກທີ 0279/ກປ, ວັນທີ 19 ກຸມພາ 2020

[5] ບົດສະຫຼຸບຕີລາຄາ ການຈັດຕັ້ງປະຕິບັດແຜນພັດທະນາ ກະສິກໍາ ແລະ ປ່າໄມ້ 5 ປີ ຄັ້ງທີ VII (2011-2015) ແລະ ທິດທາງແຜນການ 5 ປີ ຄັ້ງທີ VIII (2016-2020) ຂອງກະຊວງກະສິກໍາ ແລະ ປ່າໄມ້, ສະບັບເລກທີ 0139/ກປ, ລົງວັນທີ 16 ກຸມພາ 2016.

[6] ບົດສະຫຼຸບຕີລາຄາ ການຈັດຕັ້ງປະຕິບັດແຜນພັດທະນາ ຂະແໜງການປ່າໄມ້ 5 ປີ ຄັ້ງທີ (2016-2020) ແລະ ທິດທາງແຜນການ 5 ປີ ຄັ້ງທີ VIII (2021-2025) ຂອງກົມປ່າໄມ້, ສະບັບເລກທີ 3100/ກປມ, ລົງວັນທີ 9 ມິຖຸນາ 2021. .




**ຮູບສະແດງ 2. ຊະນິດພັນໄມ້ທີ່ໄດ້ປູກ ໃນ ສປປ ລາວ**

- ອັນພົ້ນເດັ່ນ ແມ່ນການປູກໄມ້ ເພື່ອເປັນສິນຄ້າ ຊຶ່ງມີມູນຄ່າການລົງທຶນທັງໝົດ ຫຼາຍກວ່າ 1,5 ຕື້ໂດລາສະຫະລັດ, ໃນນັ້ນ ການລົງທຶນຕ່າງປະເທດ 1,4 ຕື້ໂດລາສະຫະລັດ ແລະ ພາຍໃນ 140 ລ້ານໂດລາສະຫະລັດ. ນອກຈາກນັ້ນ, ຍັງໄດ້ສົ່ງເສີມການລົງທຶນປູກໄມ້ ໃນເຂດປ່າຊຸດໂຊມ ແລະ ທີ່ດິນປ່າປອກໂຫຼ້ນ ໃນເຂດປ່າຜະລິດທີ່ລັດຈັດສັນໃຫ້ ຫຼື ທີ່ດິນຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລັດໄດ້ໃຫ້ສິດນຳໃຊ້ທີ່ດິນ. ໄດ້ປັບປຸງລະບຽບການ ກ່ຽວກັບ ການຄຸ້ມຄອງ ແລະ ນຳໃຊ້ ໄມ້ປູກ ໃຫ້ກະທັດຮັດ ຊຶ່ງເລີ່ມແຕ່ ການຕັດ, ການເຄື່ອນຍ້າຍ, ການຊື້ ຂາຍ ແລະ ການສົ່ງອອກ ໄມ້ປູກ;
- ການຟື້ນຟູປ່າຊຸດໂຊມ ທັງແບບ ທຳມະຊາດ ແລະ ປູກເສີມ ບັນລຸໄດ້ 4,5 ລ້ານເຮັກຕາ ເທົ່າກັບ 75% ຂອງແຜນການ. ສຳເລັດການສ້າງຄູ່ມືການຟື້ນຟູປ່າໄມ້ຂັ້ນບ້ານ ຕິດພັນກັບການສ້າງລາຍຮັບ ແລະ ຜົນປະໂຫຍດໃຫ້ປະຊາຊົນບັນດາເຜົ່າ ຈາກການຈັດຕັ້ງປະຕິບັດກິດຈະກຳການການຟື້ນຟູປ່າ ເຊັ່ນ ການກ້າເບ້ຍໄມ້, ການປູກ ແລະ ບົວລະບັດຮັກສາ. ສິດໄດ້ຮັບໝາກຜົນຈາກການຂາຍ ໄມ້ ແລະ ເຄື່ອງປ່າຂອງດົງ ທີ່ຕົນປູກ ແລະ ຟື້ນຟູ, ການຄ້າຂາຍ ສິນເຊື່ອກາກບອນປ່າໄມ້ ໄດ້ກຳນົດໄວ້ໃນ ກົດໝາຍ ວ່າດ້ວຍປ່າໄມ້;
- ໄດ້ພັດທະນາເຂດປ່າໄມ້ ທີ່ມີຄວາມອຸດົມສົມບູນທາງດ້ານ ທຳມະຊາດ ແລະ ວັດທະນາທຳ ໃຫ້ກາຍເປັນແຫຼ່ງທ່ອງທ່ຽວແບບອະນຸລັກທຳມະຊາດ ໂດຍມີສ່ວນຮ່ວມ ລະຫວ່າງ ອົງການລັດ, ຜູ້ປະກອບການ ແລະ ປະຊາຊົນບັນດາເຜົ່າ ບົນພື້ນຖານຕ່າງຝ່າຍຕ່າງມີຜົນປະໂຫຍດຮ່ວມກັນ ເຊັ່ນ ນ້ຳກ່ານ ແຂວງບໍ່ແກ້ວ, ນ້ຳຫ້າ ແຂວງຫຼວງນ້ຳທາ, ນ້ຳກັດຢໍລະປາ ແຂວງອຸດົມໄຊ, ນ້ຳປຽນຢໍລະປາ ນະຄອນຫຼວງວຽງຈັນ, ພູຜາມ່ານ ແຂວງຄຳມ່ວນ ແລະ ຕາດຟານ ແຂວງຈຳປາສັກ.

**3) ການນຳໃຊ້ ປ່າໄມ້ ແລະ ທີ່ດິນປ່າໄມ້:**

ການນຳໃຊ້ ປ່າໄມ້, ໄມ້, ເຄື່ອງປ່າຂອງດົງ ແລະ ທີ່ດິນປ່າໄມ້ ໄດ້ສຸມໃສ່ການຄຸ້ມຄອງ ແລະ ກວດກາ ການນຳໃຊ້ ເພື່ອສາທາລະນະປະໂຫຍດ, ເພື່ອຄອບຄົວ, ຕາມປະເພນີ ແລະ ທຸລະກິດ ແນ່ໃສ່ເຮັດໃຫ້ການນຳໃຊ້ທຸກປະເພດ ບໍ່ໃຫ້ມີຜົນກະທົບອັນບໍ່ດີຕໍ່ ປ່າໄມ້, ຄຸນນະພາບຂອງດິນ, ເຄື່ອງປ່າຂອງດົງ ແລະ ສິ່ງແວດລ້ອມ ຕາມທີ່ ກົດໝາຍ ວ່າດ້ວຍປ່າໄມ້ ໄດ້ກຳນົດ. ສະພາແຫ່ງຊາດ ໄດ້ອອກມະຕິຮັບຮອງເອົາປະເພດ ການນຳໃຊ້ທີ່ດິນ ຕາມແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ຄື: ທີ່ດິນປ່າສະຫງວນ ຈຳນວນ 4,7 ລ້ານ ເຮັກຕາ, ທີ່ດິນປ່າປ້ອງກັນ ຈຳນວນ 8,2 ລ້ານ ເຮັກຕາ, ທີ່ດິນປ່າຜະລິດ ຈຳນວນ 3,1 ລ້ານ ເຮັກຕາ ແລະ ທີ່ດິນປູກໄມ້ອຸດສາຫະກຳ ຈຳນວນ 0,5 ລ້ານເຮັກຕາ[7].

---

[7] ມາດຕາ 1 ມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 098/ສພຊ, ລົງວັນທີ 28/6/2018

ການນຳໃຊ້ ທີ່ດິນ ແລະ ປ່າໄມ້ ຂັ້ນບ້ານ ໄດ້ຮັບການພັດທະນາເປັນລະບົບ ໂດຍຖືເອົາການຈັດສັນ ປ່າໄມ້ ແລະ ທີ່ດິນປ່າໄມ້ ໃນເຂດປົກຄອງຂອງບ້ານ, ການກຳນົດປະເພດການນຳໃຊ້ທີ່ດິນ ແລະ ການຕິດປ້າຍປັກ ຫຼັກໝາຍ ປ່າໄມ້ແຕ່ລະປະເພດ, ການສ້າງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ ແລະ ມອບໃຫ້ ອົງການປົກຄອງບ້ານ ຄຸ້ມຄອງປົກປັກຮັກສາ ຕາມສິດ ແລະ ໜ້າທີ່ຂອງບ້ານ ທີ່ໄດ້ກຳນົດໄວ້ໃນ ກົດໝາຍ ວ່າດ້ວຍປ່າໄມ້[8]. ນອກຈາກນັ້ນ, ບ້ານທີ່ຕັ້ງຢູ່ ໃນ ແລະ ຕິດແປະເຂດປ່າສະຫງວນ ສາມາດເກັບກູ້ ເຄື່ອງປ່າຂອງດົງຈາກປ່າທຳມະຊາດ, ຜະລິດກະສິກຳ, ປູກ ໄມ້ ແລະ ເຄື່ອງປ່າຂອງດົງ ໃນເຂດຄຸ້ມຄອງການນຳໃຊ້ ແລະ ເຂດກັນຊົນ ຕາມທີ່ລັດຈັດສັນໃຫ້ ເພື່ອສ້າງເສດຖະກິດຄອບຄົວແລະເປັນສິນຄ້າ[9]. ຮອດປີ 2020 ສາມາດຈັດສັນ ປ່າໄມ້ ແລະ ທີ່ດິນປ່າໄມ້ຂັ້ນບ້ານ ແບບມີສ່ວນຮ່ວມ ໄດ້ທັງໝົດ ຈຳນວນ 1.360 ບ້ານ.

ໂຮງງານອຸດສາຫະກຳປຸງແຕ່ງໄມ້ ໄດ້ຮັບການປັບປຸງ ແລະ ມີການຍົກລະດັບ ການດຳເນີນການຜະລິດຢ່າງຮອບດ້ານ ລວມທັງສີມືແຮງງານ ລະຫວ່າງປີ 2006-2020 ໄດ້ມີການຍຸບເລີກໂຮງງານ ຈຳນວນ 1.133 ແຫ່ງ ທີ່ບໍ່ໄດ້ ມາດຕະຖານ ແລະ ເຄື່ອນໄຫວບໍ່ສອດຄ່ອງກັບ ກົດໝາຍ ແລະ ລະບຽບການ ກ່ຽວກັບປ່າໄມ້, ສ້າງຜົນກະທົບຕໍ່ສັງຄົມ ແລະ ສິ່ງແວດລ້ອມ (ຈາກຈຳນວນທັງໝົດ 2.102 ແຫ່ງ ໃນປີ 2006 ຍັງເຫຼືອ 969 ແຫ່ງ ໃນປີ 2020). ນອກຈາກນັ້ນ, ໄດ້ມີການຍຸບເລີກທຸລະກິດປຸງແຕ່ງໄມ້ ຂະໜາດນ້ອຍແບບຄອບຄົວ ຈຳນວນ 1.231 ຫົວໜ່ວຍ (ຈາກຈຳນວນທັງໝົດ 1.352 ໃນປີ 2006 ຍັງເຫຼືອ 121 ຫົວໜ່ວຍ ໃນປີ 2020).

ລັດໄດ້ສົ່ງເສີມການລົງທຶນເຂົ້າໃນການປຸງແຕ່ງໄມ້ປູກ ເຊັ່ນ ບໍລິສັດຊຸນເປເປີ້ (Sun Paper Co.,Ltd) ລົງທຶນເຂົ້າໃນໂຮງງານ ຜະລິດເຫຍື່ອເຈ້ຍ ແລະ ເຈ້ຍ ລວມມູນຄ່າການລົງທຶນ 1 ຕື້ ໂດລາສະຫະລັດ, ບໍລິສັດ ບົວລະພາ ກະສິກຳ-ປ່າໄມ້ ຈຳກັດ ສ້າງຕັ້ງໂຮງງານ ໄມ້ອັດ/ໄມ້ແຜ່ນບາງ ໃນມູນຄ່າ 20 ລ້ານ ໂດລາສະຫະລັດ, ບໍລິສັດ ແມ່ຂອງປູກໄມ້ ລົງທຶນສ້າງໂຮງງານປຸງແຕ່ງໄມ້ປູກ ໃນມູນຄ່າ 15 ລ້ານ ໂດລາສະຫະລັດ ແລະ ບໍລິສັດ ອື່ນໆ. ໄດ້ລິເລີ່ມສ້າງລະບົບຄ້ຳປະກັນໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກຕ້ອງຕາມ ກົດໝາຍ ຊຶ່ງເປັນການສ້າງເງື່ອນໄຂໃຫ້ຂະແໜງການອຸດສາຫະກຳປຸງແຕ່ງ ເຂົ້າເຖິງຕະຫຼາດ ພາຍໃນ, ພາກພື້ນ ແລະ ສາກົນ ໂດຍສະເພາະການເຈລະຈາ ການຊື້ຂາຍໄມ້ ກັບຄູ່ຄ້າ ຂອງສະຫະພາບເອີຣົບ.

ລະບົບການເກັບຄ່າພັນທະ ໄດ້ມີການປັບປຸງ ຢ່າງຕໍ່ເນື່ອງ ແລະ ເປັນລະບົບດີຂຶ້ນ ລວມທັງ ໄມ້ ແລະ ເຄື່ອງປ່າຂອງດົງ ທຸກປະເພດ ທີ່ຂຸດຄົ້ນຕາມການອະນຸມັດຂອງລັດຖະບານ ແລະ ຂຸດຄົ້ນຜິດ ກົດໝາຍ ແລະ ລະບຽບການ ຕ້ອງໄດ້ຂຶ້ນບັນຊີໃຫ້ຖືກຕ້ອງ ແລະ ຄົບຖ້ວນ ຫຼັງຈາກນັ້ນ, ຈຶ່ງນຳໄປຈົດທະບຽນເປັນຊັບສິນຂອງລັດ ຢູ່ຂະແໜງການການເງິນ[10] ເພື່ອດຳເນີນການປະມູນຂາຍ ຕາມຂັ້ນຕອນ ກົດໝາຍ ແລະ ລະບຽບການ, ຮັບປະກັນຄວາມໂປ່ງໃສ ແລະ ຜົນປະໂຫຍດສູງສຸດ ໃຫ້ແກ່ລັດ. ລາຍຮັບຈາກການຂາຍ ໄມ້ ແລະ ເຄື່ອງປ່າຂອງດົງ ທັງໝົດ ຕ້ອງໄດ້ມອບເຂົ້າງົບປະມານຕາມກົດໝາຍ ວ່າດ້ວຍງົບປະມານ.

**4) ຂົງເຂດການດຳເນີນງານຮ່ວມກັນ ຂອງບັນດາຂະແໜງການທີ່ກ່ຽວຂ້ອງ:**

- ກົດໝາຍ, ລະບຽບການ ແລະ ບົດແນະນຳເຕັກນິກ ຫຼາຍກວ່າ 100 ສະບັບ ໄດ້ຖືກປະກາດໃຊ້ ເພື່ອເປັນເຄື່ອງມືມະຫາພາກ ແລະ ສ້າງຄວາມເຂັ້ມແຂງໃຫ້ແກ່ຂະແໜງການ ໃນການຄຸ້ມຄອງ ປົກປັກຮັກສາ ຊັບພະຍາກອນປ່າໄມ້ ໃຫ້ມີຄວາມອຸດົມສົມບູນ ແລະ ຮັບປະກັນການນຳໃຊ້ແບບຍືນຍົງ. ອັນພົ້ນເດັ່ນ, ແມ່ນໄດ້ອອກຄຳສັ່ງ ສະບັບເລກທີ 15/ນຍ ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ ແລະ ກວດກາ ການຂຸດຄົ້ນໄມ້ ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້; ຄຳສັ່ງ ສະບັບເລກທີ 05/ນຍ ກ່ຽວກັບ ການຄຸ້ມຄອງສັດປ່າ; ຄຳສັ່ງ ສະບັບ

[8] ມາດຕາ 39 (ໃໝ່) ການວາງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ ແລະ ມາດຕາ 114 (ປັບປຸງ) ປ່າໄມ້ ແລະ ທີ່ດິນປ່າໄມ້ ຂັ້ນບ້ານປົກປັກຮັກສາ ແລະ ພັດທະນາ ຂອງກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) 2019,

[9] ມາດຕາ 70 (ປັບປຸງ) ການປົກປັກຮັກສາທີ່ດິນປ່າປ້ອງກັນ ແລະ ມາດຕາ 71 (ປັບປຸງ) ການປົກປັກຮັກສາທີ່ດິນປ່າສະຫງວນ, ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) 2019.

[10] ຄຳສັ່ງ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຄຸ້ມຄອງການເກັບລາຍຮັບຈາກການຂາຍໄມ້ ແລະ ເຄື່ອງປ່າຂອງດົງ ເຂົ້າງົບປະມານຂອງລັດສະບັບເລກທີ 57/ນຍ, 2014

ເລກທີ 09/ນຍ ແລະ ດຳລັດ ສະບັບເລກທີ 247/ນຍ ກ່ຽວກັບການສົ່ງເສີມການປູກໄມ້ເປັນສິນຄ້າ; ສຳເລັດການປັບປຸງ ກົດໝາຍ ວ່າດ້ວຍປ່າໄມ້ ສະບັບເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019, ຊຶ່ງໄດ້ເນັ້ນໃສ່ ການຄຸ້ມຄອງ, ປົກປັກຮັກສາ ແລະ ສົ່ງເສີມການປູກໄມ້ ເປັນຕົ້ນຕໍ, ສອດຄ່ອງກັບແນວທາງ ນະໂຍບາຍຂອງພັກໃນໄລຍະໃໝ່ ຕາມທິດການພັດທະນາສີຂຽວ ແລະ ຍືນຍົງ, ຕິດພັນກັບການພັດທະນາຊົນນະບົດ ແກ້ໄຂຄວາມທຸກຍາກຕາມທິດສາມ (3) ສ້າງ;

- ເພີ່ມທະວີຄວາມເຂັ້ມງວດ ໃນການປະຕິບັດ ກົດໝາຍ ແລະ ລະບຽບການ ກ່ຽວກັບ ປ່າໄມ້ ແລະ ທີ່ດິນປ່າໄມ້, ຕົ້ນປີ 2008 ໄດ້ສ້າງຕັ້ງ ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້ ແຕ່ສູນກາງຮອດທ້ອງຖິ່ນ ດ້ວຍການຮ່ວມມືກັບ ອົງການສືບສວນ-ສອບສວນ ຂະແໜງການອື່ນໆທີ່ກ່ຽວຂ້ອງ, ມີພາລະບົດບາດໃນການກວດກາ ແລະ ດຳເນີນຄະດີ ກ່ຽວກັບຊັບພະຍາກອນປ່າໄມ້, ເຂັ້ມງວດປະຕິບັດມາດຕະການຕໍ່ຜູ້ລະເມີດ ຄຳສັ່ງສະບັບເລກທີ 15/ນຍ ແລະ ສະບັບເລກທີ 05/ນຍ, ຜ່ານການຈັດຕັ້ງປະຕິບັດ ເຫັນວ່າ ສະພາບການບຸກລຸກປ່າໄມ້, ການລັກລອບຕັດໄມ້, ການເຄື່ອນຍ້າຍໄມ້, ສົ່ງອອກໄມ້, ຊື້ ຂາຍ ໄມ້ ແລະ ສັດນ້ຳ-ສັດປ່າ, ເຄື່ອງປ່າຂອງດົງ ແລະ ຜະລິດຕະພັນໄມ້ ທີ່ຜິດກົດໝາຍ ຫຼຸດໜ້ອຍຖອຍລົງ. ໄດ້ສຳເລັດ ການສ້າງເຄືອຂ່າຍບັງຄັບໃຊ້ກົດໝາຍ ວ່າດ້ວຍ ປ່າໄມ້ ແລະ ສັດນ້ຳ-ສັດປ່າ ຊຶ່ງສາມາດສະກັດກັ້ນ ແລະ ຕ້ານ ການຄ້າຂາຍ ສັດນ້ຳ-ສັດປ່າ ແລະ ພືດປ່າ ທີ່ຜິດກົດໝາຍ ຢູ່ພາຍໃນ, ພາກພື້ນ ແລະ ສາກົນ ໄດ້ດີພໍສົມຄວນ;
- ກົງຈັກການຈັດຕັ້ງ ແລະ ບຸກຄະລາກອນ ໄດ້ຮັບການປັບປຸງ ແລະ ພັດທະນາເປັນແຕ່ລະໄລຍະ ເພື່ອໃຫ້ສອດຄ່ອງກັບ ໜ້າທີ່ການເມືອງ ແລະ ຄວາມຮຽກຮ້ອງຕ້ອງການຂອງວຽກງານໃນໄລຍະໃໝ່, ໄດ້ກຳນົດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງກົງຈັກແຕ່ລະຂັ້ນ ຂອງຂະແໜງການປ່າໄມ້ ແຕ່ສູນກາງຮອດທ້ອງຖິ່ນຢ່າງຈະແຈ້ງ. ອັນພົ້ນເດັ່ນແມ່ນການຄຸ້ມຄອງ ປ່າສະຫງວນ ແລະ ອຸທິຍານແຫ່ງຊາດ ເພື່ອເປັນບ່ອນອີງໃນການຫັນພະນັກງານລົງປະຈຳຢູ່ແຕ່ລະເຂດ. ໄດ້ກຳນົດຕຳແໜ່ງງານ ພ້ອມບັນຈຸຊັບຊ້ອນບຸກຄະລາກອນຕາມຄວາມຮູ້ຄວາມສາມາດ ແລະ ຄວາມຮຽກຮ້ອງຕ້ອງການຕົວຈິງຂອງວຽກງານ. ອັນພົ້ນເດັ່ນ ໄດ້ກຳນົດສິດ ແລະ ໜ້າທີ່, ກົນໄກການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ໃນການຄຸ້ມຄອງວຽກງານ ປ່າໄມ້ ແລະ ທີ່ດິນປ່າໄມ້ ເຂົ້າໃນ ກົດໝາຍ ວ່າດ້ວຍປ່າໄມ້ ຢ່າງຈະແຈ້ງ;
- ວຽກງານຄົ້ນຄວ້າທົດລອງໄດ້ຮັບການປັບປຸງ ເປັນຕົ້ນແມ່ນ ການຂະຫຍາຍພັນ, ສືບພັນ, ປັບປຸງພັນ, ພັນທຸກຳ ພືດ ແລະ ໄມ້, ການຈະເລີນເຕີບໂຕ, ຄຸນປະໂຫຍດຂອງ ໄມ້ ແລະ ເຄື່ອງປ່າຂອງດົງ ທາງດ້ານປະລິມານ ແລະ ຄຸນນະພາບ ລວມທັງຄົ້ນຄວ້າຊອກຫາຮູບແບບ ແລະ ກຳນົດມາດຕະຖານເຕັກນິກ ທີ່ມີປະສິດທິຜົນ ໃນການປົກປັກຮັກສາ ແລະ ພັດທະນາປ່າໄມ້. ຮ່ວມມື ໃນການຄົ້ນຄວ້າກັບພາກສ່ວນ ເອກະຊົນ, ບັນດາບໍລິສັດ ແລະ ສະຖາບັນຄົ້ນຄວ້າ ເຊັ່ນ ບໍລິສັດ ບົວລະພາ ກະສິກຳ-ປ່າໄມ້ ຈຳກັດ, ບໍລິສັດ ແມ່ຂອງປູກໄມ້ ຈຳກັດ, ບໍລິສັດ ສະໂຕຣາເອັນໂຊ ແລະ ສູນຄົ້ນຄວ້າກະສິກຳ ສາກົນ ຂອງປະເທດອົດສະຕາລີ (ACIAR) ໂດຍໄດ້ມີ ການຄົ້ນຄວ້າທົດລອງແນວພັນໄມ້ໃຫຍ່ໄວ ທີ່ສາມາດທົນຕໍ່ ພະຍາດ ແລະ ແມງໄມ້ ສັດຕູພືດ, ເຕັກນິກການປູກ, ໄລຍະຫ່າງການປູກ ແລະ ການປູກແບບປະສົມປະສານກັບພືດກະສິກຳ;
- ບົດບາດ ຍິງ-ຊາຍ ໄດ້ຮັບການສົ່ງເສີມ ແລະ ເຊື່ອມໂຍງ ເຂົ້າໃນການວາງແຜນພັດທະນາໃນຂະແໜງການປ່າໄມ້ ໃນແຕ່ລະໄລຍະ. ຖືສຳຄັນ ບົດບາດ ແລະ ການມີສ່ວນຮ່ວມຂອງເພດຍິງ ໃນການຈັດຕັ້ງປະຕິບັດວຽກງານປ່າໄມ້ ໂດຍສະເພາະ ແມ່ນກິດຈະກຳທີ່ສ້າງລາຍຮັບໃຫ້ແກ່ ແມ່ຍິງບັນດາເຜົ່າ ເຊັ່ນ ຫັດຖະກຳຫວາຍ ແລະ ໄມ້ປ່ອງ, ຕ່ຳຫູກ, ປູກຝັງ, ລ້ຽງສັດ ແລະ ການເກັບກູ້ ເຄື່ອງປ່າຂອງດົງ;
- ສ້າງ ແລະ ປັບປຸງ ກອງທຶນ ພັດທະນາ ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຊຶ່ງສາມາດ ສະສົມທຶນ ແລະ ລະດົມທຶນຈາກບັນດາກິດຈະການປ່າໄມ້ ແລະ ກິດຈະການທີ່ກ່ຽວຂ້ອງກັບ ການນຳໃຊ້ຊັບພະຍາກອນປ່າໄມ້ ລວມທັງການປະກອບສ່ວນຈາກ ພາຍໃນ ແລະ ຕ່າງປະເທດ, ໄດ້ປັບປຸງນິຕິກຳ ກ່ຽວກັບ ກອງທຶນພັດທະນາ ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ມາເປັນ ກອງທຶນປົກປັກຮັກສາປ່າໄມ້ ເພື່ອໃຫ້ແທດເໝາະກັບສະພາບຕົວຈິງໃນປະຈຸບັນ , ລວມທັງການປັບປຸງ ລະບົບການຄຸ້ມຄອງກອງທຶນ ໃຫ້ມີຄວາມຄ່ອງຕົວ, ວ່ອງໄວ, ຍຸຕິທຳ ແລະ ໂປ່ງໃສ, ຮັບປະກັນ ການນຳໃຊ້ໃຫ້ມີປະສິດທິຜົນ ແລະ ຕາມແຜນການປະຈຳແຕ່ລະປີ. ນັບແຕ່ ກອງທຶນໄດ້ຮັບການ

ສ້າງຕັ້ງ ໃນປີ 2005 ເປັນຕົ້ນມາ ສາມາດປະຕິບັດເກັບລາຍຮັບໄດ້ທັງໝົດ ປະມານ 98 ຕື້ ກີບ ແລະ ໄດ້ສະໜອງໃຫ້ບັນດາໂຄງການ ຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ປ່າໄມ້ ຕາມແຜນການຂອງແຕ່ລະປີ ສຳເລັດ 100%;

- ສຳເລັດການຈັດຕັ້ງປະຕິບັດວຽກງານຈຸດສຸມ ຂອງແຜນງານຫຼຸດຜ່ອນທາດອາຍເຮືອນແກ້ວຈາກການທຳລາຍປ່າໄມ້ (REDD+) ປະກອບດ້ວຍ 3 ວຽກ ເຊັ່ນ 1). ການສ້າງຄວາມພ້ອມ ຊຶ່ງປະກອບມີ ຍຸດທະສາດການຫຼຸດຜ່ອນທາດອາຍເຮືອນແກ້ວຈາກການທຳລາຍປ່າໄມ້, ກຳນົດລະດັບທຽບຖານການປ່ອຍທາດອາຍເຮືອນແກ້ວ (REL), ລະບົບຕິດຕາມການປ່ຽນແປງປ່າໄມ້ແຫ່ງຊາດ ແລະ ລະບົບການຄຸ້ມຄອງວຽກງານປົກປ້ອງ ສັງຄົມ ແລະ ສິ່ງແວດລ້ອມ; 2). ສຳເລັດການປະເມີນ ການຫຼຸດຜ່ອນທາດອາຍເຮືອນແກ້ວຈາກການທຳລາຍປ່າໄມ້ ຄັ້ງທຳອິດ (ແຕ່ປີ 2015-2018) ເຫັນວ່າ ມີປະລິມານການປ່ອຍອາຍກາກໂບນິກລຸດລົງ ຈຳນວນ 14 ລ້ານໂຕນ; 3). ສຳເລັດ ການເຊັນສັນຍາ ຊື້ ຂາຍ ສິນເຊື່ອກາກບອນປ່າໄມ້ ຮ່ວມກັບທະນາຄານໂລກ ຢູ່ 6 ແຂວງພາກເໜືອ ຊຶ່ງມີມູນຄ່າສັນຍາທັງໝົດ 42 ລ້ານ ໂດລາສະຫະລັດ;
- ການຮ່ວມມື ແລະ ການປະສານງານ ກັບບັນດາຂະແໜງການກ່ຽວຂ້ອງ ແລະ ຄູ່ຮ່ວມພັດທະນາ ທັງພາຍໃນ ແລະ ຕ່າງປະເທດ ເພື່ອຈັດຕັ້ງປະຕິບັດ ບັນດາສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນທີ່ກ່ຽວຂ້ອງ ເປັນຕົ້ນ CBD, UNCCD, CITES, UNFCCC, ສົນທິສັນຍາກ່ຽວກັບພື້ນທີ່ດິນບໍລິເວນນ້ຳທີ່ມີຄວາມສຳຄັນໃນລະດັບສາກົນ ທີ່ກຳນົດກອບໜ້າວຽກ (Ramsar) ໂດຍສະເພາະ ໃນຊ່ວງປີ 2009-2020 ໄດ້ຮັບຮອງເອົາຍຸດທະສາດ ແລະ ແຜນດຳເນີນງານຊີວະນານາພັນແຫ່ງຊາດ, ແຜນງານຄຸ້ມຄອງເສືອໂຄ່ງ, ແຜນງານອະນຸລັກຊ້າງອາຊີ, ແຜນງານຫຼຸດຜ່ອນທາດອາຍເຮືອນແກ້ວຈາກການທຳລາຍປ່າໄມ້ (REDD+) ແລະ ສາມາດຍາດແຍ່ງທຶນໄດ້ ໃນມູນຄ່າ ປະມານ 313 ລ້ານໂດລາສະຫະລັດ ແລະ ໄດ້ສຳເລັດການຈັດຕັ້ງປະຕິບັດຫຼາຍແຜນງານປ່າໄມ້, ຊຶ່ງວຽກງານອັນພົ້ນເດັ່ນ 1) ໂຄງການ ຄຸ້ມຄອງປ່າຜະລິດແບບຍືນນານ; 2) ໂຄງການ ຄຸ້ມຄອງລະບົບປ່າສະຫງວນ ໂດຍສະເພາະ ການສ້າງເປັນອຸທິຍານແຫ່ງຊາດ ແລະ ທ່ອງທ່ຽວແບບອະນຸລັກທຳມະຊາດ; 3) ໂຄງການອະນຸລັກ ເສືອໂຄ່ງແຫ່ງຊາດ; 4) ໂຄງການຫຼຸດຜ່ອນທາດອາຍເຮືອນແກ້ວຈາກການທຳລາຍປ່າໄມ້ (REDD+); 5) ໂຄງການ ຄຸ້ມຄອງປ່າໄມ້ຂັ້ນບ້ານ; 6) ໂຄງການ ປົກປັກຮັກສາ ແລະ ນຳໃຊ້ລະບົບນິເວດ ປ່າໄມ້ ແລະ ຊີວະນານາພັນແບບຍືນຍົງ (ProFEB); 7) ໂຄງການຫວາຍ ແລະ ໄມ້ປ່ອງແຫ່ງຊາດ ແລະ ໂຄງການຍ່ອຍອື່ນໆ ທີ່ກະຈາຍຢູ່ທ້ອງຖິ່ນ. ຄູ່ຮ່ວມພັດທະນາທັງພາຍໃນ ແລະ ຕ່າງປະເທດ ທີ່ສຳຄັນປະກອບມີ ອົງການ WB, KfW, GIZ, JICA, AFoCO, FAO, UNDP, SIDA, ADB, ACIAR, SDC, EU, EFI, RECOFTC, APFNet, IUCN, WCS, WWF, VFI, GRET, ລັດຖະບານແຟງລັງ (Finland) ແລະ ອົງການຈັດຕັ້ງທາງສັງຄົມ ອື່ນໆ (CSOs).

## 1.2 ປັດໄຈທີ່ພາໃຫ້ມີຜົນສຳເລັດ

ຜົນສຳເລັດ ຂອງການຈັດຕັ້ງປະຕິບັດ ຍຸດທະສາດປ່າໄມ້ ຮອດປີ 2020 ດັ່ງທີ່ກ່າວມາຂ້າງເທິງນັ້ນ ແມ່ນຍ້ອນປັດໄຈທີ່ສຳຄັນ ດັ່ງລຸ່ມນີ້:

1) ພັກ ແລະ ລັດຖະບານ ໄດ້ກຳນົດ ແນວທາງນະໂຍບາຍ, ກົດໝາຍ, ນິຕິກຳລຸ່ມກົດໝາຍ, ຍຸດທະສາດ ແລະ ແຜນພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດ ແຕ່ລະໄລຍະ ເພື່ອເປັນ ບ່ອນອີງ ແລະ ເຄື່ອງມື ສຳລັບການຈັດຕັ້ງປະຕິບັດ, ຊຸກຍູ້ ແລະ ອຳນວຍຄວາມສະດວກ ໃຫ້ທຸກພາກສ່ວນທັງ ພາຍໃນ ແລະ ຕ່າງປະເທດ ໄດ້ເຂົ້າຮ່ວມຢ່າງຕັ້ງໜ້າ;
2) ມີການຊີ້ນຳ-ນຳພາ ຂອງພັກ-ລັດ ໃນຂະແໜງການກະສິກຳ ແລະ ປ່າໄມ້ ທຸກຂັ້ນຕໍ່ການຈັດຕັ້ງປະຕິບັດບັນດາແຜນງານ, ແຜນດຳເນີນງານ ແລະ ໂຄງການ ທີ່ໄດ້ກຳນົດໃນ ຍຸດທະສາດປ່າໄມ້ ເປັນປົກກະຕິ ແລະ ຕໍ່ເນື່ອງ ຈຶ່ງເຮັດໃຫ້ວຽກງານ ປ່າໄມ້ ແລະ ທີ່ດິນປ່າໄມ້ ໄດ້ຮັບການຄຸ້ມຄອງ ຢ່າງເປັນລະບົບເປັນກ້າວໆມາ;

3) ໂຄງປະກອບການຈັດຕັ້ງ ໃນຂະແໜງການປ່າໄມ້ ໄດ້ຮັບການປັບປຸງ ເປັນແຕ່ລະໄລຍະ ເພື່ອໃຫ້ ສອດຄ່ອງກັບສະພາບການຕົວຈິງ. ຖັນແຖວພະນັກງານບໍລິຫານ, ຄຸ້ມຄອງ ແລະ ວິຊາການ ໄດ້ຮັບການກໍ່ສ້າງ, ບຳລຸງ ແລະ ຍົກລະດັບຢູ່ ພາຍໃນ ແລະ ຕ່າງປະເທດ ຢ່າງຕໍ່ເນື່ອງ;

4) ມີການນຳໃຊ້ ຜົນການຄົ້ນຄວ້າ ດ້ານວິທະຍາສາດ, ເຕັກນິກ-ເຕັກໂນໂລຊີ ທີ່ທັນສະໄໝ ແລະ ນະວັດຕະກຳໃໝ່ ເຂົ້າໃນການຄຸ້ມຄອງ, ຕິດຕາມ ແລະ ກວດກາ ປ່າໄມ້ ແລະ ທີ່ດິນປ່າໄມ້ ນັບມື້ຂະຫຍາຍຕົວ ແລະ ໄດ້ຮັບການພັດທະນາຂຶ້ນ;

5) ໄດ້ຮັບການຮ່ວມມື ແລະ ສະໜັບສະໜຸນ ທາງດ້ານວິຊາການ ແລະ ງົບປະມານ ຈາກຄູ່ຮ່ວມພັດທະນາ ທັງພາຍໃນ ແລະ ຕ່າງປະເທດ ພ້ອມທັງມີການລົງທຶນໃສ່ວຽກງານປ່າໄມ້ ຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ມີທ່າອ່ຽງເພີ່ມຂຶ້ນ;

6) ມີການປະກອບສ່ວນ, ປະສານສົມທົບ ແລະ ເປັນເຈົ້າການ ຂອງຂະແໜງການທີ່ກ່ຽວຂ້ອງ ແລະ ທຸກພາກສ່ວນໃນສັງຄົມ ໂດຍສະເພາະປະຊາຊົນບັນດາເຜົ່າ.

## 1.3 ຂໍ້ຄົງຄ້າງ ແລະ ສາເຫດ

ຄຽງຄູ່ກັບ ບັນດາຜົນສຳເລັດ ດັ່ງທີ່ກ່າວໄວ້ໃນຂ້າງເທິງນັ້ນ, ການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ປ່າໄມ້ ແລະ ທີ່ດິນປ່າໄມ້ ຍັງມີບາງຂໍ້ຄົງຄ້າງ ທີ່ສຳຄັນຄື:

1) ການປົກປັກຮັກສາ ປ່າໄມ້ ແລະ ທີ່ດິນປ່າໄມ້ ຍັງບໍ່ທັນປະຕິບັດຕາມ ຫຼັກການ ແລະ ລະບຽບການກຳນົດ ເປັນຕົ້ນ ກຳນົດຂອບເຂດເນື້ອທີ່ດິນປ່າໄມ້ປະເພດຕ່າງໆ ທັງໃນ ແລະ ນອກເຂດ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ສ່ວນຫຼາຍຍັງບໍ່ທັນໄດ້ປະຕິບັດໃນພາກສະໜາມ, ປ່າປ້ອງກັນ ແລະ ປ່າສະຫງວນ ສ່ວນຫຼາຍບໍ່ທັນມີແຜນຈັດສັນ, ບໍ່ໄດ້ຕິດປ້າຍ ແລະ ປັກຫຼັກໝາຍ ເຮັດໃຫ້ເກີດມີການຫັນປ່ຽນ ການນຳໃຊ້ ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ບໍ່ຖືກຕ້ອງຕາມກົດໝາຍ;

2) ການຄຸ້ມຄອງ ແລະ ກວດກາ ການນຳໃຊ້ ປ່າໄມ້ ແລະ ທີ່ດິນປ່າໄມ້ ຍັງບໍ່ປະຕິບັດຕາມ ກົດໝາຍ ແລະ ລະບຽບການ ກຳນົດຢ່າງເຂັ້ມງວດ ເຮັດໃຫ້ ປ່າໄມ້ ແລະ ທີ່ດິນປ່າໄມ້ ຍັງສືບຕໍ່ຖືກບຸກລຸກ ແລະ ຖືກທຳລາຍຢ່າງຕໍ່ເນື່ອງ ສິ່ງຜົນເຮັດໃຫ້ ທີ່ດິນປ່າໄມ້ຫຼຸດລົງ, ປ່າໄມ້ເສື່ອມຄຸນຄ່າ ດ້ານເສດຖະກິດ, ດ້ານຊີວະນານາພັນ ແລະ ຄຸນຄ່າດ້ານນິເວດວິທະຍາ;

3) ການພັດທະນາປ່າໄມ້ ຍັງບໍ່ທັນເປັນລະບົບ ແລະ ຊ່ວຍໜູນໃຫ້ ອຸດສາຫະກຳປຸງແຕ່ງໄມ້ ມີຄວາມເຂັ້ມແຂງ ໂດຍສະເພາະ ການປູກໄມ້ທົດແທນໄມ້ທຳມະຊາດ ເພື່ອສະໜອງວັດຖຸດິບເຂົ້າໃນຜະລິດຕະພັນໄມ້ ຊົມໃຊ້ພາຍໃນ ແລະ ສົ່ງອອກ ໃຫ້ກວ້າງຂວາງ;

4) ການພັດທະນາຂະແໜງການປ່າໄມ້ ຍັງບໍ່ທັນເຂັ້ມແຂງເທົ່າທີ່ຄວນ ໂດຍສະເພາະ ນະໂຍບາຍ ແລະ ນິຕິກຳ ກ່ຽວກັບປ່າໄມ້, ກົງຈັກການຈັດຕັ້ງ ແລະ ພັດທະນາບຸກຄະລາກອນ, ງົບປະມານ ບໍ່ພຽງພໍກັບຄວາມຮຽກຮ້ອງຕ້ອງການ ແລະ ການຫັນພະນັກງານລົງປະຈຳແຕ່ລະເຂດປ່າໄມ້ແມ່ນ ປະຕິບັດໄດ້ຢູ່ບາງເຂດເທົ່ານັ້ນ.

ບັນດາຂໍ້ຄົງຄ້າງທັງໝົດທີ່ກ່າວມານັ້ນ ກ່ຽວຂ້ອງກັບ ຫຼາຍສາເຫດ ທີ່ມີລັກສະນະ ພາວະວິໄສ ແລະ ອັດຕະວິໄສ ທີ່ກ່ຽວໂຍງ ຊຶ່ງກັນ ແລະ ກັນ, ແຕ່ສາເຫດສຳຄັນມີດັ່ງນີ້:

1) ການຈັດຕັ້ງປະຕິບັດນະໂຍບາຍແຫ່ງຊາດ ກ່ຽວກັບການນຳໃຊ້ທີ່ດິນ ແລະ ການວາງແຜນນຳໃຊ້ທີ່ດິນແບບຍືນຍົງ ໃນລະດັບ ມະຫາພາກ ແລະ ທ້ອງຖິ່ນ ຍັງຊັກຊ້າ, ໂດຍສະເພາະ ການຈັດສັນເນື້ອທີ່ດິນແຕ່ລະປະເພດ ຕາມທີ່ກົດໝາຍ ວ່າດ້ວຍທີ່ດິນ ແລະ ແຜນແມ່ບົດການຈັດສັນທີ່ດິນແຫ່ງຊາດ ໄດ້ກຳນົດ;

2) ການຕ້ານ ແລະ ສະກັດກັ້ນການ ບຸກລຸກ ແລະ ທຳລາຍປ່າໄມ້ ແລະ ເຮັດໃຫ້ປ່າໄມ້ຊຸດໂຊມ ຍັງບໍ່ເຂັ້ມງວດ ຍ້ອນປັດໄຈຕົ້ນຕໍ ຄື:

- ຄວາມຕ້ອງການທີ່ດິນ ເພື່ອທຳການຜະລິດມີສູງ ແຕ່ການຈັດສັນທີ່ດິນ ກະສິກຳ ແລະ ປ່າໄມ້ ເພື່ອທຳການຜະລິດເປັນສິນຄ້າ ຍັງບໍ່ທັນໄປຕາມ ກົດໝາຍ, ລະບຽບການ ແລະ ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ຢ່າງເຂັ້ມງວດ;
- ປະຊາຊົນທີ່ອາໄສຢູ່ໃນເຂດປ່າໄມ້ ສ່ວນຫຼາຍຍັງທຸກຍາກ, ນຳໃຊ້ຮູບແບບການຜະລິດກະສິກຳ ແບບເລື່ອນລອຍ ແລະ ຍັງຂາດທາງເລືອກອື່ນໆ ໃນການທຳມາຫາກິນເພື່ອລ້ຽງຊີບ;
- ຄວາມຈຳເປັນໃນການຫັນປ່ຽນທີ່ດິນປ່າໄມ້ ເພື່ອພັດທະນາເສດຖະກິດ-ສັງຄົມ ນັບມື້ນັບສູງ, ແຕ່ການວາງແຜນນຳໃຊ້ ແລະ ຈັດສັນ ທີ່ດິນ ເພື່ອຮອງຮັບການລົງທຶນຍັງບໍ່ທັນສຳເລັດ ເຮັດໃຫ້ ເກີດມີການບຸກລຸກ ແລະ ທຳລາຍ ປ່າໄມ້ ແລະ ທີ່ດິນປ່າໄມ້ ໃນຫຼາຍຮູບແບບ;

3) ການກຳນົດເຂດ ປູກໄມ້, ຟື້ນຟູປ່າ ແລະ ເຂດອະນຸຍາດ ໃຫ້ເຊົ່າ ຫຼື ສຳປະທານ ເພື່ອປູກ ໄມ້ ແລະ ເຄື່ອງປ່າຂອງດົງ ຍັງບໍ່ທັນລະອຽດ, ເຮັດໃຫ້ການຜັນຂະຫຍາຍນະໂຍບາຍສົ່ງເສີມ ການລົງທຶນປູກໄມ້ ຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍ ຕາມທີ່ກຳນົດໄວ້ໃນ ກົດໝາຍ ເທົ່າທີ່ຄວນ, ຈຶ່ງເຮັດໃຫ້ການປູກໄມ້ ແລະ ຟື້ນຟູປ່າ ເພື່ອເປັນສິນຄ້າ ແລະ ປົກປັກຮັກສາສິ່ງແວດລ້ອມ ຍັງບໍ່ທັນເປັນຂະບວນຟົດຟື້ນ;
4) ຄຸນນະພາບການຜະລິດ ຂອງໂຮງງານອຸດສາຫະກຳປຸງແຕ່ງ ໄມ້ ແລະ ເຄື່ອງປ່າຂອງດົງ ຍັງບໍ່ທັນໄດ້ຮັບການປັບປຸງ ແລະ ພັດທະນາເທົ່າທີ່ຄວນ, ການດຸ່ນດ່ຽງຄວາມຕ້ອງການດ້ານວັດຖຸດິບ ຂອງໂຮງງານປຸງແຕ່ງໄມ້ກັບຄວາມອາດສາມາດຕອບສະໜອງວັດຖຸດິບ ຍັງບໍ່ທັນສົມຄູ່ກັນ, ຈຶ່ງນຳໄປສູ່ການລັກລອບ ຕັດໄມ້ ແລະ ທຳລາຍປ່າໄມ້;
5) ການໂຄສະນາເຜີຍແຜ່ ນະໂຍບາຍ, ກົດໝາຍ, ລະບຽບການ ແລະ ການປູກຈິດສຳນຶກ ກ່ຽວກັບວຽກງານອະນຸລັກ, ປົກປັກຮັກສາ ແລະ ນຳໃຊ້ປ່າໄມ້ ແບບຍືນຍົງ ຍັງບໍ່ທັນເຂົ້າເຖິງທົ່ວສັງຄົມ ເທົ່າທີ່ຄວນ ໂດຍສະເພາະ ປະຊາຊົນບັນດາເຜົ່າທີ່ດຳລົງຊີວິດໃນເຂດປ່າໄມ້. ສະນັ້ນ, ຈຶ່ງເຮັດໃຫ້ມີຊ່ອງຫວ່າງ ແລະ ສວຍໂອກາດ ລັກລອບ ຂຸດຄົ້ນ, ເຄື່ອນຍ້າຍ, ຊື້ ຂາຍ ແລະ ສົ່ງອອກ ໄມ້, ເຄື່ອງປ່າຂອງດົງ, ສັດນ້ຳ ແລະ ສັດປ່າ ທີ່ຜິດກົດໝາຍ ແລະ ລະບຽບການ;
6) ການຈັດຕັ້ງປະຕິບັດໜ້າທີ່ການເມືອງ ຂອງຂະແໜງການປ່າໄມ້ ຍັງບໍ່ທັນເຂັ້ມແຂງ, ເປັນລະບົບຄົບຊຸດ, ຍັງບໍ່ສາມາດນຳໃຊ້ ເຕັກໂນໂລຊີ ແລະ ນະວັດຕະກຳ ເຂົ້າໃນການຈັດຕັ້ງປະຕິບັດວຽກງານ ເທົ່າທີ່ຄວນ, ການປະສານງານໃນການຄຸ້ມຄອງວຽກງານ ປ່າໄມ້ ແລະ ທີ່ດິນປ່າໄມ້ ລະຫວ່າງ ຂະແໜງການທີ່ກ່ຽວຂ້ອງ ເຊັ່ນຂະແໜງການ ກະສິກຳ ແລະ ປ່າໄມ້, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ສາທາລະນະສຸກ, ພະລັງງານ ແລະ ບໍ່ແຮ່, ອຸດສາຫະກຳ ແລະ ການຄ້າ ໃນລະດັບ ສູນກາງ ແລະ ທ້ອງຖິ່ນ ຍັງບໍ່ທັນກົມກຽວເທົ່າທີ່ຄວນ;
7) ການສະໜອງງົບປະມານ ແລະ ການລົງທຶນ ຂອງລັດ ເຂົ້າໃນວຽກງານ ປົກປັກຮັກສາ ແລະ ພັດທະນາ ປ່າໄມ້ ຍັງມີບໍ່ພຽງພໍ, ສ່ວນຫຼາຍ ແມ່ນນຳໃຊ້ງົບປະມານ ຈາກການຊ່ວຍເຫຼືອຂອງຕ່າງປະເທດ ທີ່ມີເປົ້າໝາຍ, ຈຸດປະສົງ ແລະ ເງື່ອນໄຂ ການນຳໃຊ້ສະເພາະ. ນອກຈາກນັ້ນ, ຂອດການປະສານງານ ແລະ ແລກປ່ຽນຂໍ້ມູນຂ່າວສານ ແຕ່ລະໂຄງການ ຍັງບໍ່ໄດ້ກົມກຽວເທົ່າທີ່ຄວນ ເຮັດໃຫ້ການປະຕິບັດວຽກງານຂອງໂຄງການບາງກໍລະນີ ມີລັກສະນະທັບຊ້ອນ ແລະ ບາງກໍລະນີບໍ່ລວມສູນ;
8) ການຊຸກຍູ້ ແລະ ສົ່ງເສີມ ການຈັດສັນພູມລຳເນົາ ແລະ ອາຊີບ ໃຫ້ປະຊາຊົນບັນດາເຜົ່າ ທີ່ອາໄສຢູ່ໃນເຂດປ່າໄມ້ ເພື່ອສ້າງເສດຖະກິດຄອບຄົວ ດ້ວຍການຜະລິດເປັນສິນຄ້າ ແລະ ສ້າງເສດຖະກິດຮ່ວມມື ຮູບແບບຕ່າງໆທີ່ເໝາະສົມ ຕາມທ່າແຮງຂອງແຕ່ລະທ້ອງຖິ່ນ ບໍ່ທັນໄດ້ເຮັດເປັນຂະບວນຢ່າງກ້ວາງຂວາງ.

## 1.4 ບົດຮຽນທີ່ຖອດຖອນໄດ້

1) ການສຶກສາອົບຮົມ ການເມືອງແນວຄິດ ໃຫ້ແກ່ສະມາຊິກພັກ, ພະນັກງານ-ລັດຖະກອນ ເພື່ອໃຫ້ ເປັນເຈົ້າການຈັດຕັ້ງປະຕິບັດໜ້າທີ່ຂອງຕົນ ຖືເປັນປັດໄຈ ຕັດສິນຜົນສຳເລັດ ໃນການຈັດຕັ້ງປະຕິບັດວຽກງານ;

2) ການໂຄສະນາເຜີຍແຜ່ ແລະ ເພີ່ມຄວາມເຂັ້ມງວດ ໃນການຈັດຕັ້ງປະຕິບັດ ແນວທາງ ນະໂຍບາຍ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານປ່າໄມ້ ໃຫ້ແກ່ສັງຄົມ ເພື່ອຮັບຮູ້, ເຊື່ອມຊຶມ, ເຂົ້າໃຈ ແລະ ເຂົ້າຮ່ວມ ຖືເປັນບົດຮຽນທີ່ສຳຄັນ ໃນການລະດົມຊຸກຍູ້ໃຫ້ທົ່ວສັງຄົມ ເຂົ້າຮ່ວມໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ປ່າໄມ້;

3) ການຜັນຂະຫຍາຍ ນະໂຍບາຍ ແລະ ຍຸດທະສາດ ອອກເປັນ ແຜນງານ, ແຜນດຳເນີນງານ ແລະ ໂຄງການລະອຽດ ພ້ອມທັງຈັດສັນງົບປະມານໃຫ້ພຽງພໍ ແລະ ມອບໝາຍຄວາມຮັບຜິດຊອບ ໃຫ້ບຸກຄົນ ຫຼື ການຈັດຕັ້ງ ເພື່ອຊຸກຍູ້, ຕິດຕາມ, ກວດກາ ການຈັດຕັ້ງປະຕິບັດເປັນປະຈຳ ຖືເປັນບົດຮຽນທີ່ສຳຄັນໜຶ່ງ ທີ່ນຳໄປສູ່ຜົນສຳເລັດ;

4) ການປັບປຸງກົງຈັກການຈັດຕັ້ງ ຕິດພັນກັບການພັດທະນາ ຄວາມຮູ້ຄວາມສາມາດ ຂອງພະນັກງານ ແລະ ການຫັນພະນັກງານລົງປະຈຳທ້ອງຖິ່ນ ໂດຍສະເພາະຢູ່ໃນເຂດ 3 ປະເພດປ່າ ຖືເປັນມາດ ຕະການອັນສຳຄັນ ໃນການ ຄຸ້ມຄອງ ແລະ ປົກປັກຮັກສາ ຊັບພະຍາກອນປ່າໄມ້;

5) ການວາງແຜນນຳໃຊ້ທີ່ດິນ ຢ່າງເປັນລະບົບຄົບຊຸດ, ກົມກຽວ ໂດຍການເຊື່ອມໂຍງ ກັບທຸກຂະແໜງການ ຕາມແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ຖືເປັນວຽກງານບູລິມະສິດ ໃນການກຳນົດ ຂອບເຂດທີ່ດິນປ່າໄມ້, ຄຸ້ມຄອງປ່າໄມ້ ຢ່າງມີປະສິດທິພາບ ແລະ ສົ່ງເສີມການຜະລິດເປັນສິນຄ້າ;

6) ການປັບປຸງ ຊີວິດການເປັນຢູ່ ຂອງປະຊາຊົນບັນດາເຜົ່າ ທີ່ດຳລົງຊີວິດ ຢູ່ໃນເຂດປ່າໄມ້ ໂດຍການ ຈັດສັນອາຊີບຄົງທີ່ ແລະ ຊຸກຍູ້ສົ່ງເສີມການຜະລິດເປັນສິນຄ້າ ບົນພື້ນຖານທ່າແຮງ ຂອງແຕ່ລະ ທ້ອງຖິ່ນ ຖືເປັນບົດຮຽນທີ່ສຳຄັນ ໃນການແກ້ໄຂບັນຫາການບຸກລຸກ ທຳລາຍປ່າໄມ້ ແລະ ເພີ່ມທະວີ ຄວາມເປັນເຈົ້າການຂອງປະຊາຊົນ ໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາ ປ່າໄມ້;

7) ການຂົນຂວາຍ ຍາດແຍ່ງ ການຮ່ວມມື, ລົງທຶນ, ສະສົມທຶນ ແລະ ລະດົມທຶນ ຈາກບັນດາກິດຈະການປ່າໄມ້ ແລະ ກິດຈະການທີ່ກ່ຽວຂ້ອງກັບ ການນຳໃຊ້ຊັບພະຍາກອນປ່າໄມ້ ລວມທັງ ການສ້າງ ລາຍຮັບຈາກ ການຈ່າຍຄ່າບໍລິການລະບົບນິເວດປ່າໄມ້ ເຂົ້າໃນວຽກງານ ຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາປ່າໄມ້ ໃຫ້ພຽງພໍ ຖືເປັນວຽກງານທີ່ ສຳຄັນ ແລະ ຈຳເປັນ ທີ່ຈະຕ້ອງໄດ້ເສີມ ຂະຫຍາຍ ແລະ ສືບຕໍ່ຈັດຕັ້ງປະຕິບັດ ຕາມແນວທາງຂອງ ພັກ ແລະ ລັດຖະບານ.

## ພາກທີ II: ທິດນໍາ, ວິໄສທັດ, ເປົ້າໝາຍ, ຄາດຄະເນຜົນໄດ້ຮັບ ແລະ ແຜນຍຸດທະສາດ

ການສ້າງ ຍຸດທະສາດປ່າໄມ້ ຮອດປີ 2035 ແລະ ວິໄສທັດ ຮອດປີ 2050 ສະບັບນີ້ ແມ່ນອີງໃສ່ ທິດນໍາຂອງພັກ ຕໍ່ກັບວຽກງານ ປ່າໄມ້ ແລະ ທີ່ດິນປ່າໄມ້, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນພັດທະນາຊົນນະບົດ ແລະ ລຶບລ້າງຄວາມທຸກຍາກແຫ່ງຊາດ, ການພັດທະນາແບບຍືນຍົງຂອງຊາດ ແລະ ສາກົນ ແລະ ຜົນກະທົບຈາກການປ່ຽນແປງດິນຟ້າອາກາດ. ນອກຈາກນັ້ນ, ຍັງອີງໃສ່ ການຕີລາຄາສະພາບລວມ ກ່ຽວກັບການຈັດຕັ້ງປະຕິບັດ ຍຸດທະສາດປ່າໄມ້ ໃນໄລຍະຜ່ານມາ, ບົດບາດຄວາມສໍາຄັນຂອງ ປ່າໄມ້ ແລະ ທີ່ດິນປ່າໄມ້, ປຶກສາຫາລື ກັບບັນດາຂະແໜງການທີ່ກ່ຽວຂ້ອງ ແລະ ຄູ່ຮ່ວມພັດທະນາ.

ອົງປະກອບສໍາຄັນຕົ້ນຕໍຂອງ ຍຸດທະສາດປ່າໄມ້ ສະບັບນີ້ ປະກອບມີ ວິໄສທັດ, ເປົ້າໝາຍ ແລະ ຄາດຄະເນຜົນໄດ້ຮັບ. ພ້ອມດຽວກັນນີ້, ກໍ່ໄດ້ກໍານົດ ແຜນຍຸດທະສາດ, ແຜນວຽກຈຸດສຸມ ແລະ ໂຄງການບູລິມະສິດ ທີ່ຈະຕ້ອງມີການຈັດຕັ້ງປະຕິບັດ ເພື່ອໃຫ້ບັນລຸເປົ້າໝາຍ ແລະ ຜົນໄດ້ຮັບທີ່ກໍານົດໄວ້.

## 2.1 ທິດນໍາ

ທິດທາງ ຂອງການສ້າງ ຍຸດທະສາດປ່າໄມ້ ຮອດປີ 2035 ແລະ ວິໄສທັດ ຮອດປີ 2050 ແມ່ນລົງເລິກ ປະກອບສ່ວນ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ບັນດາທິດທາງນະໂຍບາຍ ດັ່ງນີ້:

- ມະຕິ ຂອງຄະນະບໍລິຫານງານສູນກາງພັກ ສະບັບເລກທີ 026/ຄບສພ, ລົງວັນທີ 03 ສິງຫາ 2017 ວ່າດ້ວຍການເພີ່ມທະວີວຽກງານ ຄຸ້ມຄອງ ແລະ ພັດທະນາທີ່ດິນ ໃນໄລຍະໃໝ່ ຊຶ່ງມະຕິດັ່ງກ່າວ ໄດ້ເລັ່ງໃສ່ ກໍານົດແຜນຍຸດທະສາດ ແລະ ແຜນການນໍາໃຊ້ທີ່ດິນແຕ່ລະປະເພດ ໃຫ້ສົມເຫດສົມຜົນ, ໂດຍຮັກສາເນື້ອທີ່ດິນປ່າໄມ້ກວມ 70% ຂອງເນື້ອທີ່ທົ່ວປະເທດ.
- ມະຕິ ຂອງກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ໄດ້ສຸມໃສ່ ການພັດທະນາຊັບພະຍາກອນມະນຸດ ໃຫ້ມີຄຸນນະພາບ ເພື່ອເປັນປັດໄຈ ຊຸກຍູ້ ການພັດທະນາເສດຖະກິດ-ສັງຄົມ, ພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າ, ປົກປັກຮັກສາ ແລະ ນໍາໃຊ້ ຊັບພະຍາກອນທໍາມະຊາດ ຢ່າງສົມເຫດສົມຜົນ, ຍືນຍົງ, ປະຢັດ ແລະ ມີປະສິດທິຜົນສູງສຸດ.
- ວິໄສທັດ ຮອດປີ 2030 ແລະ ຍຸດທະສາດການພັດທະນາເສດຖະກິດສັງຄົມ ໄລຍະ 10 ປີ (2016-2025) ແລະ ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ຂອງ ສປປ ລາວ ເຖິງປີ 2030[11];
- ມະຕິ ຂອງກົມການເມືອງສູນກາງພັກ[12], ຄໍາສັ່ງຂອງນາຍົກລັດຖະມົນຕີ[13] ແລະ ດໍາລັດວ່າດ້ວມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ[14], ໃນການຄຸ້ມຄອງ, ປົກປັກຮັກສາ ແລະ ນໍາໃຊ້ ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ຢ່າງມີປະສິດທິຜົນ ຍືນຍົງ ແລະ ຖືກຕ້ອງຕາມກົດໝາຍ ຢ່າງເຂັ້ມງວດ ແມ່ນໜຶ່ງໃນມາດຕະການ ແລະ ມາດຕະຖານການສ້າງແຂວງ ເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ;
- ສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ເຊັ່ນ ສົນທິສັນຍາ ວ່າດ້ວຍການປ່ຽນແປງດິນຟ້າອາກາດ (UNFCCC), ວ່າດ້ວຍຊີວະນານາພັນ (CBD), ວ່າດ້ວຍຕ້ານການເປັນທະເລຊາຍ (UNCCD), ວ່າດ້ວຍການຄ້າຂາຍຊະນິດພັນ ສັດປ່າ ແລະ ພືດປ່າ ທີ່ໃກ້ຈະສູນພັນ ລະຫວ່າງຊາດ (CITES), ວ່າດ້ວຍດິນ

---

[11] ເຊິ່ງໄດ້ກໍານົດຕົວຊີ້ວັດ ອັດຕາການປົກຫຸ້ມຂອງປ່າໄມ້ ຈາກ 40,3% ໃນປີ 2010 ເປັນ 70% ໃນປີ 2025

[12] ມະຕິຂອງ ກົມການເມືອງສູນກາງພັກ ກ່ຽວກັບ ການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ, ສະບັບເລກທີ 03/ກມສພ, ລົງວັນທີ 15 ກຸມພາ 2012.

[13] ຄໍາສັ່ງຂອງ ນາຍົກລັດຖະມົນຕີ ວ່າດ້ວຍທິດທາງ, ເປົ້າໝາຍ ແລະ ມາດຕະການສ້າງແຂວງເປັນຫົວໜ່ວຍຍຸດທະສາດ, ສ້າງເມືອງເປັນຫົວໜ່ວຍເຂັ້ມແຂງຮອບດ້ານ, ສ້າງບ້ານເປັນຫົວໜ່ວຍພັດທະນາ, ສະບັບເລກທີ 34/ນຍ, ລົງວັນທີ 23/08/2016.

[14] ດໍາລັດຂອງ ລັດຖະບານ ວ່າດ້ວຍມາດຕະຖານພົ້ນທຸກ ແລະ ມາດຕະຖານພັດທະນາ, ສະບັບເລກທີ 348/ລບ, ລົງວັນທີ 16 ພະຈິກ 2017

ບໍລິເວນນ້ຳ (Ramsar), ວ່າດ້ວຍສິດທິຂອງຊົນເຜົ່າພື້ນເມືອງ (UNDRIP), ບົດສື່ສານແຫ່ງຊາດ (NC) ແລະ ແຜນງານແຫ່ງຊາດໃນການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ (NDC) ຂອງ ສປປ ລາວ ແລະ ອື່ນໆ.

## 2.2 ວິໄສທັດ ຮອດປີ 2050

**"ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ມີຄວາມອຸດົມສົມບູນ ເປັນທ່າແຮງ ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມຂອງຊາດ, ປະກອບສ່ວນ ປັບປຸງຊີວິດການເປັນຢູ່ ແລະ ແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າ, ປົກປັກຮັກສາ ຊີວະນານາພັນ, ສິ່ງແວດລ້ອມ ແລະ ຮັບມືການປ່ຽນແປງດິນຟ້າອາກາດ".**

## 2.3 ເປົ້າໝາຍລວມ ຮອດປີ 2035

ຄຸ້ມຄອງ ແລະ ປົກປັກຮັກສາ ຊັບພະຍາກອນປ່າໄມ້ ບໍ່ໃຫ້ຖືກທຳລາຍ, ຟື້ນຟູບູລະນະ ແລະ ພັດທະນາ ປ່າໄມ້ທີ່ຊຸດໂຊມ ໃຫ້ມີຄວາມອຸດົມສົມບູນ ເປັນແຫຼ່ງສະສົມສິນເຊື່ອກາກບອນ, ບໍລິການທ່ອງທ່ຽວ ແລະ ສະໜອງວັດຖຸດິບ ໃຫ້ແກ່ອຸດສາຫະກຳປຸງແຕ່ງໄມ້ ທີ່ມີການນຳໃຊ້ ເຕັກນິກ, ເຕັກໂນໂລຊີ ແລະ ນະວັດຕະກຳ ທີ່ທັນສະໄໝ ປະກອບສ່ວນຢ່າງແຂງແຮງ ເຂົ້າໃນການສ້າງລາຍຮັບ ກໍຄື ການພັດທະນາເສດຖະກິດ-ສັງຄົມຂອງຊາດ ຕາມທິດສີຂຽວ ແລະ ຍືນຍົງ.

## 2.4 ຄາດໝາຍສູ້ຊົນ ແລະ ຄາດຄະເນຜົນໄດ້ຮັບ

ເພື່ອປະຕິບັດຕາມ ວິໄສທັດ ແລະ ເປົ້າໝາຍລວມ ທີ່ກ່າວມາຂ້າງເທິງ ຮອດປີ 2035 ສູ້ຊົນບັນລຸ 8 ຄາດໝາຍ ດັ່ງລຸ່ມນີ້:

1) ສຳຫຼວດ ແລະ ຈັດສັນ ທີ່ດິນປ່າໄມ້ ໃຫ້ໄດ້ 70% ຂອງເນື້ອທີ່ທົ່ວປະເທດ, ໃນນັ້ນ:
   - ທີ່ດິນປ່າປ້ອງກັນ ຈຳນວນ 8,2 ລ້ານ ເຮັກຕາ ຫຼື ເທົ່າກັບ 35%;
   - ທີ່ດິນປ່າສະຫງວນ ຈຳນວນ 4,7 ລ້ານ ເຮັກຕາ ຫຼື ເທົ່າກັບ 20%;
   - ທີ່ດິນປ່າຜະລິດ ຈຳນວນ 3,1 ລ້ານ ເຮັກຕາ ຫຼື ເທົ່າກັບ 13%;
   - ທີ່ດິນເພື່ອປູກໄມ້ ຈຳນວນ 0,5 ລ້ານ ເຮັກຕາ ຫຼື ເທົ່າກັບ 2%.

2) ຍົກລະດັບຄວາມປົກຫຸ້ມປ່າໄມ້ ໃຫ້ໄດ້ 70% ຂອງເນື້ອທີ່ທົ່ວປະເທດ, ໃນນັ້ນ:
   - ຄຸ້ມຄອງ ແລະ ປົກປັກຮັກສາປ່າໄມ້ ທີ່ມີຢູ່ໃນປະຈຸບັນ ຈຳນວນ 14,7 ລ້ານ ເຮັກຕາ ຫຼື ເທົ່າກັບ 62% ບໍ່ໃຫ້ຖືກທຳລາຍ ແລະ ຊຸດໂຊມ;
   - ຟື້ນຟູປ່າໄມ້ທຳມະຊາດ ທີ່ມີສະພາບຊຸດໂຊມ ໃຫ້ໄດ້ ຢ່າງໜ້ອຍ 1,3 ລ້ານ ເຮັກຕາ;
   - ປູກ ໄມ້ ແລະ ເຄື່ອງປ່າຂອງດົງ ໃຫ້ໄດ້ ຢ່າງໜ້ອຍ 0,5 ລ້ານ ເຮັກຕາ ໃນນັ້ນ ປູກໄມ້ເພື່ອປົກປັກຮັກສາສິ່ງແວດລ້ອມ ໃນເຂດປ່າສະຫງວນ ແລະ ປ່າປ້ອງກັນ ຢ່າງໜ້ອຍ 0,1 ລ້ານ ເຮັກຕາ ແລະ ປູກໄມ້ເປັນສິນຄ້າ ໃນເຂດປ່າຜະລິດ ແລະ ທີ່ດິນອື່ນໆ ຢ່າງໜ້ອຍ 0,4 ລ້ານ ເຮັກຕາ ເພື່ອຮັບປະກັນການສະໜອງວັດຖຸດິບໃຫ້ແກ່ ໂຮງງານອຸດສາຫະກຳປຸງແຕ່ງ ໄມ້ ແລະ ເຄື່ອງປ່າຂອງດົງ.

3) ສົ່ງເສີມ ການພັດທະນາ ອຸດສາຫະກຳປຸງແຕ່ງ ໄມ້ ແລະ ເຄື່ອງປ່າຂອງດົງ ຕາມທິດ ທັນເປັນທັນສະໄໝ, ຍູ້ແຮງການຜະລິດພາຍໃນ, ສ້າງມູນຄ່າເພີ່ມ ແລະ ສ້າງວຽກເຮັດງານທຳ, ປັບປຸງຜະລິດຕະພັນ ໄມ້ ແລະ ເຄື່ອງປ່າຂອງດົງ ໃຫ້ມີຄຸນນະພາບສູງ ແລະ ໄດ້ມາດຕະຖານ ເພື່ອຮັບໃຊ້ ພາຍໃນ ແລະ ສົ່ງອອກ ຕິດພັນກັບການຄຸ້ມຄອງຕ່ອງໂສ້ການສະໜອງໄມ້ ແລະ ຂະຫຍາຍການຕະຫຼາດໃຫ້ກວ້າງຂວາງ;

4) ທຸລະກິດກ່ຽວກັບປ່າໄມ້ ປະເພດຕ່າງໆ ເຊັ່ນ ການປູກໄມ້ ແລະ ການປຸງແຕ່ງໄມ້ປູກ, ການທ່ອງທ່ຽວແບບອະນຸລັກທຳມະຊາດ, ການຊື້ ຂາຍສິນເຊື່ອກາກບອນປ່າໄມ້ ໄດ້ຮັບການພັດທະນາ, ສາມາດສ້າງລາຍຮັບ

ອັນແນ່ນອນ ປະກອບສ່ວນ ເຂົ້າໃນການປັບປຸງຊີວິດການເປັນຢູ່ ແລະ ການພັດທະນາເສດຖະກິດ ແຫ່ງຊາດ;

5) ຊຸກຍູ້ ແລະ ສົ່ງເສີມ ການຈັດສັນພູມລຳເນົາ ແລະ ອາຊີບ ໃຫ້ປະຊາຊົນບັນດາເຜົ່າທີ່ອາໄສຢູ່ໃນເຂດປ່າໄມ້ ເພື່ອສ້າງເສດຖະກິດຄອບຄົວ ດ້ວຍການຜະລິດເປັນສິນຄ້າ ແລະ ສ້າງເສດຖະກິດຮ່ວມມີຮູບແບບຕ່າງໆ ທີ່ເໝາະສົມ ຕາມທ່າແຮງຂອງແຕ່ລະທ້ອງຖິ່ນ ໃຫ້ມີຊີວິດການເປັນຢູ່ທີ່ດີ ຂອງຄອບຄົວທຸກຍາກທັງໝົດ ທີ່ອາໄສຢູ່ໃນເຂດປ່າໄມ້;
6) ປັບປຸງຄຸນນະພາບຂອງ ປ່າໄມ້ ແລະ ທີ່ດິນປ່າໄມ້ ເພື່ອຮັບປະກັນ ການອະນຸລັກຊີວະນານາພັນ, ເປັນແຫຼ່ງທີ່ຢູ່ອາໄສຂອງ ພືດ ແລະ ສັດ, ການປົກປັກຮັກສາ ແຫຼ່ງນ້ຳ, ສິ່ງແວດລ້ອມ ແລະ ຫຼຸດຜ່ອນຜົນກະທົບ ຈາກໄພພິບັດທາງທຳມະຊາດ;
7) ເພີ່ມທະວີຄວາມເຂັ້ມງວດ ໃນການຈັດຕັ້ງປະຕິບັດ ບັນດານິຕິກຳ ກ່ຽວກັບປ່າໄມ້ ເພື່ອສະກັດກັ້ນ, ຕ້ານ ແລະ ແກ້ໄຂບັນຫາ ການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມ້ຊຸດໂຊມ ແນໃສ່ບັນລຸຄາດໝາຍ ຫຼຸດຜ່ອນທາດອາຍເຮືອນແກ້ວ ໃຫ້ໄດ້ຢ່າງໜ້ອຍ 55 ລ້ານ ໂຕນ ອາຍກາກໂບນິກທຽບເທົ່າ ($tCO_2e$), ໃນນັ້ນ:
   - ຄາດໝາຍ ຫຼຸດຜ່ອນຈາກການປ່ອຍທາດອາຍເຮືອນແກ້ວ ທີ່ເກີດຂຶ້ນຍ້ອນການສູນເສຍ ປ່າໄມ້ ປະມານ 40 ລ້ານ ໂຕນ ອາຍກາກໂບນິກທຽບເທົ່າ ($tCO_2e$);
   - ຄາດໝາຍ ການດູດຊັບ ດ້ວຍການ ຟື້ນຟູປ່າ ແລະ ປູກໄມ້ ປະມານ 15 ລ້ານ ໂຕນ ອາຍກາກໂບນິກທຽບເທົ່າ ($tCO_2e$).
8) ພັດທະນາຂະແໜງການປ່າໄມ້ ເຊັ່ນ ກົງຈັກການຈັດຕັ້ງ, ບຸກຄະລາກອນ ແລະ ສ້າງພື້ນຖານວັດຖຸ ເຕັກນິກ ໃຫ້ມີຄວາມເຂັ້ມແຂງ, ທັນສະໄໝ ແລະ ສາມາດປະຕິບັດ ແນວທາງນະໂຍບາຍຂອງ ພັກ-ລັດ, ແຜນງານຍຸດທະສາດ ໃຫ້ບັນລຸຕາມເປົ້າໝາຍ ແລະ ຮອງຮັບການລົງທຶນ ພາຍໃນ ແລະ ຕ່າງປະເທດ, ການເຊື່ອມໂຍງກັບ ພາກພື້ນ ແລະ ສາກົນ.

### 2.5 ແຜນຍຸດທະສາດ ແລະ ແຜນວຽກຈຸດສຸມ

ເພື່ອບັນລຸໄດ້ຕາມຄາດໝາຍທີ່ວາງໄວ້, ຍຸດທະສາດປ່າໄມ້ສະບັບນີ້ ໄດ້ກຳນົດອອກເປັນ 8 ແຜນຍຸດທະສາດ, 18 ແຜນວຽກຈຸດສຸມ ແລະ 50 ໂຄງການບູລິມະສິດ ຄືດັ່ງລຸ່ມນີ້:

## ແຜນຍຸດທະສາດ I ຄຸ້ມຄອງ ແລະ ປົກປັກຮັກສາ ປ່າໄມ້

**ຈຸດປະສົງ:** ເພື່ອຄຸ້ມຄອງ ແລະ ປົກປັກຮັກສາ ປ່າໄມ້ ແລະ ທີ່ດິນປ່າໄມ້ ທຸກປະເພດ ທີ່ມີຢູ່ ລວມທັງທີ່ດິນບໍລິເວນນ້ຳ ບໍ່ໃຫ້ຖືກບຸກລຸກ, ທຳລາຍ ຫຼື ຊຸດໂຊມ ແນໃສ່ບັນລຸຄາດໝາຍ ຫຼຸດຜ່ອນຈາກການປ່ອຍທາດອາຍເຮືອນແກ້ວ ທີ່ເກີດຂຶ້ນຍ້ອນການທຳລາຍປ່າໄມ້ ແລະ ເຮັດໃຫ້ປ່າໄມ້ຊຸດໂຊມ ປະມານ 40 ລ້ານ ໂຕນ ອາຍກາກໂບນິກທຽບເທົ່າ ($tCO_2e$), ຮັບປະກັນ ການປົກປັກຮັກສາຄຸນນະພາບຂອງ ດິນ, ອາກາດ, ແຫຼ່ງນ້ຳ, ຊີວະນານາພັນ ແລະ ສິ່ງແວດລ້ອມ ປະກອບສ່ວນ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ, ປະກອບມີ 6 ແຜນວຽກຈຸດສຸມ ດັ່ງລຸ່ມນີ້:

### ແຜນວຽກຈຸດສຸມ 1.1 ຄຸ້ມຄອງ ແລະ ປົກປັກຮັກສາ ປ່າປ້ອງກັນ

**ຈຸດປະສົງ:** ເພື່ອຄຸ້ມຄອງ ແລະ ປັກຮັກສາ ປ່າປ້ອງກັນ ແລະ ທີ່ດິນປ່າປ້ອງກັນ ຈຳນວນ 8,2 ລ້ານ ເຮັກຕາ ໃຫ້ເປັນລະບົບ ແນໃສ່ ການຮັກສາ ແຫຼ່ງນ້ຳ, ປ່າຍອດນ້ຳ, ປ່າແຄມນ້ຳ ແລະ ແຄມທາງ, ປ້ອງກັນການເຊາະເຈື່ອນ ແລະ ຮັກສາຄຸນນະພາບຂອງດິນ, ປ້ອງກັນໄພພິບັດທາງທຳມະຊາດ ແລະ ສິ່ງແວດລ້ອມ, ປະກອບມີ 3 ໂຄງການບູລິມະສິດ:

**ໂຄງການ 1:** ກຳນົດເຂດ ປ່າປ້ອງກັນ ແລະ ທີ່ດິນປ່າປ້ອງກັນ ລະດັບ ຊາດ, ແຂວງ, ເມືອງ ແລະ ບ້ານໃຫ້ໄດ້ 8,2 ລ້ານ ເຮັກຕາ ເພື່ອສະເໜີລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ຮັບຮອງ, ສ້າງແຜນຄຸ້ມຄອງ,

ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ແບບຍືນຍົງ, ວາງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານ ທັງບ້ານຢູ່ໃນ ແລະ ຕິດແປະເຂດປ່າປ້ອງກັນ.

**ໂຄງການ 2:** ຊຸກຍູ້ ແລະ ສົ່ງເສີມ ການຈັດຕັ້ງປະຕິບັດ ແຜນການຄຸ້ມຄອງ ແລະ ປົກປັກຮັກສາ ປ່າປ້ອງກັນ ເຊັ່ນ ການຕິດປ້າຍ ແລະ ປັກຫຼັກໝາຍ, ການກວດກາລາດຕະເວນ, ການຟື້ນຟູປ່າທີ່ຊຸດໂຊມ, ການຄຸ້ມຄອງປ່າໄມ້ຂັ້ນບ້ານ ລວມທັງ ການພັດທະນາຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າທີ່ອາໄສຢູ່ໃນ ແລະ ຕິດແປະເຂດປ່າປ້ອງກັນ.

**ໂຄງການ 3:** ກຳນົດເຂດ ແລະ ສ້າງແຜນ ການຄຸ້ມຄອງ ແລະ ປົກປັກຮັກສາເຂດ ແຫຼ່ງນ້ຳ, ປ່າຍອດນ້ຳ, ປ່າແຄມນ້ຳ ແລະ ແຄມທາງ ຕາມສາຂາແມ່ນ້ຳຕ່າງໆ ທີ່ມີຄວາມສຳຄັນຕໍ່ອ່າງຮັບນ້ຳ ຂະໜາດ ໃຫຍ່, ກາງ ແລະ ນ້ອຍ.

### ແຜນວຽກຈຸດສຸມ 1.2 ຄຸ້ມຄອງ ແລະ ປົກປັກຮັກສາ ປ່າສະຫງວນ

**ຈຸດປະສົງ:** ເພື່ອຄຸ້ມຄອງ ແລະ ປົກປັກຮັກສາ ປ່າສະຫງວນ ແລະ ທີ່ດິນປ່າສະຫງວນ ຈຳນວນ 4,7 ລ້ານເຮັກຕາ ໃຫ້ອຸດົມສົມບູນ ແນໃສ່ອະນຸລັກຮັກສາ ຄວາມສວຍສົດງົດງາມຂອງທິວທັດທຳມະຊາດ, ລະບົບນິເວດປ່າໄມ້ ແລະ ຄວາມຫຼາກຫຼາຍທາງດ້ານຊີວະນານາພັນ, ປະກອບມີ 2 ໂຄງການບູລິມະສິດ:

**ໂຄງການ 1:** ກຳນົດເຂດ ປ່າສະຫງວນ ແລະ ທີ່ດິນປ່າສະຫງວນ ລະດັບຊາດ, ແຂວງ, ເມືອງ ແລະ ບ້ານ ຈຳນວນ 4,7 ລ້ານ ເຮັກຕາ ເພື່ອສະເໜີລັດຖະບານ ແລະ ອົງການປົກຄອງທ້ອງຖິ່ນ ຮັບຮອງ, ຈັດປະເພດປ່າສະຫງວນ, ສ້າງແຜນຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ແບບຍືນຍົງ, ວາງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານທັງບ້ານຢູ່ໃນ ແລະ ຕິດແປະເຂດປ່າສະຫງວນ.

**ໂຄງການ 2:** ຊຸກຍູ້ ແລະ ສົ່ງເສີມ ການຈັດຕັ້ງປະຕິບັດ ແຜນການຄຸ້ມຄອງ ແລະ ປົກປັກຮັກສາ ປ່າສະຫງວນ ເຊັ່ນ ການຕິດປ້າຍ ແລະ ປັກຫຼັກໝາຍ, ການກວດກາລາດຕະເວນ, ການຟື້ນຟູປ່າໄມ້ທີ່ຊຸດໂຊມ, ການຄຸ້ມຄອງປ່າໄມ້ຂັ້ນບ້ານ ລວມທັງ ການພັດທະນາຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າທີ່ອາໄສຢູ່ໃນ ແລະ ຕິດແປະເຂດປ່າສະຫງວນ.

### ແຜນວຽກຈຸດສຸມ 1.3 ຄຸ້ມຄອງ ແລະ ປົກປັກຮັກສາ ປ່າຜະລິດ

**ຈຸດປະສົງ:** ຄຸ້ມຄອງ ແລະ ປົກປັກຮັກສາ ປ່າຜະລິດ ແລະ ທີ່ດິນປ່າຜະລິດ ຈຳນວນ 3,1 ລ້ານ ເຮັກຕາ ໃຫ້ອຸດົມສົມບູນ ແລະ ມີບໍລິມາດໄມ້ ຕອບສະໜອງໃຫ້ໂຮງງານອຸດສາຫະກຳປຸງແຕ່ງໄມ້ ຢ່າງພຽງພໍ, ປະກອບມີ 2 ໂຄງການບູລິມະສິດ:

**ໂຄງການ 1:** ກຳນົດເຂດ ປ່າຜະລິດ ແລະ ທີ່ດິນປ່າຜະລິດ ທີ່ລັດຖະບານໄດ້ຮັບຮອງ ຈຳນວນ 3,1 ລ້ານ ເຮັກຕາ ເພື່ອສ້າງ ຫຼື ປັບປຸງ ແຜນຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ແບບຍືນຍົງ, ວາງແຜນຄຸ້ມຄອງປ່າໄມ້ຂັ້ນບ້ານທັງບ້ານຢູ່ໃນ ແລະ ຕິດແປະເຂດປ່າຜະລິດ.

**ໂຄງການ 2:** ຊຸກຍູ້ ແລະ ສົ່ງເສີມ ການຈັດຕັ້ງປະຕິບັດ ແຜນການຄຸ້ມຄອງ ແລະ ປົກປັກຮັກສາ ປ່າຜະລິດ ເຊັ່ນ ການຕິດປ້າຍ ແລະ ປັກຫຼັກໝາຍ, ການກວດກາລາດຕະເວນ, ການປູກ ໄມ້ ແລະ ເຄື່ອງປ່າຂອງດົງ ເປັນສິນຄ້າ, ການຄຸ້ມຄອງປ່າໄມ້ຂັ້ນບ້ານ ລວມທັງ ການພັດທະນາຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າທີ່ອາໄສ ຢູ່ໃນ ແລະ ຕິດແປະເຂດປ່າຜະລິດ.

### ແຜນວຽກຈຸດສຸມ 1.4 ຄຸ້ມຄອງ ແລະ ປົກປັກຮັກສາ ທີ່ດິນບໍລິເວນນ້ຳ

**ຈຸດປະສົງ:** ຄຸ້ມຄອງ ແລະ ປົກປັກຮັກສາ ທີ່ດິນບໍລິເວນນ້ຳ ເພື່ອຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ທີ່ດິນບໍລິເວນນ້ຳ ໃຫ້ມີຄວາມຍືນຍົງ, ຮັກສາຄວາມສົມດູນຂອງລະບົບນິເວດ, ຄວາມຫຼາກຫຼາຍທາງດ້ານຊີວະນານາພັນ ພ້ອມທັງເປັນບ່ອນບຳບັດຄຸນນະພາບນ້ຳ, ຫຼຸດຜ່ອນໄພນ້ຳຖ້ວມ, ໄພແຫ້ງແລ້ງ, ດູດຊຶບທາດກາກບອນ ແລະ ປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ, ປະກອບມີ 2 ໂຄງການບູລິມະສິດ:

**ໂຄງການ 1:** ສຳຫຼວດ ແລະ ກຳນົດເຂດ ທີ່ດິນບໍລິເວນນໍ້າ ທີ່ຢູ່ໃນເຂດປ່າໄມ້ ເພື່ອສ້າງ ຫຼື ປັບປຸງ ແຜນຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ແບບຍືນຍົງ.

**ໂຄງການ 2:** ຊຸກຍູ້ ແລະ ສົ່ງເສີມ ການສ້າງ ແລະ ຈັດຕັ້ງປະຕິບັດແຜນຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນບໍລິເວນນໍ້າ ໃນເຂດປ່າໄມ້ ແບບຍືນຍົງ ເຊັ່ນ ສ້າງລະບົບການຄຸ້ມຄອງປົກປັກຮັກສາ, ສະກັດກັ້ນ ຕ້ານການບຸກລຸກທີ່ດິນບໍລິເວນນໍ້າ, ການຕິດປ້າຍ, ປັກຫຼັກໝາຍ, ການພັດທະນາຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ທີ່ອາໄສຢູ່ຕິດແປະເຂດທີ່ດິນບໍລິເວນນໍ້າ.

**ແຜນວຽກຈຸດສຸມ 1.5 ຄຸ້ມຄອງ ແລະ ປົກປັກຮັກສາ ຊີວະນານາພັນ, ພັນໄມ້, ພັນພືດ ແລະ ພັນສັດປ່າ**

**ຈຸດປະສົງ:** ເພື່ອປົກປັກຮັກສາ ຊີວະນານາພັນ, ພັນໄມ້, ພັນພືດ, ພັນສັດປ່າ ແລະ ເຄື່ອງປ່າຂອງດົງ ເປັນຕົ້ນ ຊະນິດພັນ ຫວງຫ້າມ, ຫາຍາກ ແລະ ໃກ້ຈະສູນພັນ ແນໃສ່ ເຮັດໃຫ້ຊັບພະຍາກອນ ປ່າໄມ້ ແລະ ຊີວະນານາພັນ ມີຄວາມອຸດົມສົມບູນ, ປະກອບມີ 4 ໂຄງການບູລິມະສິດ:

**ໂຄງການ 1:** ຄຸ້ມຄອງ ແຫຼ່ງແກ່ນພັນ ໄມ້ ແລະ ເຄື່ອງປ່າຂອງດົງ ໂດຍສຸມໃສ່ ທົບທວນ, ສ້າງ ແລະ ຟື້ນຟູ ແຫຼ່ງແກ່ນພັນ ໄມ້ ແລະ ເຄື່ອງປ່າຂອງດົງ ທີ່ຫາຍາກ ແລະ ໃກ້ຈະສູນພັນ, ກຳນົດມາດຕະການ ຄຸ້ມຄອງ, ປົກປັກຮັກສາ ແລະ ກວດກາ ໂດຍການມີສ່ວນຮ່ວມຂອງປະຊາຊົນບັນດາເຜົ່າ.

**ໂຄງການ 2:** ກຳນົດ ແລະ ປັບປຸງ ບັນຊີໄມ້, ເຄື່ອງປ່າຂອງດົງ, ສັດນໍ້າ ແລະ ສັດປ່າ ທີ່ຫາຍາກ ແລະ ໃກ້ຈະສູນພັນລວມທັງ ປະເມີນຄວາມສ່ຽງ ຕໍ່ກັບ ການຢູ່ລອດຂອງຊະນິດພັນທີ່ຢູ່ໃນທຳມະຊາດ, ກຳນົດມາດຕະການ ຄຸ້ມຄອງ, ປົກປັກຮັກສາ ແລະ ກວດກາ ໂດຍການມີສ່ວນຮ່ວມຂອງປະຊາຊົນບັນດາເຜົ່າ.

**ໂຄງການ 3:** ຄຸ້ມຄອງ ເຂດອະນຸລັກ ຊີວະນານາພັນ ທີ່ຫາຍາກ ແລະ ໃກ້ຈະສູນພັນ ໂດຍສຸມໃສ່ ກຳນົດ ຖິ່ນທີ່ຢູ່ອາໄສ ແລະ ເຂດອະນຸລັກ ພັນ ພືດ ແລະ ສັດ, ກຳນົດມາດຕະການ ຄຸ້ມຄອງປົກປັກຮັກສາ ແລະ ກວດກາ ຖິ່ນທີ່ຢູ່ອາໄສ ແລະ ເຂດອະນຸລັກຊີວະນານາພັນ, ພັນ ພືດ ແລະ ສັດ ທີ່ຫາຍາກ ແລະ ໃກ້ຈະສູນພັນ.

**ໂຄງການ 4:** ໂຄສະນາ ເຜີຍແຜ່ ແລະ ປູກຈິດສຳນຶກ ການປົກປັກຮັກສາຊັບພະຍາກອນປ່າໄມ້ ແລະ ສ້າງຂະບວນການ ອະນຸລັກຊີວະນານາພັນ, ສັດນໍ້າ ແລະ ສັດປ່າ ໃນວັນສຳຄັນຕ່າງໆ ຂອງຊາດ ແລະ ສາກົນ[15], ເຊື່ອມໂຍງວຽກງານ ອະນຸລັກ, ປົກປັກຮັກສາ ຊັບພະຍາກອນປ່າໄມ້, ຊີວະນານາພັນ, ສັດປ່າ ເຂົ້າໃນຫຼັກສູດການຮຽນ-ການສອນ ໃນລະດັບ ອະນຸບານ ຈົນຮອດ ມະຫາວິທະຍາໄລ.

**ແຜນວຽກຈຸດສຸມ 1.6 ສະກັດກັ້ນ ແລະ ຕ້ານ ການບຸກລຸກ ແລະ ທຳລາຍ ປ່າໄມ້ ແລະ ທີ່ດິນປ່າໄມ້**

**ຈຸດປະສົງ:** ເພື່ອຮັບປະກັນ ການຈັດຕັ້ງປະຕິບັດ ກົດໝາຍ, ລະບຽບການ ແລະ ສົນທິສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ໃຫ້ມີຄວາມເຂັ້ມງວດ ແລະ ດຳເນີນມາດຕະການ ຕໍ່ຜູ້ກະທຳຜິດ ໃຫ້ໄປຕາມຂັ້ນຕອນ ຂອງຂະບວນການຍຸຕິທຳ ແນໃສ່ ສະກັດກັ້ນ ແລະ ຕ້ານ ການບຸກລຸກ ແລະ ທຳລາຍ ຊັບພະຍາກອນປ່າໄມ້, ປະກອບມີ 5 ໂຄງການບູລິມາສິດ:

**ໂຄງການ 1:** ປັບປຸງ ລະບົບຕິດຕາມ ກວດກາ ການບຸກລຸກ ແລະ ທຳລາຍຊັບພະຍາກອນປ່າໄມ້ ໃຫ້ມີປະສິດທິພາບ, ສ້າງຄວາມເຂັ້ມແຂງ ພະນັກງານ-ລັດຖະກອນ, ເຈົ້າໜ້າທີ່ປ່າໄມ້, ເຈົ້າໜ້າທີ່ກ່ຽວຂ້ອງ, ອົງການຈັດຕັ້ງຂັ້ນບ້ານ ແລະ ປະຊາຊົນ ໃນການສະກັດກັ້ນ ແລະ ຕ້ານ ການບຸກລຸກ, ທຳລາຍຊັບພະຍາກອນ ປ່າໄມ້.

**ໂຄງການ 2:** ປັບປຸງ ລະບົບການປະສານງານ, ການຮ່ວມມື ແລະ ການແລກປ່ຽນຂໍ້ມູນຂ່າວສານ ກັບບັນດາເຄືອຂ່າຍພາຍໃນ, ພາກພື້ນ ແລະ ສາກົນ ໃນການບັງຄັບໃຊ້ກົດໝາຍ ວ່າດ້ວຍ ປ່າໄມ້, ສັດປ່າ, ສັດນໍ້າ

[15] ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ຮອດປີ 2030.

ແລະ ການປະມົງ ເພື່ອສະກັດກັ້ນ ແລະ ຕ້ານ ອາຊະຍາກຳ ໄມ້, ສັດນ້ຳ, ສັດປ່າ ແລະ ພືດປ່າ ພາຍໃນ ແລະ ຂ້າມຊາດ.

**ໂຄງການ 3:** ສ້າງຄວາມເຂັ້ມແຂງ ໃຫ້ແກ່ ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້, ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນ ເພື່ອປະຕິບັດມາດຕະການ ຕໍ່ຜູ້ລະເມີດ ກົດໝາຍ ຕາມຂະບວນການຍຸຕິທຳ.

**ໂຄງການ 4:** ເພີ່ມທະວີ ຄວາມເຂັ້ມງວດ ໃນການສະກັດກັ້ນ ແລະ ຕ້ານ ການບຸກລຸກທຳລາຍ ປ່າໄມ້ ແລະ ທີ່ດິນປ່າໄມ້, ການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້; ການຄຸ້ມຄອງ ແລະ ກວດກາ ສັດປ່າ ແລະ ພືດປ່າ ປະເພດຫວງຫ້າມ ໂດຍການປະສານສົມທົບກັບ ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ກວດກາການນຳໃຊ້ ປ່າໄມ້ ແລະ ທີ່ດິນປ່າໄມ້ ທີ່ຜິດກົດໝາຍ ພ້ອມທັງດຳເນີນຄະດີ ຕໍ່ຜູ້ລະເມີດ ຕາມຂະບວນການຍຸຕິທຳ.

**ໂຄງການ 5:** ການສະກັດກັ້ນ ແລະ ຕ້ານ ໄຟໄໝ້ລາມປ່າ ໃນເຂດ ປ່າໄມ້ ແລະ ທີ່ດິນປ່າໄມ້ ໂດຍການສ້າງເປັນໂຄງການລະອຽດ, ກຳນົດນິຕິກຳ, ກົນໄກ, ເຕັກນິກວິຊາການ ແລະ ຂອດການຮ່ວມມື ແລະ ປະສານງານ ພາຍໃນ, ພາກພື້ນ ແລະ ສາກົນ.

## ແຜນຍຸດທະສາດ II ປູກ ແລະ ຟື້ນຟູບູລະນະປ່າໄມ້

**ຈຸດປະສົງ:** ເພື່ອສົ່ງເສີມ ການປູກ ແລະ ຟື້ນຟູບູລະນະປ່າໄມ້ ໃຫ້ອຸດົມສົມບູນ ແນໃສ່ ຍົກລະດັບຄວາມປົກຫຸ້ມປ່າໄມ້ໃຫ້ໄດ້ 70% ຂອງເນື້ອທີ່ທົ່ວປະເທດ, ດູດຊັບອາຍກາກໂບນິກ ໃຫ້ໄດ້ 15 ລ້ານ ໂຕນ ອາຍກາກໂບນິກທຽບເທົ່າ ($tCO_2e$) ປະກອບສ່ວນ ການພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ປົກປັກຮັກສາຊີວະນານາພັນ ແລະ ສິ່ງແວດລ້ອມ, ປະກອບມີ 2 ແຜນວຽກຈຸດສຸມ ດັ່ງລຸ່ມນີ້:

### ແຜນວຽກຈຸດສຸມ 2.1 ສົ່ງເສີມປູກ ໄມ້ ແລະ ເຄື່ອງປ່າຂອງດົງ

**ຈຸດປະສົງ:** ເພື່ອປູກ ໄມ້ ແລະ ເຄື່ອງປ່າຂອງດົງ ໃຫ້ໄດ້ ຢ່າງໜ້ອຍ 0,5 ລ້ານ ເຮັກຕາ ແນ່ໃສ່ຮັບປະກັນ ການປົກປັກຮັກສາ ຊີວະນານາພັນ ແລະ ສິ່ງແວດລ້ອມ ແລະ ສະໜອງວັດຖຸດິບ ໃຫ້ແກ່ໂຮງງານອຸດສາຫະກຳປຸງແຕ່ງ ໄມ້ ແລະ ເຄື່ອງປ່າຂອງດົງ ຢ່າງພຽງພໍ, ປະກອບມີ 4 ໂຄງການບູລິມະສິດ:

**ໂຄງການ 1:** ພັດທະນາແຜນແມ່ບົດການປູກ ໄມ້ ແລະ ເຄື່ອງປ່າຂອງດົງ ແຫ່ງຊາດ ໂດຍສຸມໃສ່ ພັດທະນາຖານຂໍ້ມູນ ແລະ ສ້າງແຜນທີ່ ເຂດປ່າຊຸດໂຊມ ແລະ ປອກໂຫຼ້ນ ຢູ່ໃນ ແລະ ນອກ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ແຕ່ລະໄລຍະ, ກຳນົດເຂດສົ່ງເສີມປູກ ໄມ້ ແລະ ເຄື່ອງປ່າຂອງດົງ, ກຳນົດຫຼັກການກ່ຽວກັບ ການປູກໄມ້ ທີ່ເປັນມິດຕໍ່ ສິ່ງແວດລ້ອມ ແລະ ສັງຄົມ (National Planted Forest Code).

**ໂຄງການ 2:** ສົ່ງເສີມການປູກ ໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອປົກປັກຮັກສາ ສິ່ງແວດລ້ອມ, ແຫຼ່ງນ້ຳ, ຊີວະນານາພັນ ແລະ ການບໍລິການທາງດ້ານລະບົບນິເວດປ່າໄມ້ ໃນເຂດປ່າຊຸດໂຊມ ແລະ ທີ່ດິນປ່າປອກໂຫຼ້ນ ໃນປ່າປ້ອງກັນ, ປ່າສະຫງວນ, ເຂດບໍລິເວນແຄມນ້ຳ ແລະ ສະຖານທີ່ທີ່ລັດຈັດສັນ ໃຫ້ໄດ້ ຢ່າງໜ້ອຍ 0,1 ລ້ານ ເຮັກຕາ.

**ໂຄງການ 3:** ສົ່ງເສີມການປູກ ໄມ້ ແລະ ເຄື່ອງປ່າຂອງດົງ ເປັນສິນຄ້າ ໃນພື້ນທີ່ ປ່າຊຸດໂຊມ ແລະ ທີ່ດິນປ່າປອກໂຫຼ້ນ ໃນເຂດ ປ່າຜະລິດ ແລະ ທີ່ດິນອື່ນໆ ໃຫ້ໄດ້ຢ່າງໜ້ອຍ 0,4 ລ້ານ ເຮັກຕາ ເພື່ອຮັບປະກັນ ການສະໜອງວັດຖຸດິບ ໃຫ້ໂຮງງານອຸດສາຫະກຳປຸງແຕ່ງ ໄມ້ ແລະ ເຄື່ອງປ່າຂອງດົງ.

**ໂຄງການ 4:** ສົ່ງເສີມການຂຶ້ນທະບຽນ ປ່າປູກ ແລະ ຢັ້ງຢືນ ໄມ້ປູກ, ເຄື່ອງປ່າຂອງດົງທີ່ປູກ ແລະ ໄມ້ທຳມະຊາດ ເພື່ອຢັ້ງຢືນກຳມະສິດ, ແຫຼ່ງທີ່ມາຂອງ ໄມ້ ແລະ ເຄື່ອງປ່າຂອງດົງ.

### ແຜນວຽກຈຸດສຸມ 2.2 ຟື້ນຟູປ່າໄມ້ ເພື່ອສິ່ງແວດລ້ອມ ແລະ ຊີວະນານາພັນ

**ຈຸດປະສົງ:** ເພື່ອຟື້ນຟູປ່າໄມ້ທຳມະຊາດ ທີ່ມີສະພາບຊຸດໂຊມ ໃຫ້ໄດ້ຢ່າງໜ້ອຍ 1,3 ລ້ານ ເຮັກຕາ ແນໃສ່ປົກປັກຮັກສາ ຊີວະນານາພັນ, ສິ່ງແວດລ້ອມ ແລະ ດູດຊັບ ອາຍກາກໂບນິກ, ປະກອບມີ 2 ໂຄງການບູລິມະສິດ:

**ໂຄງການ 1:** ພັດທະນາ ແຜນແມ່ບົດ ການຟື້ນຟູປ່າໄມ້ ແຫ່ງຊາດ ໂດຍສຸມໃສ່ ພັດທະນາຖານຂໍ້ມູນ ແລະ ສ້າງແຜນທີ່ ຟື້ນຟູ ປ່າໄມ້ ແລະ ເຄື່ອງປ່າຂອງດົງ ແຫ່ງຊາດ, ພັດທະນາ ຫຼັກການກ່ຽວກັບ ການຟື້ນຟູປ່າໄມ້ ແບບທຳມະຊາດ ແລະ ແບບປູກເສີມ ຕິດພັນກັບກິດຈະກຳສົ່ງເສີມການສ້າງລາຍຮັບໃຫ້ແກ່ປະຊາຊົນບັນດາເຜົ່າ.

**ໂຄງການ 2:** ຊຸກຍູ້ ແລະ ສົ່ງເສີມ ການຈັດຕັ້ງປະຕິບັດ ແຜນແມ່ບົດການຟື້ນຟູປ່າໄມ້ ໂດຍສຸມໃສ່ຂຶ້ນທະບຽນເຂດປ່າໄມ້ ທີ່ໄດ້ຮັບການຟື້ນຟູ ຕາມລະບຽບການ ເພື່ອປະຕິບັດນະໂຍບາຍ ຕໍ່ຜູ້ ຟື້ນຟູ ຫຼື ລົງທຶນຟື້ນຟູ ປ່າໄມ້.

## ແຜນຍຸດທະສາດ III ນຳໃຊ້ ປ່າໄມ້ ແລະ ທີ່ດິນປ່າໄມ້

**ຈຸດປະສົງ:** ເພື່ອນຳໃຊ້ ປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ມີປະສິດທິຜົນ, ເປັນມິດຕໍ່ສິ່ງແວດລ້ອມ, ປະຢັດ, ຍືນຍົງ ແລະ ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ແນໃສ່ ສົ່ງເສີມອຸດສາຫະກຳປຸງແຕ່ງໄມ້ໃຫ້ເຂັ້ມແຂງ, ເສີມຂະຫຍາຍການທ່ອງທ່ຽວແບບອະນຸລັກທຳມະຊາດ ແລະ ການຜະລິດສິນເຊື່ອກາກບອນປ່າໄມ້ ໃຫ້ມີຄວາມຍືນຍົງ, ປະກອບມີ 2 ແຜນວຽກຈຸດສຸມ ດັ່ງລຸ່ມນີ້:

### ແຜນວຽກຈຸດສຸມ 3.1 ອຸດສາຫະກຳ ການທ່ອງທ່ຽວແບບອະນຸລັກທຳມະຊາດ

**ຈຸດປະສົງ:** ເພື່ອສົ່ງເສີມ ການທ່ອງທ່ຽວແບບອະນຸລັກທຳມະຊາດ ໄປຄຽງຄູ່ກັບການປົກປັກຮັກສາ ແລະ ພັດທະນາປ່າໄມ້ ປະກອບສ່ວນເຂົ້າໃນ ລວມຍອດຜະລິດຕະພັນພາຍໃນ (GDP) ແລະ ລາຍໄດ້ແຫ່ງຊາດ (GNI), ປະກອບມີ 2 ໂຄງການບູລິມະສິດ:

**ໂຄງການ 1:** ສົ່ງເສີມທຸລະກິດການທ່ອງທ່ຽວແບບອະນຸລັກທຳມະຊາດ ໃນເຂດປ່າໄມ້ ໂດຍສຸມໃສ່ ການສຳຫຼວດ ແລະ ກຳນົດ ຊັບພະຍາກອນທ່ອງທ່ຽວຕາມທຳມະຊາດ ທີ່ມີທ່າແຮງ ໃນເຂດປ່າໄມ້ ແລະ ທີ່ດິນປ່າໄມ້, ຊຸກຍູ້ ແລະ ສົ່ງເສີມ ປະຊາຊົນບັນດາເຜົ່າ, ຜູ້ປະກອບການ ແລະ ພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມ, ສ້າງ ແລະ ລົງທຶນ ເຂົ້າໃນການພັດທະນາ ແຫຼ່ງທ່ອງທ່ຽວແບບອະນຸລັກທຳມະຊາດ.

**ໂຄງການ 2:** ການພັດທະນາ ແລະ ສ້າງຄວາມເຂັ້ມແຂງ ດ້ານການບໍລິການ ການທ່ອງທ່ຽວ ໃຫ້ແກ່ປະຊາຊົນບັນດາເຜົ່າ ສຸມໃສ່ ເຂດທີ່ມີທ່າແຮງ, ເງື່ອນໄຂ ແລະ ຄວາມພ້ອມ ຂອງແຕ່ລະທ້ອງຖິ່ນ ໂດຍການສ້າງຕັ້ງກຸ່ມ, ສະມາຄົມ ແລະ ສະຫະກອນ.

### ແຜນວຽກຈຸດສຸມ 3.2 ການຊື້ ຂາຍສິນເຊື່ອກາກບອນປ່າໄມ້

**ຈຸດປະສົງ:** ເພື່ອເຮັດໃຫ້ການຄຸ້ມຄອງວຽກງານ ຊື້ ຂາຍສິນເຊື່ອກາກບອນປ່າໄມ້ ແລະ ການພັດທະນາພະລັງງານສະອາດ ທີ່ເປັນມິດຕໍ່ສິ່ງແວດລ້ອມ ເຂົ້າສູ່ລະບົບ, ມີປະສິດທິພາບ ແລະ ປະສິດທິຜົນສູງ ສາມາດຈັດຕັ້ງປະຕິບັດ ແຜນງານແຫ່ງຊາດ ການປະກອບສ່ວນແກ້ໄຂບັນຫາການປ່ຽນແປງດິນຟ້າອາກາດ (NDC), ສ້າງລາຍຮັບອັນແນ່ນອນ, ປະກອບສ່ວນເຂົ້າໃນການເຕີບໂຕ ຂອງລວມຍອດຜະລິດຕະພັນພາຍໃນ (GDP) ແລະ ລາຍໄດ້ແຫ່ງຊາດ (GNI), ປະກອບດ້ວຍ 3 ໂຄງການບູລິມະສິດ:

**ໂຄງການ 1:** ສ້າງປະຖົມປັດໄຈ ໃຫ້ແກ່ ການພັດທະນາໂຄງການສິນເຊື່ອກາກບອນປ່າໄມ້ ແນໃສ່ຈັດຕັ້ງປະຕິບັດ ແຜນງານແຫ່ງຊາດ ການປະກອບສ່ວນແກ້ໄຂບັນຫາ ການປ່ຽນແປງດິນຟ້າອາກາດ (NDC) ແລະ ຊື້ ຂາຍສິນເຊື່ອກາກບອນປ່າໄມ້ ໂດຍສຸມໃສ່ ກຳນົດນະໂຍບາຍ, ນິຕິກຳ ແລະ ວິທີການ ກ່ຽວກັບການຕິດຕາມກວດກາ ການຫຼຸດຜ່ອນການປ່ອຍທາດອາຍເຮືອນແກ້ວຈາກການທຳລາຍປ່າໄມ້ ແລະ ການເຮັດໃຫ້ປ່າໄມຊຸດໂຊມ.

**ໂຄງການ 2:** ສົ່ງເສີມ ທຸລະກິດຊື້ ຂາຍສິນເຊື່ອກາກບອນປ່າໄມ້ ໂດຍສຸມໃສ່ ສ້າງ ແລະ ຈັດຕັ້ງປະຕິບັດ ແຜນງານ ຫຼື ໂຄງການຊື້ ຂາຍສິນເຊື່ອກາກບອນປ່າໄມ້ ທີ່ລັດ ລົງທຶນ ແລະ ລົງທຶນຮ່ວມລະຫວ່າງ ລັດ, ປະຊາຊົນ ແລະ ຜູ້ປະກອບການ, ພ້ອມທັງ ຊຸກຍູ້ ແລະ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ລົງທຶນໃນທຸລະກິດຊື້ ຂາຍສິນເຊື່ອກາກບອນປ່າໄມ້, ສ້າງຄວາມເຂັ້ມແຂງໃຫ້ແກ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ໃຫ້ສາມາດເຂົ້າເຖິງຕະຫຼາດ ສິນເຊື່ອກາກບອນປ່າໄມ້ ທັງຮູບແບບ ບັງຄັບ ແລະ ສະໝັກໃຈ (Compliance and Voluntary Markets).

**ໂຄງການ 3:** ສົ່ງເສີມການພັດທະນາພະລັງງານສະອາດ ທີ່ເປັນມິດຕໍ່ສິ່ງແວດລ້ອມ ໂດຍການສ້າງປະຖົມປັດໄຈ ແລະ ສິ່ງເອື້ອອຳນວຍ ໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດແຜນງານ ຫຼື ໂຄງການ ທີ່ລັດ ລົງທຶນ ແລະ ລົງທຶນຮ່ວມລະຫວ່າງ ລັດ, ປະຊາຊົນ ແລະ ຜູ້ປະກອບການ, ພ້ອມທັງ ຊຸກຍູ້ ແລະ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ລົງທຶນເຂົ້າໃນວຽກງານພັດທະນາພະລັງງານສະອາດ ແລະ ເປັນມິດຕໍ່ສິ່ງແວດລ້ອມ.

## ແຜນຍຸດທະສາດ IV ພັດທະນາອຸດສາຫະກຳປຸງແຕ່ງ ໄມ້ ແລະ ເຄື່ອງປ່າຂອງດົງ

**ຈຸດປະສົງ:** ເພື່ອພັດທະນາອຸດສາຫະກຳປຸງແຕ່ງໄມ້ ແລະ ເຄື່ອງປ່າຂອງດົງ ຕາມທິດຫັນເປັນ ອຸດສາຫະກຳ ແລະ ທັນສະໄໝ ແນໃສ່ ຍົກສູງຄຸນນະພາບ ແລະ ມາດຕະຖານ ພ້ອມທັງສ້າງມູນຄ່າເພີ່ມ ແລະ ຂະຫຍາຍການຕະຫຼາດ ໃຫ້ກວ້າງຂວາງ, ປະກອບມີ 2 ແຜນວຽກຈຸດສຸມ ດັ່ງລຸ່ມນີ້:

### ແຜນວຽກຈຸດສຸມ 4.1 ພັດທະນາ ອຸດສາຫະກຳປຸງແຕ່ງໄມ້

**ຈຸດປະສົງ:** ເພື່ອເຮັດໃຫ້ ການປຸງແຕ່ງໄມ້ ມີປະສິດທິພາບ ແລະ ປະສິດທິຜົນສູງ ສາມາດສ້າງມູນຄ່າເພີ່ມ ຕາມທິດຫັນເປັນ ອຸດສາຫະກຳ ແລະ ທັນສະໄໝ ແນໃສ່ຮັບປະກັນ ປຸງແຕ່ງເປັນຜະລິດຕະພັນສຳເລັດຮູບ ທີ່ໄດ້ມາດຕະຖານ ຮັບໃຊ້ພາຍໃນ ແລະ ສົ່ງອອກ, ປະກອບມີ 3 ໂຄງການ ບູລິມະສິດ:

**ໂຄງການ 1:** ຄຸ້ມຄອງ ແລະ ປັບປຸງດັດສົມ ໂຮງງານອຸດສາຫະກຳປຸງແຕ່ງໄມ້ ໃຫ້ໄດ້ຕາມມາດຕະຖານ, ເຂົ້າສູ່ລະບົບ ແລະ ປະຕິບັດ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ໂດຍສຸມໃສ່ ການສ້າງຖານຂໍ້ມູນ ໂຮງງານອຸດສາຫະກຳປຸງແຕ່ງໄມ້ ແລະ ຕ່ອງໂສ້ການສະໜອງໄມ້, ຕິດຕາມກວດກາ, ຢັ້ງຢືນຄວາມຖືກຕ້ອງ ແຫຼ່ງທີ່ມາຂອງໄມ້ ທີ່ໄດ້ກຳນົດ ໃນລະບົບການຄ້ຳປະກັນການສະໜອງໄມ້ ທີ່ຖືກຕ້ອງຕາມກົດໝາຍ (TLAS).

**ໂຄງການ 2:** ສົ່ງເສີມ ການປຸງແຕ່ງຜະລິດຕະພັນໄມ້ ຂະໜາດ ນ້ອຍ ແລະ ກາງ ເພື່ອເປັນສິນຄ້າ ໂດຍສຸມໃສ່ ສ້າງຕັ້ງກຸ່ມ, ສະມາຄົມ ແລະ ສະຫະກອນ, ໂຮງງານຕົວແບບ ແລະ ເຄືອຂ່າຍການຜະລິດ ດ້ານປຸງແຕ່ງຜະລິດຕະພັນໄມ້ ຂອງຊຸມຊົນ ລວມທັງການພັດທະນາສີມືແຮງງານ, ຊຸກຍູ້ ແລະ ສົ່ງເສີມ ຕ່ອງໂສ້ການສ້າງມູນຄ່າເພີ່ມ ຜະລິດຕະພັນໄມ້.

**ໂຄງການ 3:** ສົ່ງເສີມທຸລະກິດການປຸງແຕ່ງໄມ້ ໃຫ້ເຂັ້ມແຂງ ໂດຍສຸມໃສ່ ສ້າງປະຖົມປັດໄຈ ແລະ ອຳນວຍຄວາມສະດວກ ໃຫ້ອຸດສາຫະກຳປຸງແຕ່ງໄມ້ ໃຫ້ເຕີບໃຫຍ່ເຂັ້ມແຂງ, ສາມາດແຂ່ງຂັນທາງດ້ານການຕະຫຼາດ ຮັບປະກັນໃຫ້ມີວັດຖຸດິບຈາກແຫຼ່ງທີ່ຖືກຕ້ອງ ຕາມກົດໝາຍ ສະໜອງຢ່າງພຽງພໍ, ນຳໃຊ້ເຕັກນິກເຕັກໂນໂລຊີ ທີ່ທັນສະໄໝ ເຂົ້າໃນການປຸງແຕ່ງ ແລະ ພັດທະນາສີມືແຮງງານ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

### ແຜນວຽກຈຸດສຸມ 4.2 ອຸດສາຫະກຳປຸງແຕ່ງເຄື່ອງປ່າຂອງດົງ

**ຈຸດປະສົງ:** ເພື່ອເຮັດໃຫ້ການປຸງແຕ່ງເຄື່ອງປ່າຂອງດົງ ມີປະສິດທິພາບ ແລະ ປະສິດທິຜົນສູງ ສາມາດສ້າງມູນຄ່າເພີ່ມ ຕາມທິດທັນເປັນອຸດສາຫະກຳ, ນຳໃຊ້ເຕັກໂນໂລຊີ ແລະ ນະວັດຕະກຳ ທີ່ທັນສະໄໝ ແນໃສ່ຮັບປະກັນ ປຸງແຕ່ງເປັນຜະລິດຕະພັນສຳເລັດຮູບ ຮັບໃຊ້ພາຍໃນ ແລະ ສົ່ງອອກ, ປະກອບມີ 3 ໂຄງການບູລິມະສິດ:

**ໂຄງການ 1:** ຄຸ້ມຄອງ ແລະ ປັບປຸງດັດສົມ ໂຮງງານອຸດສາຫະກຳປຸງແຕ່ງເຄື່ອງປ່າຂອງດົງ ໃຫ້ໄດ້ຕາມມາດຕະຖານ ເຂົ້າສູ່ລະບົບ ແລະ ປະຕິບັດ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ ໂດຍສຸມໃສ່ ການສ້າງຖານຂໍ້ມູນ ໂຮງງານອຸດສາຫະກຳປຸງແຕ່ງເຄື່ອງປ່າຂອງດົງ ແລະ ຕ່ອງໂສ້ການສະໜອງເຄື່ອງປ່າຂອງດົງ, ຕິດຕາມ, ກວດກາ ແລະ ຢັ້ງຢືນ ແຫຼ່ງທີ່ມາຂອງເຄື່ອງປ່າຂອງດົງ;

**ໂຄງການ 2:** ສົ່ງເສີມທຸລະກິດການປຸງແຕ່ງເຄື່ອງປ່າຂອງດົງ ໂດຍສຸມໃສ່ ຮັບປະກັນໃຫ້ມີວັດຖຸດິບ ຈາກແຫຼ່ງທີ່ຖືກຕ້ອງຕາມກົດໝາຍ ສະໜອງຢ່າງພຽງພໍ, ນຳໃຊ້ເຕັກນິກ ເຕັກໂນໂລຊີ ທີ່ທັນສະໄໝ ເຂົ້າໃນການປຸງແຕ່ງ ແລະ ພັດທະນາສີມືແຮງງານ, ສ້າງປະຖົມປັດໃຈ ແລະ ອຳນວຍຄວາມສະດວກ ໃຫ້ອຸດສາຫະກຳປຸງແຕ່ງເຄື່ອງປ່າຂອງດົງ ໃຫ້ເຕີບໃຫຍ່ເຂັ້ມແຂງ ແລະ ສາມາດແຂ່ງຂັນທາງດ້ານການຕະຫຼາດ.

**ໂຄງການ 3:** ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ລົງທຶນເຂົ້າໃນການພັດທະນາ ຕ່ອງໂສ້ສ້າງມູນຄ່າເພີ່ມ ເຄື່ອງປ່າຂອງດົງ ແບບມີສ່ວນຮ່ວມຂອງປະຊາຊົນບັນດາເຜົ່າ, ພັດທະນາ ສີມືແຮງງານ, ເຕັກນິກ, ການເກັບກູ້, ເກັບຮັກສາ, ປຸງແຕ່ງ, ຫຸ້ມຫໍ່, ຂົນສົ່ງ, ການໂຄສະນາ ແລະ ການຕະຫຼາດ.

## ແຜນຍຸດທະສາດ V ພັດທະນາຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໃນເຂດປ່າໄມ້

**ຈຸດປະສົງ:** ເພື່ອປັບປຸງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າທີ່ອາໄສຢູ່ໃນເຂດປ່າໄມ້ໃຫ້ດີຂຶ້ນ ແລະ ຫຼຸດພົ້ນຈາກຄວາມທຸກຍາກ ແນໃສ່ ຫຼຸດຜ່ອນຜົນກະທົບຕໍ່ ປ່າໄມ້ ແລະ ທີ່ດິນປ່າໄມ້, ປະກອບມີ 2 ແຜນວຽກຈຸດສຸມ ດັ່ງລຸ່ມນີ້:

### ແຜນວຽກຈຸດສຸມ 5.1 ຈັດສັນ ເຂດທຳການຜະລິດໃຫ້ປະຊາຊົນບັນດາເຜົ່າ ໃນເຂດປ່າໄມ້

**ຈຸດປະສົງ:** ສ້າງເງື່ອນໄຂ ແລະ ຄວາມອາດສາມາດ ໃນການທຳການຜະລິດ ເພື່ອລ້ຽງຊີບ, ຜະລິດເປັນສິນຄ້າ ແລະ ສ້າງເສດຖະກິດຮ່ວມມີຮູບແບບຕ່າງໆທີ່ເໝາະສົມ ຕາມທ່າແຮງຂອງແຕ່ລະທ້ອງຖິ່ນ ຮັບໃຊ້ພາຍໃນ ແລະ ສົ່ງອອກ, ປະກອບມີ 2 ໂຄງການບູລິມະສິດ:

**ໂຄງການ 1:** ຮັບຮູ້ສິດການນຳໃຊ້ທີ່ດິນຂອງປະຊາຊົນບັນດາເຜົ່າ ທີ່ອາໄສ ແລະ ທຳການຜະລິດຢູ່ໃນເຂດ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ ກ່ອນລັດຖະບານ ຮັບຮອງເຂດປ່າໄມ້ດັ່ງກ່າວ ໂດຍສຸມໃສ່ ການສຳຫຼວດ ແລະ ເກັບກຳຂໍ້ມູນ ກ່ຽວກັບການນຳໃຊ້ທີ່ດິນ ຫຼື ສິດນຳໃຊ້ທີ່ດິນ ຂອງປະຊາຊົນ ທີ່ຕັ້ງພູມລຳເນົາ ແລະ ອາໄສຢູ່ ກ່ອນການຮັບຮອງປະເພດປ່າດັ່ງກ່າວ ເພື່ອຈັດສັນອອກ ໃບຢັ້ງຢືນການນຳໃຊ້ທີ່ດິນ ຫຼື ຂຶ້ນທະບຽນອອກໃບຕາດິນ ເຊັ່ນ ທີ່ດິນປຸກສ້າງທີ່ຢູ່ອາໄສ ແລະ ທີ່ດິນກະສິກຳຖາວອນ ໃຫ້ພວກກ່ຽວຕາມກົດໝາຍ ແລະ ລະບຽບການ.

**ໂຄງການ 2:** ຊຸກຍູ້, ສົ່ງເສີມ ການສ້າງ ແລະ ປັບປຸງ ການຈັດສັນທີ່ດິນປ່າໄມ້ ໂດຍສະເພາະເຂດລັດຖະບານ ໄດ້ກຳນົດເປັນເຂດ ທີ່ຢູ່ອາໄສ ແລະ ບ່ອນທຳມາຫາກິນໃຫ້ແກ່ປະຊາຊາຊົນ ທີ່ຖືກຜົນກະທົບຈາກ ໂຄງການພັດທະນາ ເພື່ອໃຫ້ມີເຂດທຳການຜະລິດ ແລະ ມີແຫຼ່ງລາຍຮັບທີ່ແນ່ນອນ ມີຊີວິດການເປັນຢູ່ດີຂຶ້ນກວ່າເກົ່າ ແລະ ຫຼຸດພົ້ນອອກຈາກຄວາມທຸກຍາກ ເພື່ອຫຼຸດຜ່ອນຜົນກະທົບຕໍ່ປ່າໄມ້.

### ແຜນວຽກຈຸດສຸມ 5.2 ພັດທະນາອາຊີບ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ

**ຈຸດປະສົງ:** ສ້າງຄວາມເຂັ້ມແຂງ ໃຫ້ປະຊາຊົນ ດຳເນີນການຜະລິດ ກະສິກຳ ແລະ ປ່າໄມ້ ເປັນສິນຄ້າ ການປູກ, ການລ້ຽງ, ຫັດຖະກຳ, ການຄ້າ, ການບໍລິການ ໃຫ້ກາຍເປັນຄອບຄົວຕົວແບບ ຕິດພັນກັບການຢຸດເຊົາບັນຫາການ

ເຄື່ອນຍ້າຍແບບຊະຊາຍຂອງພົນລະເມືອງ ເຂົ້າໄປຕັ້ງຖິ່ນຖານຢູ່ໃນເຂດປ່າໄມ້ ເພື່ອປົກປັກຮັກສາ ປ່າໄມ້ ແລະ ຢຸດເຊົາການຖາງປ່າເຮັດໄຮ່ແບບເລື່ອນລອຍ, ປະກອບມີ 3 ໂຄງການບູລິມະສິດ:

**ໂຄງການ 1:** ສ້າງຄວາມເຂັ້ມແຂງ ໃຫ້ປະຊາຊົນ ດ້ວຍການສ້າງຕັ້ງ ກຸ່ມ ຫຼື ສະຫະກອນປູກ ໄມ້ ແລະ ເຄື່ອງປ່າຂອງດົງ ຂອງຊຸມຊົນ, ຝຶກອົບຮົມ ເຕັກນິກການ ກ້າເບ້ຍ, ປູກ, ບົວລະບັດຮັກສາ, ກະສິກໍາ-ປ່າໄມ້ ແລະ ລ້ຽງສັດ-ປ່າໄມ້ ແບບປະສົມປະສານ (Agro-Silvo-Pastoral) ໃນຮູບແບບຕ່າງໆ ທີ່ແທດເໝາະກັບສະພາບ ແລະ ຈຸດພິເສດຂອງທ້ອງຖິ່ນ, ການເຂົ້າເຖິງ ນະໂຍບາຍຕ່າງໆຂອງລັດ ກ່ຽວກັບການປູກ ໄມ້ ແລະ ເຄື່ອງປ່າຂອງດົງ.

**ໂຄງການ 2:** ການຊຸກຍູ້ ການຜະລິດກະສິກໍາ-ລ້ຽງສັດ ປະສົມປະສານກັບປ່າໄມ້ ໂດຍສຸມໃສ່ ສ້າງຄູ່ມື ແລະ ບົດແນະນໍາດ້ານເຕັກນິກ, ການເຂົ້າເຖິງແຫຼ່ງທຶນຕ່າງໆ ກ່ຽວກັບການດໍາເນີນ ກະສິກໍາ-ປ່າໄມ້ ແລະລ້ຽງສັດ-ປ່າໄມ້ ແບບປະສົມປະສານ ໃນຮູບແບບຕ່າງໆ ເຊັ່ນ ການປູກໄມ້ແບບປະສົມປະສານ, ການລ້ຽງສັດຢູ່ໃນເຂດປ່າໄມ້ ແລະ ກະສິກໍາໃນເຂດທີ່ກໍານົດໄວ້.

**ໂຄງການ 3:** ສົ່ງເສີມ ການດໍາເນີນທຸລະກິດ ກະສິກໍາ-ປ່າໄມ້ ແລະ ລ້ຽງສັດ-ປ່າໄມ້ ແບບປະສົມປະສານ ຂະໜາດນ້ອຍ ຂອງຄອບຄົວ ແລະ ຊຸມຊົນ ໂດຍສຸມໃສ່ ຊຸກຍູ້ ແລະ ສົ່ງເສີມ ການດໍາເນີນທຸລະກິດ ກະສິກໍາ ແລະ ປ່າໄມ້ ແບບປະສົມປະສານ, ສ້າງປະຖົມປັດໃຈ ໃນການແລກປ່ຽນສິນຄ້າ, ຜະລິດຕະພັນ ໄມ້ ແລະ ເຄື່ອງປ່າຂອງດົງ ເຊັ່ນ ການເຂົ້າເຖິງຕະຫຼາດ, ການສ້າງຕະຫຼາດ ຫຼື ຈຸດແລກປ່ຽນສິນຄ້າ ຂອງຊຸມຊົນ.

## ແຜນຍຸດທະສາດ VI ສ້າງຄວາມເຂັ້ມແຂງໃຫ້ຂະແໜງການ

**ຈຸດປະສົງ:** ເພື່ອສ້າງຄວາມເຂັ້ມແຂງ ໃຫ້ຂະແໜງການ ໃນການຈັດຕັ້ງປະຕິ ບັດວຽກງານ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ສະໜັບສະໜູນ ການຈັດຕັ້ງຄາດໝາຍສູ້ຊົນ ໃຫ້ບັນລຸຕາມເປົ້າໝາຍ ທີ່ຍຸດທະສາດກໍານົດ, ປະກອບມີ 5 ແຜນວຽກຈຸດສຸມ ດັ່ງລຸ່ມນີ້:

### ແຜນວຽກຈຸດສຸມ 6.1 ການປັບປຸງກົງຈັກການຈັດຕັ້ງ ແລະ ສ້າງບຸກຄະລາກອນ

**ຈຸດປະສົງ:** ເພື່ອຮັບປະກັນ ເຮັດໃຫ້ ກົງຈັກການຈັດຕັ້ງ, ລະບົບ ແລະ ກົນໄກ ການຄຸ້ມຄອງບໍລິຫານ ໃຫ້ສອດຄ່ອງ ແລະ ມີບຸກຄະລາກອນ ທີ່ມີຄວາມຮູ້ຄວາມສາມາດ ຈັດຕັ້ງປະຕິບັດ ຍຸດທະສາດປ່າໄມ້ ຮອດປີ 2035 ແລະ ວິໄສທັດ ຮອດປີ 2050 ໃຫ້ບັນລຸຜົນຕາມຄາດໝາຍ, ປະກອບມີ 2 ໂຄງການບູລິມະສິດ:

**ໂຄງການ 1:** ປັບປຸງກົງຈັກການຈັດຕັ້ງໃນການຄຸ້ມຄອງປ່າໄມ້ ແຕ່ສູນກາງຮອດທ້ອງຖິ່ນ ໂດຍສຸມໃສ່ ທົບທວນ ແລະ ປັບປຸງ ພາລະບົດບາດ, ກໍານົດຕໍາແໜ່ງງານ ແລະ ບັນຈຸຊັບຊ້ອນ ບຸກຄະລາກອນ ໃຫ້ສອດຄ່ອງກັບຕໍາແໜ່ງງານ, ສ້າງ ແລະ ປັບປຸງ ພື້ນຖານໂຄງລ່າງ, ສິ່ງເອື້ອອໍານວຍຄວາມສະດວກ ໂດຍສະເພາະຫ້ອງການພາກສະໜາມ, ສູນຝຶກອົບຮົມ ແລະ ບໍລິການເຕັກນິກປ່າໄມ້ ແລະ ອື່ນໆ.

**ໂຄງການ 2:** ສ້າງບຸກຄະລາກອນໃຫ້ເຂັ້ມແຂງ ແລະ ທັນສະໄໝ ສາມາດເຊື່ອມໂຍງກັບສາກົນ ໂດຍສຸມໃສ່ ສ້າງ ແລະ ປະຕິບັດແຜນພັດທະນາບຸກຄະລາກອນ ໄລຍະ ສັ້ນ, ກາງ ແລະ ຍາວ, ສ້າງ ປັບປຸງ ແລະ ພັດທະນາ, ຄູ່ມື ແລະ ບົດແນະນໍາ ທາງດ້ານເຕັກນິກວິຊາການ ລວມທັງ ຕອບສະໜອງສິ່ງອໍານວຍຄວາມສະດວກທີ່ຈໍາເປັນ ເພື່ອຮັບໃຊ້ເຂົ້າໃນການຄຸ້ມຄອງ, ກວດກາ ແລະ ດໍາເນີນຄະດີ ກ່ຽວກັບປ່າໄມ້, ທີ່ດິນປ່າໄມ້ ແລະ ຊັບພະຍາກອນປ່າໄມ້.

### ແຜນວຽກຈຸດສຸມ 6.2 ສ້າງ ແລະ ປັບປຸງ ນະໂຍບາຍ ແລະ ນິຕິກໍາ

**ຈຸດປະສົງ**: ເພື່ອຮັບປະກັນ ເຮັດໃຫ້ມີນະໂຍບາຍ ອັນຈະແຈ້ງ ແລະ ມີນິຕິກໍາ ທີ່ຮັດກຸມ ສໍາລັບ ວຽກງານຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນໍາໃຊ້ ປ່າໄມ້ ແນໃສ່ເຮັດໃຫ້ສອດຄ່ອງກັບ ລະບົບການຄຸ້ມຄອງລັດ ດ້ວຍກົດໝາຍ, ປະກອບມີ 2 ໂຄງການບູລິມະສິດ:

**ໂຄງການ 1:** ສ້າງ, ປັບປຸງ ນະໂຍບາຍ ກ່ຽວກັບວຽກງານປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ສອດຄ່ອງກັບແນວທາງນະໂຍບາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແຕ່ລະໄລຍະ.

**ໂຄງການ 2:** ສ້າງ, ປັບປຸງ ນິຕິກຳ ກ່ຽວກັບວຽກງານ ປ່າໄມ້ ແລະ ທີ່ດິນປ່າໄມ້ ໂດຍສຸມໃສ່ ທົບທວນ, ປັບປຸງ ແລະ ສ້າງນິຕິກຳ ກ່ຽວກັບ ການຄຸ້ມຄອງ, ປົກປັກຮັກສາ, ກວດກາ, ພັດທະນາ ແລະ ນຳໃຊ້ ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ໃຫ້ເປັນລະບົບຄົບຊຸດ. ສ້າງ ລະບົບການຄໍ້າປະກັນ ໄມ້ ແລະ ຜະລິດຕະພັນໄມ້ ທີ່ຖືກຕ້ອງຕາມກົດໝາຍ ຂອງ ສປປ ລາວ (Lao TLAS).

### ແຜນວຽກຈຸດສຸມ 6.3 ຄົ້ນຄວ້າທົດລອງ ແລະ ຂໍ້ມູນຂ່າວສານ

**ຈຸດປະສົງ:** ແນໃສ່ຍົກປະສິດຕິພາບຂອງ ການຄົ້ນຄວ້າວິທະຍາສາດປ່າໄມ້ ໃຫ້ມີຄວາມເຂັ້ມແຂງ ແລະ ມີປະສິດທິພາບສູງ, ສາມາດ ປະກອບສ່ວນເຂົ້າ ໃນການຈັດຕັ້ງປະຕິບັດ ບັນດາແຜນງານຕ່າງໆ ໃນແຜນຍຸດທະສາດປ່າໄມ້ ຮອດປີ 2035 ແລະ ວິໄສທັດ ຮອດປີ 2050 ໃຫ້ບັນລຸຜົນຕາມຄາດໝາຍ, ປະກອບມີ 2 ໂຄງການ:

**ໂຄງການ 1:** ສ້າງ ແລະ ປັບປຸງ ຫ້ອງຄົ້ນຄວ້າທົດລອງ ແລະ ເຄື່ອງມືການຄົ້ນຄວ້າ ເພື່ອດຳເນີນການຄົ້ນຄວ້າທົດລອງ ກ່ຽວກັບ ເຕັກໂນໂລຊີ ແລະ ນະວັດຕະກຳ ການຂະຫຍາຍພັນ, ການສືບພັນ, ປັບປຸງພັນທຸກຳ, ການຈະເລີນເຕີບໂຕ ແລະ ການປຸງແຕ່ງ ເພື່ອສ້າງມູນຄ່າເພີ່ມຜະລິດຕະພັນ ໄມ້ ແລະ ເຄື່ອງປ່າຂອງດົງ ໃຫ້ມີຄຸນນະພາບ ລວມທັງ ຮູບແບບ ການອະນຸລັກ, ຄຸ້ມຄອງ ປົກປັກຮັກສາ ປ່າໄມ້, ພືດ ແລະ ສັດປ່າ, ການປູກ ແລະ ຟື້ນຟູປ່າ ເພື່ອເສດຖະກິດ ແລະ ສິ່ງແວດລ້ອມ, ການນຳໃຊ້ປ່າໄມ້ ໂດຍທາງກົງ ແລະ ທາງອ້ອມ ໃຫ້ມີປະສິດທິຜົນ.

**ໂຄງການ 2:** ພັດທະນາ ແລະ ຄຸ້ມຄອງ ຂໍ້ມູນຂ່າວສານປ່າໄມ້ ໃຫ້ເປັນລະບົບຄົບຊຸດ ແລະ ທັນສະໄໝ ໂດຍສຸມໃສ່ ປັບປຸງລະບົບການຄຸ້ມຄອງ ຂໍ້ມູນ, ຖານຂໍ້ມູນ, ການເຜີຍແຜ່, ສະໜອງ ແລະ ແລກປ່ຽນ, ຮູບແບບ ການຄຸ້ມຄອງ ປົກປັກຮັກສາ, ພັດທະນາ, ນຳໃຊ້ ປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

### ແຜນວຽກຈຸດສຸມ 6.4 ກອງທຶນປົກປັກຮັກສາປ່າໄມ້

**ຈຸດປະສົງ:** ເພື່ອຄຸ້ມຄອງ ແລະ ນຳໃຊ້ ເງິນກອງທຶນໃຫ້ຖືກຕ້ອງຕາມລະບຽບການ, ຖືກເປົ້າໝາຍມີຄວາມຍືນຍົງ, ຕອບສະໜອງທຶນໃຫ້ທັນກັບແຜນການ, ໂປ່ງໃສ ສາມາດກວດສອບໄດ້, ປະກອບມີ 2 ໂຄງການບູລິມາສິດ:

**ໂຄງການ 1 :** ສ້າງຄວາມເຂັ້ມແຂງ ກອງທຶນປົກປັກຮັກສາປ່າໄມ້[16] ໂດຍສຸມໃສ່ ພັດທະນາລະບົບ ແລະ ສ້າງຄວາມເຂັ້ມແຂງ ໃນການຄຸ້ມຄອງ ແລະ ນຳໃຊ້ ກອງທຶນປົກປັກຮັກສາປ່າໄມ້ ໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ໂປ່ງໃສ, ພັດທະນາກົນໄກ ການເກັບລາຍຮັບ, ສະສົມ, ລະດົມທຶນ ຈາກບັນດາກິດຈະການປ່າໄມ້ ແລະ ກິດຈະການທີ່ກ່ຽວຂ້ອງກັບການນຳໃຊ້ ຊັບພະຍາກອນປ່າໄມ້ ລວມທັງການປະກອບສ່ວນຈາກພາຍໃນ ແລະ ຕ່າງປະເທດ.

**ໂຄງການ 2:** ສ້າງ ແລະ ຂະຫຍາຍ ແຫຼ່ງລາຍຮັບຈາກ ການເກັບຄ່າບໍລິການ ດ້ານລະບົບນິເວດປ່າໄມ້ ໂດຍສຸມໃສ່ ສຶກສາ ກົນໄກ ການຈ່າຍຄ່າກາກບອນປ່າໄມ້ ພາຍໃນກອບ ສົນທິສັນຍາສາກົນ ວ່າດ້ວຍການປ່ຽນແປງດິນຟ້າອາກາດ ແລະ ກົນໄກອື່ນໆ ພ້ອມທັງ ສ້າງຄວາມພ້ອມ ເພື່ອສາມາດຍາດແຍ່ງໂອກາດໃນການເຂົ້າເຖິງແຫຼ່ງທຶນເຫຼົ່ານັ້ນ, ສ້າງ ລະບົບການເກັບຄ່າບໍລິການ ທາງດ້ານລະບົບນິເວດປ່າໄມ້ ແລະ ກົນໄກ ການແບ່ງປັນຜົນປະໂຫຍດ ທີ່ມີປະສິດທິພາບ, ປະສິດທິຜົນ ແລະ ເປັນທຳ.

---

[16] ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX, ມາດຕາ 131 (ປັບປຸງ) ແຫຼ່ງກອງທຶນ ກົດໝາຍ ວ່າດ້ວຍປ່າໄມ້ (ສະບັບປັບປຸງ) 2019.

**ແຜນວຽກຈຸດສຸມ 6.5 ສົ່ງເສີມ ບົດບາດຍິງ-ຊາຍ ໃນຂະແໜງການປ່າໄມ້**

**ຈຸດປະສົງ:** ເພື່ອຍົກລະດັບ ບົດບາດ ຂອງແມ່ຍິງ ຢູ່ໃນວຽກງານ ຄຸ້ມຄອງ, ປົກປັກຮັກສາ, ກວດກາ, ພັດທະນາ ແລະ ນຳໃຊ້ ຊັບພະຍາກອນປ່າໄມ້, ຮັບປະກັນ ເຮັດໃຫ້ ອັດຕາສ່ວນ ການມີສ່ວນຮ່ວມຂອງເພດຍິງ ໃນວຽກງານປ່າໄມ້ ໃຫ້ໄດ້ 35% ຂຶ້ນໄປ, ປະກອບມີ 2 ໂຄງການບູລິມາສິດ:

**ໂຄງການ 1:** ເສີມຂະຫຍາຍ ບົດບາດຍິງ-ຊາຍ ໃນການຄຸ້ມຄອງ ປົກປັກຮັກສາ ຊັບພະຍາກອນປ່າໄມ້ ໂດຍເຊື່ອມໂຍງບົດບາດຂອງແມ່ຍິງ ເຂົ້າໃນ ວຽກງານຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ຊັບພະຍາກອນປ່າໄມ້; ເຊື່ອມໂຍງ ວຽກງານບົດບາດຂອງ ແມ່ຍິງ ເຂົ້າໃນວຽກງານກວດກາ ແລະ ດຳເນີນຄະດີ ກ່ຽວກັບ ປ່າໄມ້, ທີ່ດິນປ່າໄມ້, ສັດປ່າ ແລະ ສັດນ້ຳ.

**ໂຄງການ 2:** ເສີມຂະຫຍາຍສິດ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງແມ່ຍິງບັນດາເຜົ່າ ທີ່ມີສ່ວນຮ່ວມໃນການ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ຊັບພະຍາກອນປ່າໄມ້.

## ແຜນຍຸດທະສາດ VII ການຮ່ວມມື ພາຍໃນ, ພາກພື້ນ ແລະ ສາກົນ

**ຈຸດປະສົງ:** ເພື່ອຈັດຕັ້ງຜັນຂະຫຍາຍ ແນວທາງນະໂຍບາຍ ຂອງພັກ ແລະ ລັດຖະບານ ກ່ຽວກັບການຮ່ວມມື ພາຍໃນ, ພາກພື້ນ ແລະ ສາກົນ ຕາມຫຼັກການ ບໍ່ແຊກແຊງຊຶ່ງກັນ ແລະ ກັນ, ຕ່າງຝ່າຍ ຕ່າງໄດ້ຮັບຜົນປະໂຫຍດ ແລະ ມີຜົນສຳເລັດ ຮ່ວມກັນ ແນໃສ່ຍົກລະດັບການຮ່ວມມື ທັງທາງດ້ານ ການເງິນ ແລະ ເຕັກນິກວິຊາການ, ການສຶກສາຄົ້ນຄວ້າ ທາງດ້ານວິທະຍາສາດ, ເຕັກໂນໂລຊີທີ່ທັນສະໄໝ ແລະ ນະວັດຕະກຳ.

## ແຜນຍຸດທະສາດ VIII ງົບປະມານ ແລະ ແຫຼ່ງທຶນ

ງົບປະມານເພື່ອຈັດຕັ້ງປະຕິບັດ ຍຸດທະສາດປ່າໄມ້ ຮອດປີ 2035 ແລະ ວິໄສທັດ ຮອດປີ 2050 ແມ່ນຈະໄດ້ຈາກ ການລະດົມຂົນຂວາຍ ແລະ ນຳໃຊ້ ແຫຼ່ງທຶນຈາກພາກສ່ວນຕ່າງໆ ເປັນຕົ້ນແມ່ນ ງົບປະມານຂອງລັດ, ແຫຼ່ງທຶນຮ່ວມມືຈາກການອົງການຈັດຕັ້ງສາກົນ ດ້ວຍຮູບແບບການຊ່ວຍເຫຼືອລ້າ ແລະ ກູ້ຢືມ, ແຫຼ່ງທຶນຈາກ ພາກສ່ວນເອກະຊົນ ທັງພາຍໃນ ແລະ ຕ່າງປະເທດ ແລະ ທຶນຂອງປະຊາຊົນ. ພາກສ່ວນທີ່ນຳໃຊ້ທຶນດັ່ງກ່າວ ຈະຕ້ອງຍົກສູງປະສິດທິພາບ, ປະສິດທິຜົນ ແລະ ຄຸນນະພາບ ຂອງການນຳໃຊ້ທຶນ ໂດຍເລັ່ງໃສ່ຮັບໃຊ້ ບັນດາ ແຜນຍຸດທະສາດ, ແຜນວຽກຈຸດສຸມ ແລະ ໂຄງການບູລິມະສິດ ທີ່ກຳນົດໄວ້ ໃນຍຸດທະສາດປ່າໄມ້ສະບັບນີ້.

## ພາກທີ III: ຫຼັກການ ແລະ ມາດຕະການ ຈັດຕັ້ງປະຕິບັດ

ເພື່ອຮັບປະກັນເຮັດໃຫ້ ຈຸດປະສົງ ແລະ ຄາດໝາຍສູ້ຊົນ ດັ່ງທີ່ໄດ້ກຳນົດໄວ້ຂ້າງເທິງ ໃຫ້ປາກົດຜົນເປັນຈິງ, ຍຸດທະສາດປ່າໄມ້ ຮອດປີ 2035 ຈຶ່ງກຳນົດ ຫຼັກການ ແລະ ມາດຕະການຈັດຕັ້ງປະຕິບັດ ດັ່ງລຸ່ມນີ້:

### 3.1 ຫຼັກການໃນການຈັດຕັ້ງປະຕິບັດ

ຫຼັກການພື້ນຖານ ອັນສຳຄັນ ທີ່ນຳໃຊ້ ສຳລັບການຈັດຕັ້ງປະຕິບັດ ຍຸດທະສາດປ່າໄມ້ ຮອດປີ 2035 ແລະ ວິໄສທັດ 2050 ມີດັ່ງນີ້:

1) ຫຼັກການຄວາມຍືນຍົງຂອງ ກິດຈະກຳ ແລະ ຄວາມສອດຄ່ອງກັບ ກົດໝາຍ, ສະພາບຂອງເສດຖະກິດສັງຄົມ ແລະ ສິ່ງແວດລ້ອມທຳມະຊາດ ຂອງທ້ອງຖິ່ນ;
2) ຖືສຳຄັນສົ່ງເສີມ ການມີສ່ວນຮ່ວມ ແລະ ການເປັນເຈົ້າການຂອງປະຊາຊົນບັນດາເຜົ່າ ທີ່ມີຊີວິດການເປັນຢູ່ຕິດພັນກັບປ່າໄມ້;
3) ເສີມຂະຫຍາຍບົດບາດລວມ ຂອງຂະແໜງການ ແລະ ບົດບາດຍິງ-ຊາຍ;
4) ຍົກສູງການຮ່ວມມືກັບ ອົງການຈັດຕັ້ງສາກົນ, ຫົວໜ່ວຍທຸລະກິດ ແລະ ອົງການຈັດຕັ້ງທາງສັງຄົມ;

5) ຮັບປະກັນ ຄວາມໂປ່ງໃສ, ການມີສ່ວນຮ່ວມ, ຄວາມເປັນເຈົ້າການ ແລະ ການແບ່ງປັນຜົນ ປະໂຫຍດທີ່ຍຸຕິທຳ.

## 3.2 ມາດຕະການຈັດຕັ້ງປະຕິບັດ

ມາດຕະການ ອັນສຳຄັນ ທີ່ນຳໃຊ້ ສຳລັບການຈັດຕັ້ງປະຕິບັດ ຍຸດທະສາດປ່າໄມ້ ຮອດປີ 2035 ແລະ ວິໄສທັດ 2050 ມີດັ່ງນີ້:

### 3.2.1 ອົງການຈັດຕັ້ງ ແລະ ການປະສານງານ

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຄຸ້ມຄອງຂັ້ນມະຫາພາກ ຊຸກຍູ້, ຕິດຕາມ, ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດ ຍຸດທະສາດປ່າໄມ້, ຂັ້ນທ້ອງຖິ່ນ ເປັນຜູ້ຈັດຕັ້ງປະຕິບັດ ຍຸດທະສາດປ່າໄມ້ ໂດຍຜັນຂະຫຍາຍຍຸດທະສາດປ່າໄມ້ ສະບັບນີ້ ເປັນຍຸດທະສາດປ່າໄມ້ ຂັ້ນແຂວງ ອີງໃສ່ ສະພາບຄວາມ ເປັນຈິງຂອງແຕ່ລະທ້ອງຖິ່ນ ແລະ ຈັດຕັ້ງປະຕິບັດ ໂດຍການມີສ່ວນຮ່ວມຂອງພາກສ່ວນ ກ່ຽວຂ້ອງ ເປັນຕົ້ນແມ່ນ ຂະແໜງການລັດທີ່ກ່ຽວຂ້ອງຄູ່ຮ່ວມພັດທະນາ, ພາກທຸລະກິດ ແລະ ຜູ້ປະກອບການ, ປະຊາຊົນ, ອົງການຈັດຕັ້ງທາງສັງຄົມ ແລະ ອື່ນໆ ຕາມຂອບເຂດສິດ ແລະ ໜ້າທີ່ຂອງຕົນ.

### 3.2.2 ນະໂຍບາຍ ແລະ ນິຕິກຳ ສະໜັບສະໜູນ

ການຈັດຕັ້ງປະຕິບັດ ຍຸດທະສາດປ່າໄມ້ ສະບັບນີ້ ຕ້ອງໄດ້ສ້າງ ແລະ ປັບປຸງ ນະໂຍບາຍ, ນິຕິກຳ ໃຕ້ກົດໝາຍ ເພື່ອເປັນບ່ອນອີງ ແລະ ສະໜັບສະໜູນ ວຽກງານແຕ່ລະດ້ານໃຫ້ລະອຽດ ໂດຍສະເພາະ ນະໂຍບາຍ ສົ່ງເສີມການລົງທຶນ ໃສ່ການ ຄຸ້ມຄອງ ແລະ ປົກປັກຮັກສາ ປ່າໄມ້, ການປູກ ໄມ້ ແລະ ເຄື່ອງປ່າຂອງດົງ, ການຟື້ນຟູ ແລະ ປັບປຸງຄຸນະພາບຂອງປ່າໄມ້, ສົ່ງເສີມການນຳໃຊ້ຊັບພະຍາກອນປ່າໄມ້, ການພັດທະນາກິດຈະການປ່າໄມ້ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ. ສ້າງພື້ນຖານວັດຖຸເຕັກນິກ ເພື່ອປົກປັກຮັກສາສິ່ງແວດລ້ອມ, ແຫຼ່ງນໍ້າ, ຊີວະນານາພັນ ແລະ ການດຳລົງຊີວິດຂອງປະຊາຊົນບັນດາເຜົ່າ ລວມທັງການຈັດສັນອາຊີບຄົງທີ່ ໃຫ້ປະຊາຊົນໃນເຂດປ່າໄມ້.

### 3.2.3 ການຕິດຕາມ ແລະ ປະເມີນຜົນ

ການຕິດຕາມ ແລະ ປະເມີນຜົນ ແມ່ນອີງໃສ່ ຄາດໝາຍສູ້ຊົນ, ຈຸດປະສົງ ແລະ ຄາດຄະເນຜົນໄດ້ຮັບ ທີ່ໄດ້ກຳນົດໃນ ພາກທີ II, ຂໍ້ 2.4, ແລະ ສ້າງຮູບແບບ ໃນການ ຕິດຕາມ, ກວດກາ ແລະ ປະເມີນຜົນ (Mornitoring and Evaluation Framework) ໂດຍການມີສ່ວນຮ່ວມຂອງຂັ້ນ ສູນກາງ ແລະ ທ້ອງຖິ່ນ ຢ່າງເປັນລະບົບຕໍ່ເນື່ອງ. ກົມປ່າໄມ້ ຮ່ວມກັບຂະແໜງການທີ່ກ່ຽວຂ້ອງ ຈະມີການຈັດຕັ້ງປະຕິບັດຕາມລະບອບການ ຕິດຕາມ, ກວດກາ ແລະ ລາຍງານເປັນແຕ່ລະໄລຍະ ແລະ ໃຫ້ສອດຄ່ອງກັບແຜນພັດທະນາ ເສດຖະກິດ-ສັງຄົມ 5 ປີ ແຕ່ລະຄັ້ງ. ນອກຈາກນັ້ນ, ຍັງຈະມີການຈັດກອງປະຊຸມ ສຳມະນາ ຮ່ວມກັບທຸກພາກສ່ວນ ເພື່ອຖອດຖອນບົດຮຽນ ກ່ຽວກັບ ການຈັດຕັ້ງປະຕິບັດຍຸດທະສາດ ໄປແຕ່ລະໄລຍະ.

## ເອກະສານຊ້ອນທ້າຍ 1: ກອບໃນການຈັດຕັ້ງປະຕິບັດ

# ເອກະສານຊ້ອນທ້າຍ 1: ກອບໃນການຈັດຕັ້ງປະຕິບັດ

## ແຜນຍຸດທະສາດ I ຄຸ້ມຄອງ ແລະ ປົກປັກຮັກສາ ປ່າໄມ້

### ແຜນວຽກຈຸດສຸມ 1.1 ຄຸ້ມຄອງ ແລະ ປົກປັກຮັກສາ ປ່າປ້ອງກັນ

| ໂຄງການ ແລະ ວຽກຈຸດສຸມ ທີ່ສະເໜີ (ໂຄງການທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ |
|---|---|---|---|
| **ໂຄງການ 1:** ກຳນົດເຂດ ປ່າປ້ອງກັນ ແລະ ທີ່ດິນປ່າປ້ອງກັນ ລະດັບ ຊາດ, ແຂວງ, ເມືອງ ແລະ ບ້ານ. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ<br>- ອົງການປົກຄອງ ຂັ້ນທ້ອງຖິ່ນ | ສູງ, ຮອດປີ 2035 |
| **ໂຄງການ 2:** ຊຸກຍູ້ ແລະ ສົ່ງເສີມ ການຈັດຕັ້ງປະຕິບັດ ແຜນການຄຸ້ມຄອງ ແລະ ປົກປັກຮັກສາ ປ່າປ້ອງກັນ. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ອົງການປົກຄອງ ຂັ້ນທ້ອງຖິ່ນ | ສູງ, ຮອດປີ 2035 |
| **ໂຄງການ 3:** ກຳນົດເຂດ ແລະ ສ້າງແຜນ ການຄຸ້ມຄອງ ແລະ ປົກປັກຮັກສາເຂດ ແຫຼ່ງນ້ຳ, ປ່າຍອດນ້ຳ, ປ່າແຄມນ້ຳ ແລະ ແຄມທາງ ຕາມສາຂາແມ່ນ້ຳຕ່າງໆ. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ<br>- ອົງການປົກຄອງ ຂັ້ນທ້ອງຖິ່ນ | ສູງ, ຮອດປີ 2035 |

### ແຜນວຽກຈຸດສຸມ 1.2 ຄຸ້ມຄອງ ແລະ ປົກປັກຮັກສາ ປ່າສະຫງວນ

| ໂຄງການ ແລະ ວຽກຈຸດສຸມ ທີ່ສະເໜີ (ໂຄງການທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ |
|---|---|---|---|
| **ໂຄງການ 1:** ກຳນົດເຂດ ປ່າສະຫງວນ ແລະ ທີ່ດິນປ່າສະຫງວນ ລະດັບຊາດ, ແຂວງ, ເມືອງ ແລະ ບ້ານ. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ<br>- ອົງການປົກຄອງຂັ້ນທ້ອງຖິ່ນ | ສູງ, ຮອດປີ 2035 |
| **ໂຄງການ 2:** ຊຸກຍູ້ ແລະ ສົ່ງເສີມ ການຈັດຕັ້ງປະຕິບັດ ແຜນການຄຸ້ມຄອງ ແລະ ປົກປັກຮັກສາ ປ່າສະຫງວນ. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ອົງການປົກຄອງຂັ້ນທ້ອງຖິ່ນ | ສູງ, ຮອດປີ 2035 |

**ແຜນວຽກຈຸດສຸມ 1.3 ຄຸ້ມຄອງ ແລະ ປົກປັກຮັກສາ ປ່າຜະລິດ**

| ໂຄງການ ແລະ ວຽກຈຸດສຸມ ທີ່ສະເໜີ (ໂຄງການທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ |
|---|---|---|---|
| **ໂຄງການ 1:** ກຳນົດເຂດ ປ່າຜະລິດ ແລະ ທີ່ດິນປ່າຜະລິດ. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ<br>- ອົງການປົກຄອງຂັ້ນທ້ອງຖິ່ນ | ສູງ, ຮອດປີ 2035 |
| **ໂຄງການ 2:** ຊຸກຍູ້ ແລະ ສົ່ງເສີມ ການຈັດຕັ້ງປະຕິບັດ ແຜນການຄຸ້ມຄອງ ແລະ ປົກປັກຮັກສາ ປ່າຜະລິດ. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ອົງການປົກຄອງຂັ້ນທ້ອງຖິ່ນ | ສູງ, ຮອດປີ 2035 |

**ແຜນວຽກຈຸດສຸມ 1.4 ຄຸ້ມຄອງ ແລະ ປົກປັກຮັກສາ ທີ່ດິນບໍລິເວນນ້ຳ**

| ໂຄງການ ແລະ ວຽກຈຸດສຸມ ທີ່ສະເໜີ (ໂຄງການທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ |
|---|---|---|---|
| **ໂຄງການ 1:** ສຳຫຼວດ ແລະ ກຳນົດເຂດທີ່ດິນບໍລິເວນນ້ຳ | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ອົງການປົກຄອງຂັ້ນທ້ອງຖິ່ນ | ກາງ, ຮອດປີ 2035 |
| **ໂຄງການ 2:** ຊຸກຍູ້ ແລະ ສົ່ງເສີມ ການຈັດຕັ້ງປະຕິບັດແຜນຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນ້ຳໃຊ້ທີ່ດິນບໍລິເວນນ້ຳ | ກະຊວງກະສິກຳ ແລະ ປ່າໄມ້ | - ອົງການປົກຄອງຂັ້ນທ້ອງຖິ່ນ | ກາງ, ຮອດປີ 2035 |

**ແຜນວຽກຈຸດສຸມ 1.5 ຄຸ້ມຄອງ ແລະ ປົກປັກຮັກສາ ຊີວະນານາພັນ, ພັນໄມ້, ພັນພືດ ແລະ ພັນສັດປ່າ**

| ໂຄງການ ແລະ ວຽກຈຸດສຸມ ທີ່ສະເໜີ (ໂຄງການທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ |
|---|---|---|---|
| **ໂຄງການ 1:** ຄຸ້ມຄອງ ແຫຼ່ງແກ່ນພັນ ໄມ້ ແລະ ເຄື່ອງປ່າຂອງດົງ. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ອົງການປົກຄອງຂັ້ນທ້ອງຖິ່ນ | ກາງ, ຮອດປີ 2035 |
| **ໂຄງການ 2:** ກຳນົດ ແລະ ປັບປຸງ ບັນຊີໄມ້, ເຄື່ອງປ່າຂອງດົງ, ສັດນ້ຳ ແລະ ສັດປ່າ ທີ່ຫາຍາກ ແລະ ໃກ້ຈະສູນພັນ. | ກະຊວງກະສິກຳ ແລະ ປ່າໄມ້ | - ອົງການປົກຄອງຂັ້ນທ້ອງຖິ່ນ | ກາງ, ຮອດປີ 2035 |

| | | | |
|---|---|---|---|
| **ໂຄງການ 3:** ຄຸ້ມຄອງ ເຂດອະນຸລັກ ຊີວະນານາພັນ ທີ່ຫາຍາກ ແລະ ໃກ້ຈະສູນພັນ. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ອົງການປົກຄອງຂັ້ນທ້ອງຖິ່ນ | ກາງ, ຮອດປີ 2035 |
| **ໂຄງການ 4:** ໂຄສະນາ ເຜີຍແຜ່ ແລະ ປູກຈິດສຳນຶກ ການປົກປັກຮັກສາຊັບພະຍາກອນປ່າໄມ້ ແລະ ສ້າງຂະບວນການ ອະນຸລັກຊີວະນານາພັນ, ສັດນ້ຳ ແລະ ສັດປ່າ. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ອົງການປົກຄອງຂັ້ນທ້ອງຖິ່ນ | ກາງ, ຮອດປີ 2035 |

**ແຜນວຽກຈຸດສຸມ 1.6 ສະກັດກັ້ນ ແລະ ຕ້ານ ການບຸກລຸກ ແລະ ທຳລາຍ ປ່າໄມ້ ແລະ ທີ່ດິນປ່າໄມ້**

| ໂຄງການ ແລະ ວຽກຈຸດສຸມ ທີ່ສະເໜີ (ໂຄງການທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບູລິມະສິດ ແລະ ຄາດໝາຍເວລາ |
|---|---|---|---|
| **ໂຄງການ 1:** ປັບປຸງ ລະບົບຕິດຕາມ ກວດກາ ການບຸກລຸກ ແລະ ທຳລາຍ ຊັບພະຍາກອນປ່າໄມ້ ໃຫ້ມີປະສິດທິພາບ. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ອົງການປົກຄອງຂັ້ນທ້ອງຖິ່ນ | ກາງ, ຮອດປີ 2035 |
| **ໂຄງການ 2:** ປັບປຸງ ລະບົບການປະສານງານ, ການຮ່ວມມື ແລະ ການແລກປ່ຽນຂໍ້ມູນຂ່າວສານ ກັບບັນດາເຄືອຂ່າຍ ພາຍໃນ, ພາກພື້ນ ແລະ ສາກົນ. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ<br>- ອົງການໄອຍາການປະຊາຊົນ<br>- ສານປະຊາຊົນສູງສຸດ<br>- ກະຊວງ ປກສ<br>- ອົງການປົກຄອງຂັ້ນທ້ອງຖິ່ນ | ສູງ, ຮອດປີ 2035 |
| **ໂຄງການ 3:** ສ້າງຄວາມເຂັ້ມແຂງ ໃຫ້ແກ່ ອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ປ່າໄມ້, ອົງການໄອຍະການປະຊາຊົນ ແລະ ສານປະຊາຊົນສູງສຸດ. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ<br>- ອົງການໄອຍາການປະຊາຊົນ<br>- ສານປະຊາຊົນສູງສຸດ<br>- ກະຊວງ ປກສ<br>- ອົງການປົກຄອງຂັ້ນທ້ອງຖິ່ນ | ກາງ, ຮອດປີ 2035 |
| **ໂຄງການ 4:** ເພີ່ມທະວີ ຄວາມເຂັ້ມງວດ ໃນການສະກັດກັ້ນ ແລະ ຕ້ານ ການບຸກລຸກທຳລາຍ ປ່າໄມ້ ແລະ ທີ່ດິນປ່າໄມ້, ການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້; ການຄຸ້ມຄອງ ແລະ ກວດກາ ສັດປ່າ ແລະ ພືດປ່າ ປະເພດຫວງຫ້າມ. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ<br>- ອົງການປົກຄອງຂັ້ນທ້ອງຖິ່ນ | ສູງ, ຮອດປີ 2035 |

| | | | |
|---|---|---|---|
| **ໂຄງການ 5:** ການຕ້ານ ແລະ ສະກັດກັ້ນ ໄຟໄໝ້ລາມປ່າ ໃນເຂດ ປ່າໄມ້ ແລະ ທີ່ດິນປ່າໄມ້. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ອົງການປົກຄອງຂັ້ນທ້ອງຖິ່ນ | ສູງ, ຮອດປີ 2035 |

## ແຜນຍຸດທະສາດ II ປູກ ແລະ ຟື້ນຟູບູລະນະປ່າໄມ້

### ແຜນວຽກຈຸດສຸມ 2.1 ສົ່ງເສີມປູກ ໄມ້ ແລະ ເຄື່ອງປ່າຂອງດົງ

| ໂຄງການ ແລະ ວຽກຈຸດສຸມ ທີ່ສະເໜີ (ໂຄງການທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ |
|---|---|---|---|
| **ໂຄງການ 1:** ພັດທະນາແຜນແມ່ບົດການປູກ ໄມ້ ແລະ ເຄື່ອງປ່າຂອງດົງ ແຫ່ງຊາດ. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ<br>- ອົງການປົກຄອງຂັ້ນທ້ອງຖິ່ນ | ກາງ, ຮອດປີ 2035 |
| **ໂຄງການ 2:** ສົ່ງເສີມການປູກ ໄມ້ ແລະ ເຄື່ອງປ່າຂອງດົງ ເພື່ອປົກປັກຮັກສາ ສິ່ງແວດລ້ອມ, ແຫຼ່ງນ້ຳ, ຊີວະນານາພັນ ແລະ ການບໍລິການທາງດ້ານລະບົບນິເວດປ່າໄມ້. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ<br>- ອົງການປົກຄອງຂັ້ນທ້ອງຖິ່ນ | ກາງ, ຮອດປີ 2035 |
| **ໂຄງການ 3:** ສົ່ງເສີມການປູກ ໄມ້ ແລະ ເຄື່ອງປ່າຂອງດົງ ເປັນສິນຄ້າ, | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ<br>- ອົງການປົກຄອງຂັ້ນທ້ອງຖິ່ນ | ກາງ, ຮອດປີ 2035 |
| **ໂຄງການ 4:** ສົ່ງເສີມການຂຶ້ນທະບຽນ ປ່າປູກ ແລະ ຢັ້ງຢືນ ໄມ້ປູກ, ເຄື່ອງປ່າຂອງດົງທີ່ປູກ ແລະ ໄມ້ທຳມະຊາດ. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ອົງການປົກຄອງຂັ້ນທ້ອງຖິ່ນ | ສູງ, ຮອດປີ 2035 |

### ແຜນວຽກຈຸດສຸມ 2.2 ຟື້ນຟູປ່າໄມ້ ເພື່ອສິ່ງແວດລ້ອມ ແລະ ຊີວະນານາພັນ

| ໂຄງການ ແລະ ວຽກຈຸດສຸມ ທີ່ສະເໜີ (ໂຄງການທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ |
|---|---|---|---|
| **ໂຄງການ 1:** ພັດທະນາ ແຜນແມ່ບົດ ການຟື້ນຟູປ່າໄມ້ ແຫ່ງຊາດ. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ອົງການປົກຄອງຂັ້ນທ້ອງຖິ່ນ | ສູງ, ຮອດປີ 2035 |

| | | | |
|---|---|---|---|
| **ໂຄງການ 2:** ຊຸກຍູ້ ແລະ ສົ່ງເສີມ ການຈັດຕັ້ງປະຕິບັດ ແຜນແມ່ບົດການຟື້ນຟູປ່າໄມ້. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ອົງການປົກຄອງຂັ້ນທ້ອງຖິ່ນ | ສູງ, ຮອດປີ 2035 |

# ແຜນຍຸດທະສາດ III ນຳໃຊ້ ປ່າໄມ້ ແລະ ທີ່ດິນປ່າໄມ້

## ແຜນວຽກຈຸດສຸມ 3.1 ອຸດສາຫະກຳ ການທ່ອງທ່ຽວແບບອະນຸລັກທຳມະຊາດ

| ໂຄງການ ແລະ ວຽກຈຸດສຸມ ທີ່ສະເໜີ (ໂຄງການທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບູລິມະສິດ ແລະ ຄາດໝາຍເວລາ |
|---|---|---|---|
| **ໂຄງການ 1:** ສົ່ງເສີມທຸລະກິດການທ່ອງທ່ຽວແບບອະນຸລັກທຳມະຊາດ ໃນເຂດປ່າໄມ້ ໂດຍສຸມໃສ່ ການສຳຫຼວດ ແລະ ກຳນົດ ຊັບພະຍາກອນທ່ອງທ່ຽວຕາມທຳມະຊາດ ທີ່ມີທ່າແຮງ ໃນເຂດປ່າໄມ້ ແລະ ທີ່ດິນປ່າໄມ້. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ຂະແໜງການຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ<br>- ອົງການປົກຄອງຂັ້ນທ້ອງຖິ່ນ | ກາງ, ຮອດປີ 2035 |
| **ໂຄງການ 2:** ການພັດທະນາ ແລະ ສ້າງຄວາມເຂັ້ມແຂງ ດ້ານການບໍລິການ ການທ່ອງທ່ຽວ ໃຫ້ແກ່ປະຊາຊົນບັນດາເຜົ່າ. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ຂະແໜງການຖະແຫຼງຂ່າວ, ວັດທະນາທຳ ແລະ ທ່ອງທ່ຽວ<br>- ອົງການປົກຄອງຂັ້ນທ້ອງຖິ່ນ | ກາງ, ຮອດປີ 2035 |

## ແຜນວຽກຈຸດສຸມ 3.2 ການຊື້ ຂາຍສິນເຊື່ອກາກບອນປ່າໄມ້

| ໂຄງການ ແລະ ວຽກຈຸດສຸມ ທີ່ສະເໜີ (ໂຄງການທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບູລິມະສິດ ແລະ ຄາດໝາຍເວລາ |
|---|---|---|---|
| **ໂຄງການ 1:** ສ້າງປະຖົມປັດໃຈ ໃຫ້ແກ່ ການພັດທະນາໂຄງການສິນເຊື່ອກາກບອນປ່າໄມ້. | ກະຊວງກະສິກຳ ແລະ ປ່າໄມ້ | - ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ<br>- ອົງການປົກຄອງຂັ້ນທ້ອງຖິ່ນ | ສູງ, ຮອດປີ 2035 |
| **ໂຄງການ 2:** ສົ່ງເສີມ ທຸລະກິດຊື້ ຂາຍສິນເຊື່ອກາກບອນປ່າໄມ້. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ<br>- ອົງການປົກຄອງຂັ້ນທ້ອງຖິ່ນ | ສູງ, ຮອດປີ 2035 |

| | | | |
|---|---|---|---|
| **ໂຄງການ 3:** ສົ່ງເສີມການພັດທະນາພະລັງງານສະອາດ | ຂະແໜງການພະລັງງານ ແລະ ບໍ່ແຮ່ | - ກະຊວງພະລັງງານ ແລະ ບໍ່ແຮ່<br>- ອົງການປົກຄອງຂັ້ນທ້ອງຖິ່ນ | ສູງ, ຮອດປີ 2025 |

## ແຜນຍຸດທະສາດ IV ພັດທະນາອຸດສາຫະກຳປຸງແຕ່ງ ໄມ້ ແລະ ເຄື່ອງປ່າຂອງດົງ

### ແຜນວຽກຈຸດສຸມ 4.1 ພັດທະນາ ອຸດສາຫະກຳປຸງແຕ່ງໄມ້

| ໂຄງການ ແລະ ວຽກຈຸດສຸມ ທີ່ສະເໜີ (ໂຄງການທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ |
|---|---|---|---|
| **ໂຄງການ 1:** ຄຸ້ມຄອງ ແລະ ປັບປຸງດັດສົມ ໂຮງງານອຸດສາຫະກຳປຸງແຕ່ງໄມ້ ໃຫ້ໄດ້ຕາມມາດຕະຖານ, ເຂົ້າສູ່ລະບົບ ແລະ ປະຕິບັດ ໃຫ້ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ຂະແໜງການອຸດສາຫະກຳ ແລະ ການຄ້າ<br>- ຂະແໜງການໂຍທາ ແລະ ຂົນສົ່ງ<br>- ຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ<br>- ອົງການປົກຄອງຂັ້ນທ້ອງຖິ່ນ | ສູງ, ຮອດປີ 2035 |
| **ໂຄງການ 2:** ສົ່ງເສີມ ການປຸງແຕ່ງຜະລິດຕະພັນໄມ້ ຂະໜາດ ນ້ອຍ ແລະ ກາງ ເພື່ອເປັນສິນຄ້າ. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ຂະແໜງການອຸດສາຫະກຳ ແລະ ການຄ້າ<br>- ອົງການປົກຄອງຂັ້ນທ້ອງຖິ່ນ | ສູງ, ຮອດປີ 2035 |
| **ໂຄງການ 3:** ສົ່ງເສີມທຸລະກິດການປຸງແຕ່ງໄມ້ ໃຫ້ເຂັ້ມແຂງ. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ຂະແໜງການອຸດສາຫະກຳ ແລະ ການຄ້າ<br>- ອົງການປົກຄອງຂັ້ນທ້ອງຖິ່ນ | ກາງ, ຮອດປີ 2035 |

### ແຜນວຽກຈຸດສຸມ 4.2 ອຸດສາຫະກຳປຸງແຕ່ງເຄື່ອງປ່າຂອງດົງ

| ໂຄງການ ແລະ ວຽກຈຸດສຸມ ທີ່ສະເໜີ (ໂຄງການທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ |
|---|---|---|---|
| **ໂຄງການ 1:** ຄຸ້ມຄອງ ແລະ ປັບປຸງດັດສົມ ໂຮງງານອຸດສາຫະກຳປຸງແຕ່ງເຄື່ອງປ່າຂອງດົງ. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ຂະແໜງການອຸດສາຫະກຳ ແລະ ການຄ້າ<br>- ຂະແໜງການສາທາລະນະສຸກ | ສູງ, ຮອດປີ 2035 |

| | | | |
|---|---|---|---|
| | | - ອົງການປົກຄອງຂັ້ນທ້ອງຖິ່ນ | |
| **ໂຄງການ 2:** ສົ່ງເສີມທຸລະກິດ ການປຸງແຕ່ງເຄື່ອງປ່າຂອງດົງ. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ຂະແໜງການອຸດສາຫະກຳ ແລະ ການຄ້າ<br>- ຂະແໜງການສາທາລະນະສຸກ<br>- ອົງການປົກຄອງຂັ້ນທ້ອງຖິ່ນ | ກາງ, ຮອດປີ 2035 |
| **ໂຄງການ 3:** ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ລົງທຶນເຂົ້າໃນການພັດທະນາ ຕ່ອງໂສ້ ສ້າງມູນຄ່າເພີ່ມ ເຄື່ອງປ່າຂອງດົງ ແບບມີສ່ວນຮ່ວມຂອງປະຊາຊົນບັນດາເຜົ່າ. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ຂະແໜງການອຸດສາຫະກຳ ແລະ ການຄ້າ<br>- ຂະແໜງການສາທາລະນະສຸກ<br>- ຂະແໜງການເງິນ<br>- ສູນກາງແນວລາວສ້າງຊາດ<br>- ອົງການປົກຄອງຂັ້ນທ້ອງຖິ່ນ | ກາງ, ຮອດປີ 2035 |

## ແຜນຍຸດທະສາດ V ພັດທະນາຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ ໃນເຂດປ່າໄມ້

### ແຜນວຽກຈຸດສຸມ 5.1 ຈັດສັນ ເຂດທຳການຜະລິດໃຫ້ປະຊາຊົນບັນດາເຜົ່າ ໃນເຂດປ່າໄມ້

| ໂຄງການ ແລະ ວຽກຈຸດສຸມ ທີ່ສະເໜີ (ໂຄງການທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ |
|---|---|---|---|
| **ໂຄງການ 1:** ຮັບຮູ້ສິດການນຳໃຊ້ທີ່ດິນຂອງປະຊາຊົນບັນດາເຜົ່າ ທີ່ອາໄສ ແລະ ທຳການຜະລິດຢູ່ ໃນເຂດ ປ່າປ້ອງກັນ, ປ່າສະຫງວນ ແລະ ປ່າຜະລິດ. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ<br>- ອົງການປົກຄອງຂັ້ນທ້ອງຖິ່ນ | ສູງ, ຮອດປີ 2035 |
| **ໂຄງການ 2:** ຊຸກຍູ້, ສົ່ງເສີມ ການສ້າງ ແລະ ປັບປຸງ ການຈັດສັນທີ່ດິນປ່າໄມ້. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ<br>- ອົງການປົກຄອງຂັ້ນທ້ອງຖິ່ນ | ສູງ, ຮອດປີ 2035 |

### ແຜນວຽກຈຸດສຸມ 5.2 ພັດທະນາອາຊີບ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນບັນດາເຜົ່າ

| ໂຄງການ ແລະ ວຽກຈຸດສຸມ ທີ່ສະເໜີ (ໂຄງການທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ |
|---|---|---|---|

| | | | |
|---|---|---|---|
| **ໂຄງການ 1:** ສ້າງຄວາມເຂັ້ມແຂງ ໃຫ້ປະຊາຊົນ ດ້ວຍການສ້າງຕັ້ງ ກຸ່ມ ຫຼື ສະຫະກອນປູກ ໄມ້ ແລະ ເຄື່ອງປ່າຂອງດົງ ຂອງຊຸມຊົນ. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ກະຊວງພາຍໃນ<br>- ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ<br>- ອົງການປົກຄອງຂັ້ນທ້ອງຖິ່ນ | ກາງ, ຮອດປີ 2035 |
| **ໂຄງການ 2:** ການຊຸກຍູ້ ການຜະລິດກະສິກຳ-ປ່າໄມ້ ແລະ ລ້ຽງສັດ-ປ່າໄມ້ ແບບປະສົມປະສານ (Agro-Silvo-Pastural). | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ອົງການປົກຄອງຂັ້ນທ້ອງຖິ່ນ | ກາງ, ຮອດປີ 2035 |
| **ໂຄງການ 3:** ສົ່ງເສີມ ການດຳເນີນທຸລະກິດ ກະສິກຳ-ປ່າໄມ້ ແລະ ລ້ຽງສັດ-ປ່າໄມ້ ແບບປະສົມປະສານ (Agro-Silvo-Pastural) ຂະໜາດນ້ອຍ ຂອງຄອບຄົວ ແລະ ຊຸມຊົນ. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ອົງການປົກຄອງຂັ້ນທ້ອງຖິ່ນ | ກາງ, ຮອດປີ 2035 |

## ແຜນຍຸດທະສາດ VI ສ້າງຄວາມເຂັ້ມແຂງໃຫ້ຂະແໜງການ

### ແຜນວຽກຈຸດສຸມ 6.1 ການປັບປຸງກົງຈັກການຈັດຕັ້ງ ແລະ ສ້າງບຸກຄະລາກອນ

| ໂຄງການ ແລະ ວຽກຈຸດສຸມ ທີ່ສະເໜີ (ໂຄງການທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບູລິມະສິດ ແລະ ຄາດໝາຍເວລາ |
|---|---|---|---|
| **ໂຄງການ 1:** ປັບປຸງກົງຈັກການຈັດຕັ້ງໃນການຄຸ້ມຄອງປ່າໄມ້ ແຕ່ສູນກາງຮອດທ້ອງຖິ່ນ. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ຂະແໜງການພາຍໃນ<br>- ອົງການປົກຄອງຂັ້ນທ້ອງຖິ່ນ | ກາງ, ຮອດປີ 2035 |
| **ໂຄງການ 2:** ສ້າງບຸກຄະລາກອນໃຫ້ເຂັ້ມແຂງ ແລະ ທັນສະໄໝ ສາມາດເຊື່ອມໂຍງກັບສາກົນ. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ຂະແໜງການສຶກສາທິການ ແລະ ກິລາ<br>- ອົງການປົກຄອງຂັ້ນທ້ອງຖິ່ນ | ກາງ, ຮອດປີ 2035 |

### ແຜນວຽກຈຸດສຸມ 6.2 ສ້າງ ແລະ ປັບປຸງ ນະໂຍບາຍ ແລະ ນິຕິກຳ

| ໂຄງການ ແລະ ວຽກຈຸດສຸມ ທີ່ສະເໜີ (ໂຄງການທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບູລິມະສິດ ແລະ ຄາດໝາຍເວລາ |
|---|---|---|---|
| **ໂຄງການ 1:** ສ້າງ, ປັບປຸງ ນະໂຍບາຍ ກ່ຽວກັບວຽກງານ ປ່າໄມ້ ແລະ ທີ່ດິນປ່າໄມ້ ໃຫ້ສອດຄ່ອງກັບແນວທາງນະໂຍບາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ແຕ່ລະໄລຍະ. | ກະຊວງກະສິກຳ ແລະ ປ່າໄມ້ | - ອົງການປົກຄອງຂັ້ນທ້ອງຖິ່ນ | ກາງ, ຮອດປີ 2035 |

| | | | |
|---|---|---|---|
| **ໂຄງການ 2:** ສ້າງ, ປັບປຸງ ນິຕິກຳ ກ່ຽວກັບວຽກງານ ປ່າໄມ້ ແລະ ທີ່ດິນປ່າໄມ້. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ຂະແໜງການຍຸຕິທຳ<br>- ອົງການປົກຄອງຂັ້ນທ້ອງຖິ່ນ | ກາງ, ຮອດປີ 2035 |

**ແຜນວຽກຈຸດສຸມ 6.3 ຄົ້ນຄວ້າທົດລອງ ແລະ ຂໍ້ມູນຂ່າວສານ**

| ໂຄງການ ແລະ ວຽກຈຸດສຸມ ທີ່ສະເໜີ (ໂຄງການທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ |
|---|---|---|---|
| **ໂຄງການ 1:** ສ້າງ ແລະ ປັບປຸງ ຫ້ອງຄົ້ນຄວ້າທົດລອງ ແລະ ເຄື່ອງມືການຄົ້ນຄວ້າ ເພື່ອດຳເນີນການຄົ້ນຄວ້າທົດລອງ. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ຂະແໜງການສຶກສາທິການ ແລະ ກິລາ<br>- ອົງການປົກຄອງຂັ້ນທ້ອງຖິ່ນ | ກາງ, ຮອດປີ 2035 |
| **ໂຄງການ 2:** ພັດທະນາ ແລະ ຄຸ້ມຄອງ ຂໍ້ມູນຂ່າວສານປ່າໄມ້ ໃຫ້ເປັນລະບົບຄົບຊຸດ ແລະ ທັນສະໄໝ. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ອົງການປົກຄອງຂັ້ນທ້ອງຖິ່ນ | ກາງ, ຮອດປີ 2035 |

**ແຜນວຽກຈຸດສຸມ 6.4 ກອງທຶນປົກປັກຮັກສາປ່າໄມ້**

| ໂຄງການ ແລະ ວຽກຈຸດສຸມ ທີ່ສະເໜີ (ໂຄງການທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ |
|---|---|---|---|
| **ໂຄງການ 1 :** ສ້າງຄວາມເຂັ້ມແຂງ ກອງທຶນປົກປັກຮັກສາປ່າໄມ້. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ອົງການປົກຄອງຂັ້ນທ້ອງຖິ່ນ | ສູງ, ຮອດປີ 2035 |
| **ໂຄງການ 2:** ສ້າງ ແລະ ຂະຫຍາຍ ແຫຼ່ງລາຍຮັບຈາກ ການເກັບຄ່າບໍລິການ ດ້ານລະບົບນິເວດປ່າໄມ້. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ອົງການປົກຄອງຂັ້ນທ້ອງຖິ່ນ | ສູງ, ຮອດປີ 2035 |

**ແຜນວຽກຈຸດສຸມ 6. 5 ສົ່ງເສີມ ບົດບາດຍິງ-ຊາຍ ໃນຂະແໜງການປ່າໄມ້**

| ໂຄງການ ແລະ ວຽກຈຸດສຸມ ທີ່ສະເໜີ (ໂຄງການທີ່ກ່ຽວຂ້ອງ) | ອົງການຮັບຜິດຊອບ | ພາກສ່ວນທີ່ກ່ຽວຂ້ອງ | ບຸລິມະສິດ ແລະ ຄາດໝາຍເວລາ |
|---|---|---|---|
| **ໂຄງການ 1:** ເສີມຂະຫຍາຍ ບົດບາດຍິງ-ຊາຍ ໃນການຄຸ້ມຄອງ ປົກປັກຮັກສາ ຊັບພະຍາກອນປ່າໄມ້. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ສູນກາງສະຫະພັນແມ່ຍິງລາວ<br>- ອົງການປົກຄອງຂັ້ນທ້ອງຖິ່ນ | ກາງ, ຮອດປີ 2035 |

| | | | |
|---|---|---|---|
| **ໂຄງການ 2:** ເສີມຂະຫຍາຍສິດ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ຂອງແມ່ຍິງ ບັນດາເຜົ່າ ທີ່ມີສ່ວນຮ່ວມໃນການ ຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ຊັບພະຍາກອນປ່າໄມ້. | ຂະແໜງການກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ | - ສູນກາງແນວລາວສ້າງຊາດ<br>- ສູນກາງສະຫະພັນແມ່ຍິງລາວ<br>- ອົງການປົກຄອງຂັ້ນທ້ອງຖິ່ນ | ກາງ, ຮອດປີ 2035 |

## ແຜນຍຸດທະສາດ VII ການຮ່ວມມື ພາຍໃນ, ພາກພື້ນ ແລະ ສາກົນ

ເພື່ອຈັດຕັ້ງຜັນຂະຫຍາຍ ແນວທາງນະໂຍບາຍ ຂອງພັກ ແລະ ລັດຖະບານ ກ່ຽວກັບການຮ່ວມມື ພາຍໃນ, ພາກພື້ນ ແລະ ສາກົນ ຕາມຫຼັກການ ບໍ່ແຊກແຊງຊຶ່ງກັນ ແລະ ກັນ, ຕ່າງຝ່າຍ ຕ່າງໄດ້ຮັບຜົນປະໂຫຍດ ແລະ ມີຜົນສຳເລັດ ຮ່ວມກັນ ແນໃສ່ຍົກລະດັບການຮ່ວມມື ທັງທາງດ້ານ ການເງິນ ແລະ ເຕັກນິກວິຊາການ, ການສຶກສາຄົ້ນຄວ້າ ທາງດ້ານວິທະຍາສາດ ເຕັກໂນໂລຊີທີ່ທັນສະໄໝ ແລະ ນະວັດຕະກຳ.

## ແຜນຍຸດທະສາດ VIII ງົບປະມານ ແລະ ແຫຼ່ງທຶນ

